World Vision

# ຄູ່ມືການຝຶກອົບຮົມ
# ການນຳທາງແບບສະຫຼາດ



ເລື່ອງລາວຂອງການເດີນທາງ

**ຊຸດບົດເລື່ອງຂອງວັນກາດ:** ການປູເສັ້ນທາງທີ່ສ້າງສັນ ເພື່ອຕ້ານການຄ້າມະນຸດ ແລະ ການເຄື່ອນ ຍ້າຍທີ່ບໍ່ປອດໄພ

ຄູ່ມືການຝຶກອົບຮົມ ການນຳທາງແບບສະຫຼາດ

© ອົງການສຸພະນິມິດສາກົນ ປີ 2014

ISBN 978-0-918261-42-7

ຜູ້ຂຽນ ແລະ ຜູ້ປະກອບສ່ວນ: ຄາມີລາ ຈໍແດນວູດ, ຈອນ ວັນ ຢູນ, ແອມມີ ຄໍລິນສ໌, ທິບພັນນີ ເຕົາ ຈອຍເນີ, ແອມມີລີນ ກາບຣຽນ ແລະ ແມນດີ ຢາມານິດສ໌

ສະຫງວນລິຂະສິດ. ຫ້າມບໍ່ໃຫ້ມີສ່ວນໃດຂອງປຶ້ມເຫລັ້ມນີ້ ຖືກຜະລິດຊ້ຳ ໃນທຸກຮູບແບບ ໂດຍປາດ ສະຈາກການອະນຸມັດຂອງຜູ້ພິມຈຳໜ່າຍ, ຍົກເວັ້ນແຕ່ການຕັດເອົາບາງຂໍ້ຄວາມສັ້ນໆສຳ ລັບການທົບທວນ.

ຜະລິດຈຳໜ່າຍໂດຍ ໂຄງການ ລົບລ້າງການຄ້າມະນຸດ (ETIP) ໃນນາມຕາງໜ້າ ອົງການສຸພະນິມິດ ສາກົນ

ອົງການສຸພະນິມິດ ແມ່ນອົງການຈັດຕັ້ງ ສາດສະໜາຄຣິດສ໌ ດ້ານສິດທິມະນຸດທີ່ອຸທິດຕົນໃນການເຮັດ ວຽກ ກັບ ເດັກນ້ອຍ, ຄອບຄົວ ແລະ ຊຸມຊົນ ເພື່ອ ຜ່ານຜ່າ ຄວາມທຸກຍາກ ແລະ ຄວາມອະຍຸຕິທຳ. ໂດຍໄດ້ຮັບແຮງຈູງໃຈ ຈາກຄວາມສັດທາໃນສາດສະໜາຄຣິດສ໌, ອົງການສຸພະນິມິດ ອຸທິດຕົນ ໃນ ການເຮັດວຽກ ຜູ້ທີ່ຢູ່ໃນພາວະສ່ຽງທີ່ສຸດໃນໂລກ. ອົງການສຸພະນິມິດຮັບໃຊ້ທຸກຄົນ ໂດຍບໍ່ຈຳແນກ ສາດສະໜາ, ເຊື້ອຊາດ, ຊົນເຜົ່າ ຫຼື ເພດ.

ສຳລັບຂໍ້ມູນເພີ່ມເຕີມ ກ່ຽວກັບການພິມດັ່ງກ່າວນີ້ ຫຼື ການພິມຂອງອົງການສຸພະນິມິດສາກົນ ຫຼື ສຳລັບ ຈຳນວນເຫລັ້ມເພີ່ມເຕີມຂອງການພິມຄັ້ງນີ້, ກະລຸນາ ຕິດຕໍ່ wvi_publishing@wvi.org.

ອົງການສຸພະນິມິດສາກົນ ມີຄວາມຍິນດີ ທີ່ຈະໄດ້ຮັບລາຍລະອຽດ ກ່ຽວກັບການນຳໃຊ້ ເອກະສານ ດັ່ງກ່າວນີ້ ໃນການຝຶກອົບຮົມ, ການຄົ້ນຄວ້າ ຫຼື ການອອກແບບ ແຜນງານ, ການຈັດຕັ້ງປະຕິບັດແຜນ ງານ ຫຼື ການປະເມີນຜົນ.

ບໍລິຫານໃນນາມຕາງໜ້າ ໂຄງການ ETIP ໂດຍ ແອມມີ ຄອນລິນສ໌. ບັນນາທິການ ອະວຸໂສ: ຣິດເທີ ອີລຽດທ໌.

ບໍລິຫານການຜະລິດ: ຄາທີ ຄລອບແມນ ໄຟຄ໌. ກວດແກ້: ໂຈແອນ ລາຟລາມເມ. ອ່ານຄືນ: ໂອເດຣ ດອສ໌. ອອກແບບປົກ ແລະ ຈັດໜ້າພາຍໃນ: ອີນິສ໌ ການສື່ສານ. ແຕ້ມຮູບ: ຣິຊີ ແມນດີຢານ, ຈອນ ເຄລກວິນ ໂຄ, ແລະ ເບລບ ຄາລອສ໌-ດາໂປ

ອອກແບບ ແລະ ພິມ ໂດຍ ອີນິສ໌ ການສື່ສານ – www.iniscommunication.com

World Vision

# ຄູ່ມືການຝຶກອົບຮົມ
# ການນຳທາງແບບສະຫຼາດ



ເລື່ອງລາວຂອງການເດີນທາງ



# ຄຳຂອບໃຈ

ຜູ້ຊ່ຽນເຄື່ອງມືການນຳທາງແບບສະຫຼາດ ຜູ້ທຳອິດ, ຄາມີລາ ຈໍແດນວູນ, ໄດ້ສະແດງໃຫ້ເຫັນຄວາມເອົາໃຈໃສ່ ແລະ ຄວາມໝາຍໝັ້ນ ທີ່ໜ້າຊົມເຊີຍ ໃນການພັດທະນາ ເຄື່ອງມືດ້ານທັກສະຊີວິດທີ່ມີຄວາມສ້າງສັນ ແລະ ກວ້າງຂວາງຮອບດ້ານ ທີ່ສອນໄວໜຸ່ມ ກ່ຽວກັບການເຄື່ອນຍ້າຍແບບປອດໄພ ແລະ ຄວາມສ່ຽງຕໍ່ການຄ້າມະນຸດ.

ຄູ່ມືດັ່ງກ່າວນີ້ ຍັງໄດ້ຖືກທົບທວນຄືນ ແລະ ກວດແກ້ໂດຍ ຈອນ ວັນ ຢູນ, ຜູ້ຈັດການໂຄງການລົບລ້າງການຄ້າມະນຸດ (ETIP) ຂອງອົງການສຸພະນິມິດ; ແອມມີ ຄໍລິນສ໌, ຜູ້ຈັດການໂຄງການປ້ອງກັນການຄ້າມະນຸດ ຂອງອົງການສຸພະນິມິດ; ທົບພັນນີ ເຕົາ ຈອຍເນີ, ຊ່ຽວຊານ ດ້ານການມີສ່ວນຮ່ວມຂອງເດັກ ແລະ ການເປັນຢູ່ທີ່ດີ ແລະ ສິດທິເດັກ ຂອງອົງການສຸພະນິມິດ; ແອມມີລີນກາບຣຽນ, ຜູ້ຈັດການຝ່າຍວິຊາການໂຄງການປົກປ້ອງເດັກ; ແລະ ແມນດີ ຢາມານິດສ໌, ສູນກາງຮຽນຮູ້ດ້ານການປົກປ້ອງ ແລະ ການມີສ່ວນຮ່ວມຂອງເດັກ ຂອງອົງການສຸພະນິມິດ.

ຂ້ອຍຂໍຂອບໃຈເປັນພິເສດ ຕໍ່ພະນັກງານ ໂຄງການລົບລ້າງການຄ້າມະນຸດ ສຳລັບການຊ່ວຍເຫຼືອທີ່ຫຼວງຫຼາຍຂອງພວກເຂົາ ໃນການແນະນຳ ເອກະສານຂອງຄູ່ມືດັ່ງກ່າວນີ້ ເຖິງແມ່ນວ່າຈະມີຜົນສະທ້ອນທາງດ້ານວັດທະນະທຳ. ພະນັກງານເຊິ່ງປະກອບດ້ວຍ ຄິມແທ ພິດ ແລະ ໂສພານ ເຈ ຈາກໂຄງການລົບລ້າງການຄ້າມະນຸດ ກຳປູເຈຍ, ເຟີຍ ວາງ ແລະ ຊູ ຫຼຽນ ຊີ ຈາກໂຄງການລົບລ້າງການຄ້າມະນຸດ ຈີນ, ສຸດທະສາ ບຸດສະດີ ແລະ ພຸດທະລັກ ພົມຊາວນາ ຈາກໂຄງການລົບລ້າງການຄ້າມະນຸດ ລາວ, ບານ ອ່ອງ ແລະ ຄິນ ມຽວ ທັນ ຈາກໂຄງການລົບລ້າງການຄ້າມະນຸດ ມຽນມາ, ຈິນນີໄທ ຣັກສາຊາດ ແລະ ນັດພີມົນ ອາພິພົງພິສານ ຈາກໂຄງການລົບລ້າງການຄ້າມະນຸດ ໄທ, ແລະ ເລ ທິ ທັນ ຮວ່າງ ແລະ ວູ ທິ ດຸຍ ຈາກໂຄງການລົບລ້າງການຄ້າມະນຸດ ຫວຽດນາມ. ຮູ້ບຸນຄຸນຢ່າງສູງ ຕໍ່ບັນດາຊ່ຽວຊານ, ນັກຄົ້ນຄວ້າ ແລະ ຜູ້ສະໜັບສະໜູນ ທີ່ສຶກສາ ແລະ ບັນທຶກກ່ຽວກັບການເຄື່ອນຍ້າຍທີ່ບໍ່ປອດໄພ ແລະ ການຄ້າມະນຸດ ຢູ່ໃນອະນຸພາກພື້ນລຸ່ມແມ່ນ້ຳຂອງ. ວຽກງານທີ່ ພວກເຂົາດຳເນີນ ແມ່ນສຳຄັນຫຼາຍໃນການໃຫ້ຂໍ້ມູນ ສຳລັບການຮັບຮູ້ ແລະ ຄວາມເຂົ້າໃຈຂອງພວກເຮົາ ກ່ຽວກັບ ລັກສະນະຂອງຄວາມຮຸນແຮງດັ່ງກ່າວເຫຼົ່ານີ້ ທີ່ມີຕໍ່ກັບສິດທິ ແລະ ການປົກປ້ອງເດັກ.

ຂ້າພະເຈົ້າຮູ້ບຸນຢ່າງສູງຕໍ່ກັບ ອົງການສຸພະນິມິດ ແລະ ໂຄງການລົບລ້າງການຄ້າມະນຸດ ສຳລັບເຮັດໃຫ້ໂຄງການນີ້ເກີດຂຶ້ນໄດ້.

ຂໍຂອບໃຈ,

**ແອມມີ ຄອນລິນສ໌** ຜູ້ຈັດການໂຄງການປ້ອງກັນການຄ້າມະນຸດຂອງພາກພື້ນ



# ຄຳນຳ

ການຄ້າມະນຸດ ແມ່ນອາຊະຍາກຳທີ່ຮ້າຍແຮງ ທີ່ມີຜົນກະທົບຕໍ່ ຜູ້ຊາຍ, ແມ່ຍິງ ແລະ ເດັກນ້ອຍ ໃນທົ່ວໂລກ. ມັນກ່ຽວຂ້ອງກັບການເຮັດໃຫ້ ຫຼື ກັກຂັງຜູ້ໃດຜູ້ໜຶ່ງ ໃຫ້ຢູ່ໃນສະພາບທີ່ຖືກຂູດຮີດ, ໂດຍປົກກະຕິແລ້ວ ແມ່ນເພື່ອຜົນປະໂຫຍດ. ການຂູດຮີດ ສາມາດກ່ຽວຂ້ອງກັບສະພາບຕ່າງໆເຊັ່ນ: ການບັງຄັບດ້ວຍກຳລັງ ຫຼື ການຜູກມັດແຮງງານດ້ວຍໜີ້ສິນ, ແຮງງານເດັກ, ການຂູດຮີດທາງເພດ, ການຮັບໃຊ້ຢູ່ໃນເຮືອນແບບທາດ ຫຼື ຄວາມຂັດແຍງດ້ວຍອາວຸດ.

ອານຸພາກພື້ນລຸ່ມແມ່ນ້ຳຂອງ (GMS) ປະກອບດ້ວຍຫົກປະເທດ ທີ່ເຊື່ອມຕໍ່ກັນດ້ວຍແມ່ນ້ຳຂອງ ເຊັ່ນ: ກຳປູເຈຍ, ຈີນ, ລາວ, ພະມ້າ, ໄທ ແລະ ຫວຽດນາມ. ດ້ວຍເງື່ອນໄຂທີ່ຈຳກັດ ສຳລັບການເຄື່ອນຍ້າຍແບບປອດໄພ ແລະ ຖືກກົດໝາຍໃນອານຸພາກພື້ນລຸ່ມແມ່ນ້ຳຂອງ, ການເຄື່ອນຍ້າຍແບບບໍ່ຖືກກົດໝາຍຈຶ່ງແຜ່ຂະຫຍາຍ, ເຊິ່ງໄດ້ສ້າງພື້ນຖານທີ່ເອື້ອອຳນວຍ ສຳລັບ ການຄ້າມະນຸດ ແລະ ການຂູດຮີດຜູ້ເຄື່ອນຍ້າຍ. ໃນຂະນະທີ່ ມັນຍາກທີ່ຈະຮູ້ໄດ້ຄັກແນ່ກ່ຽວກັບຂະໜາດຄວາມຫຼວງຫຼາຍຂອງການຄ້າມະນຸດ ເນື່ອງຈາກຄຸນລັກສະນະທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ບໍ່ສາມາດກວດພົບໄດ້ຂອງອາດສະຍາກຳດັ່ງກ່າວ, ແຕ່ວ່າ ມັນກໍ່ມີ ຫຼັກຖານຈຳນວນຫຼວງຫຼາຍທີ່ສະແດງໃຫ້ ເຫັນວ່າ ມັນມີຫຼາກຫຼາຍຮູບແບບຂອງການຄ້າມະນຸດ ຢູ່ໃນອານຸພາກພື້ນລຸ່ມແມ່ນ້ຳຂອງ.

ບັນດາລັດຖະບານຂອງປະເທດໃນອານຸພາກພື້ນລຸ່ມແມ່ນ້ຳຂອງ, ໜ່ວຍງານອົງການສະຫະປະຊາຊາດ ແລະ ບັນດາອົງການຈັດຕັ້ງທີ່ບໍ່ສັງກັດລັດ ຫຼາຍອົງການ, ເຊິ່ງລວມທັງອົງການສຸພະນິມິດ, ໄດ້ເຮັດວຽກຢ່າງໜັກເພື່ອຕ້ານການຄ້າມະນຸດ. ແຜນງານລົບລ້າງການຄ້າມະນຸດ (ETIP), ແຜນງານຕ້ານການຄ້າມະນຸດໃນລະດັບພາກພື້ນ ຂອງອົງການສຸພະນິມິດ, ແມ່ນໄດ້ຖືກຈັດຕັ້ງປະຕິບັດ ແຕ່ເດືອນຕຸລາ 2011 ຫາເດືອນກັນຍາ 2016. ໂດຍມີການເຮັດວຽກຢູ່ໃນທົ່ວຫົກປະເທດອະນຸພາກພື້ນລຸ່ມແມ່ນ້ຳຂອງ, ແຜນງານລົບລ້າງການຄ້າມະນຸດ ແມ່ນແຜນງານຕ້ານການຄ້າມະນຸດ ທີ່ ໃຫຍ່ທີ່ສຸດຂອງແຜນງານໃນລັກສະນະດັ່ງກ່າວນີ້, ແລະ ປະກອບດ້ວຍສາມໂຄງການເສົາຫຼັກ ເຊັ່ນ:ປ້ອງກັນ, ປົກປ້ອງ ແລະ ນະໂຍບາຍ. ຍ້ອນວ່າອົງການສຸພະນິມິດ ໄດ້ຖືເອົາເດັກນ້ອຍ ແລະ ໄວໜຸ່ມ ເປັນຕົວແທນທີ່ສຳຄັນຂອງການປ່ຽນແປງ ແລະ ສົ່ງເສີມສິດຂອງເດັກນ້ອຍ ແລະ ໄວໜຸ່ມ ເພື່ອໃຫ້ມີສ່ວນຮ່ວມໂດຍກົງ ກັບການດຳເນີນການ ຕ້ານການຄ້າມະນຸດ, ແຜນງານລົບລ້າງການຄ້າມະນຸດ ຈຶ່ງໄດ້ລົງທຶນໃສ່ກິດຈະກຳຂອງໄວໜຸ່ມ ທີ່ມີຄວາມມ່ວນຊື່ນ ແລະ ມີສ່ວນຮ່ວມ. ອີກທິດທາງໜຶ່ງຂອງ ໂຄງການດ້ານການປ້ອງກັນ ແມ່ນການສ້າງສະໂມສອນໄວໜຸ່ມ ເພື່ອໃຫ້ໄວ້ໜຸ່ມໄດ້ເຕົ້າໂຮມກັນຢ່າງເປັນປົກກະຕິ ເພື່ອຮຽນເອົາຄວາມຮູ້ ແລະ ທັກສະ ເພື່ອປົກປ້ອງຕົນເອງ ຈາກການຄ້າມະນຸດ, ແລະ ເພື່ອຊ່ວຍພວກເຂົາ ກະຈາຍຂໍ້ມູນໄປເຖິງໝູ່ຄູ່ຂອງພວກເຂົາ. ຄູ່ມືນີ້ ໄດ້ຖືກອອກແບບເພື່ອເຮັດໃຫ້ ໄວໜຸ່ມທີ່ຢູ່ໃນພາວະສ່ຽງທີ່ສຸດສາມາດສ້າງທັກສະຊີວິດ ທີ່ສຳຄັນ ເຊິ່ງລວມທັງ ການຄິດແບບວິເຄາະ, ການຕັດສິນໃຈ, ການສື່ສານ ແລະການຕໍ່ລອງແບບມີປະສິດທິຜົນ, ການບໍລິຫານຈັດການຕົນເອງ ແລະ ການວາງແຜນເປົ້າໝາຍຂອງຊີວິດ. ບັນດາທັກສາຊີວິດເຫຼົ່ານີ້ຈະຊ່ວຍໃຫ້ໄວໜຸ່ມມີຄວາມສະດຸງຕົວ ແລະ ຫຼີກລ່ຽງໄພອັນຕະລາຍທີ່ເຊື່ອງຮ້ອນ ເມື່ອພວກເຂົາປະເຊີນໜ້າກັບສະພາບທີ່ສ່ຽງ ເຊັ່ນວ່າເວລາທີ່ຜູ້ຄ້າມະນຸດພະຍາຍາມຫຼອກລວງພວກເຂົາ.

ພວກເຮົາເຊື່ອວ່າ ຄູ່ມືນີ້ ມີພະລັງອຳນາດ ໃນການວາງແນວທາງໃຫ້ແກ່ຊີວິດຂອງໄວໜຸ່ມ ເພື່ອວ່າພວກເຂົາຈະສາມາດປົກປ້ອງຕົນເອງ ແລະ ຊຸມຊົນຂອງພວກເຂົາ ຈາກສະພາບການຄ້າມະນຸດ. ສະໂມສອນໄວໜຸ່ມຖືກອອກແບບເພື່ອປະຕິບັດໜ້າທີ່ສື່ສານຂໍ້ຄວາມການປ້ອງກັນເຫຼົ່ານີ້ ຢ່າງຍືນຍົງ ໃນຫຼາຍປີຕໍ່ໜ້າ ແລະ ນີ້ແມ່ນບາດກ້າວທຳອິດ.

ອາກເນັດສ໌ ຕິງ, ຫົວໜ້າ ພາກພື້ນ - ອາຊີຕາເວັນອອກ

Agnes Ting

Regional Leader – East Asia

# ສາລະບານ




**ຄຳຂອບໃຈ** ... **ii**

**ຄຳນຳ** ... **iii**

**ພາກສະເໜີ** ... **1**

**ການຝຶກອົບຮົມ ແບບເປັນຊັ້ນ** ... **2**

ຕາຕະລາງການຝຶກອົບຮົມ ສຳລັບຄູ່ມືການຝຶກອົບຮົມ ການນຳທາງແບບສະຫຼາດ ... 3

ຕາຕະລາງການຝຶກອົບຮົມ ສຳລັບເຄື່ອງມື ການນຳທາງ ແບບສະຫຼາດ ... 4

**ພາກ A: ການສ້າງຕັ້ງ ສະໂມສອນໄວໜຸ່ມ ການນຳທາງແບບສະຫຼາດ** ... **6**

**ບົດຮຽນທີ 1:** ວິທີການສ້າງຕັ້ງສະໂມສອນໄວໜຸ່ມ ການນຳທາງແບບສະຫຼາດ ... **8**

IS 1a: 40 ຊັບສິນດ້ານການພັດທະນາ ຂອງ ສະຖາບັນ ເຊີດຈ໌ ... 17

IS 1b: ບັນຊີກວດກາ: ກອງປະຊຸມ SNYC ... 19

IS 1c: ບັນຊີກວດກາ: ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກທີ່ດີ ຂອງ SNYC ... 20

IS 1d: ບັນຊີກວດກາ: ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກທີ່ດີ ຂອງ SNYC ... 20

IS 1e: ບັນຊີກວດກາ: ໄວໜຸ່ມທີ່ຢູ່ໃນພາວະສ່ຽງ ... 21

IS 1f: ບັນຊີກວດກາ: ສະຖານທີ່ຂອງ SNYC ... 21

**ບົດຮຽນທີ 2:** ການປະເມີນຄວາມສ່ຽງ ... **22**

IS 2a: ແບບຟອມການຍິນຍອມ ສຳລັບໄວໜຸ່ມທີ່ເປັນຜູ້ເຂົ້າຮ່ວມ ... 27

IS 2b: ແບບຟອມການຍິນຍອມ ສຳລັບ ພໍ່ແມ່ ຫຼື ຜູ້ປົກຄອງ ຂອງໄວໜຸ່ມທີ່ເປັນຜູ້ເຂົ້າຮ່ວມ ... 28

IS 2c: ເຄື່ອງມືການປະເມີນຄວາມສ່ຽງ ... 29

**ພາກ B: ຄຸນລັກສະນະຂອງເຄື່ອງມື ການນຳທາງແບບສະຫຼາດ** ... **32**

ບົດຮຽນທີ 3: ຄຸນລັກສະນະຂອງເຄື່ອງມື ການນຳທາງແບບສະຫຼາດ ... 34

IS 3a: ໄວໜຸ່ມທີ່ບໍ່ສາມາດອ່ານໜັງສືໄດ້ ... 40

**ບົດຮຽນທີ 4:** ການຕິດຕາມ ເຄື່ອງມື ການນຳທາງແບບສະຫຼາດ ... 41

**ພາກ C : ທັກສະການອຳນວຍຄວາມສະດວກ** ... **46**

**ບົດຮຽນທີ 5:** ສາຍພົວພັນກັບໄວໜຸ່ມ ... **48**

IS 5a: ກໍລະນີສຶກສາ, ໃບທີ 1 ... 51

IS 5b: ກໍລະນີສຶກສາ, ໃບທີ 2 ... 51

**ບົດຮຽນທີ 6:** ທັກສະການອຳນວຍຄວາມສະດວກ: ການເຮັດວຽກກັບໄວໜຸ່ມ ... **52**

IS 6a: ທັກສະການນຳສະເໜີ ... 56

**ບົດຮຽນທີ 7:** ວິທີການອຳນວຍຄວາມສະດວກການສົນທະນາ ... **57**

IS 7a: ການສະແດງບົດບາດສົມມຸດການສົນທະນາ ... 61

IS 7b: ການອຳນວຍຄວາມສະດວກການສົນທະນາ ... 61

**ບົດຮຽນທີ 8:** ວິທີເນັ້ນໃສ່ ເນື້ອໃນດ້ານເພດສຳພັນ ຫຼື ບັນຫາທີ່ລຶບກວນ ... 62

**ບົດຮຽນທີ 9:** ການປົກປ້ອງເດັກ ຢູ່ໃນ SNYC ... 66




## ພາກ D : ການຝຶກອົບຮົມໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກ 70

**ບົດຮຽນທີ 10**: ການແນະນຳ SNYC ຕໍ່ກັບໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກ **72**

IS 10a: ເກມອຸ່ນເຄື່ອງ 78

IS 10b: ຄຳຖາມຂອງ ເກມໝາກບານທວນຄວາມຈຳ ຊຸດທີ 1 82

**ບົດຮຽນທີ 11**: ວິທີນຳພາ ເກມອຸ່ນເຄື່ອງ **83**

ເປັນຫຍັງພວກເຮົາຈຶ່ງຫຼິ້ນເກມອຸ່ນເຄື່ອງ? 84

**ບົດຮຽນທີ 12**: ວິທີຊ່ວຍໄວໜຸ່ມຜູ້ທີ່ມີຄວາມຫຍຸ້ງຍາກໃນການອ່ານ **88**

IS 12a: ການອ່ານ 91

IS 12b: ຄຳຕອບຂອງການອ່ານ 91

**ບົດຮຽນທີ 13**: ວິທີຊ່ວຍເຫຼືອ ອຳນວຍຄວາມສະດວກການສົນທະນາກຸ່ມນ້ອຍ **92**

IS 13a: ການສະແດງບົດບາດສົມມຸດການສົນທະນາ 96

IS 13b: ການອຳນວຍຄວາມສະດວກການສົນທະນາ 96

**ບົດຮຽນທີ 14**: ວິທີສ້າງສາຍພົວພັນລະຫວ່າງຜູ້ເຂົ້າຮ່ວມສະໂມສອນ ແລະ SNYC **97**

IS 14a: ຄຳຖາມ ເກມໝາກບານທວນຄວາມຈຳ ຊຸດທີ 2 101

# ພາກສະເໜີ



ທຸກມື້ນີ້ ມີຄົນຈຳນວນຫຼາຍ ທີ່ເຄື່ອນຍ້າຍເພື່ອຊອກວຽກເຮັດວຽກທຳ ຫຼາຍກວ່າ ໄລຍະອື່ນໃດ ໃນອະດີດ ຍ້ອນໂລກາພິວັດ, ບັນດາໄວໜຸ່ມຈາກບ້ານນ້ອຍຕ່າງໆ ອາດຈະຊອກວຽກເຮັດວຽກທຳ ຢູ່ຫ່າງໄກຈາກບ້ານເກີດຂອງພວກເຂົາເປັນຫຼາຍພັນ ກິໂລແມັດ ຢູ່ປະເທດອື່ນ ທີ່ມີພາສາ ແລະ ວັດທະນະທຳທີ່ແຕກຕ່າງ. ການເຄື່ອນຍ້າຍຈຳນວນຫຼວງຫຼາຍດັ່ງກ່າວ ປະຈຸບັນໄດ້ກາຍເປັນພາກສ່ວນໜຶ່ງ ຂອງສັງຄົມ ແລະ ມັນສາມາດນຳມາເຊິ່ງຜົນປະໂຫຍດອັນໃຫຍ່ຫຼວງ. ຜູ້ທີ່ເຄື່ອນຍ້າຍສາມາດໄດ້ເຮັດວຽກທີ່ດີກວ່າວຽກທີ່ຢູ່ໃນບ້ານແລະ ສາມາດສົ່ງເງິນຄືນບ້ານ ເຊິ່ງສາມາດຊ່ວຍຄອບຄົວຂອງພວກເຂົາ. ພວກເຂົາຍັງສາມາດຮຽນຮູ້ໂລກນຳອີກ. ເຖິງແນວໃດກໍ່ຕາມ, ການເຄື່ອນຍ້າຍກໍ່ຍັງນຳເອົາຄວາມສ່ຽງທີ່ໃຫຍ່ຫຼວງມາເຊັ່ນກັນ. ໃນຂະນະທີ່ຈຳນວນຂອງຜູ້ເຄື່ອນຍ້າຍເພີ່ມຂຶ້ນ, ອຸດສະກຳການຄ້າມະນຸດກໍ່ເພີ່ມຂຶ້ນເຊັ່ນດຽວກັນ. ມີລາຍງານວ່າໃນທົ່ວໂລກມີຜູ້ຄົນ 20.9 ລ້ານຄົນ ເປັນຜູ້ຖືກເຄາະຮ້າຍຈາກການບັງຄັບໃຊ້ແຮງງານ, ເຊິ່ງຫຼົງກົນເຂົ້າໄປເຮັດວຽກ ໂດຍການຖືກຕົວະຍົວະ ຫຼື ຫຼອກລວງ ແລະ ບໍ່ສາມາດອອກມາໄດ້. 56% ຂອງບຸກຄົນເຫຼົ່ານີ້ ແມ່ນມາຈາກພາກພື້ນອາຊີ - ປາຊີຟິກ.

ໂດຍຜ່ານ ສະໂມສອນໄວໜຸ່ມ ການນຳທາງແບບສະຫຼາດ (SNYC), ອົງການສຸພະນິມິດ ມີເຈດຕະນາປະກອບສ່ວນຫຼຸດຜ່ອນຄວາມສ່ຽງຕໍ່ການຄ້າມະນຸດ ໂດຍການສົ່ງເສີມໃຫ້ໄວໜຸ່ມ ປົກປ້ອງຕົນເອງ ແລະ ໝູ່ຄູ່ຂອງພວກເຂົາ ສະໂມສອນໄວໜຸ່ມ ການນຳທາງແບບສະຫຼາດ ແມ່ນສະໂມສອນລະດັບບ້ານ, ເຊິ່ງອອກແບບ ສຳລັບໄວໜຸ່ມອາຍຸ 12–17 ປີ, ເຊິ່ງຈະປະຊຸມກັນ ປະມານ 75 ນາທີ ທຸກໆອາທິດ ຫຼື ທຸກໆ ສອງອາທິດ. ສະໂມສອນໄວໜຸ່ມ ການນຳທາງແບບສະຫຼາດ ແມ່ນອຳນວຍຄວາມສະດວກໂດຍ ຜູ້ໃຫຍ່ ແລະໄວໜຸ່ມ ແລະ ປະຕິບັດຕາມ ຄູ່ມືການນຳທາງແບບສະຫຼາດ. ຄູ່ມືດັ່ງກ່າວນີ້ ຊ່ວຍເຫຼືອ ໄວໜຸ່ມໃນການສ້າງຄວາມຮູ້ ແລະ ທັກສະ. ໄວໜຸ່ມພັດທະນາຄວາມຮູ້ ທີ່ກ່ຽວຂ້ອງກັບຄວາມອັນຕະລາຍຂອງການຄ້າມະນຸດແລະ ກົດໝາຍທີ່ກ່ຽວຂ້ອງກັບ ການຄ້າມະນຸດ ແລະ ຮຽນຮູ້ບາດກ້າວທີ່ລະອຽດ ທີ່ພວກເຂົາສາມາດປະຕິບັດເພື່ອປົກປ້ອງຕົນເອງ ເຊັ່ນ: ການສ້າງເຄືອຂ່າຍການຊ່ວຍເຫຼືອ ຫຼື ການຮຽນຮູ້ກ່ຽວກັບ ນຳເບີໂທລະສັບທີ່ໃຫ້ການຊ່ວຍເຫຼືອ. ໃນເວລາດຽວກັນ, ໄວໜຸ່ມກໍ່ຮຽນຮູ້ກ່ຽວກັບທັກສະຊີວິດ ເພື່ອຊ່ວຍພວກເຂົາສ້າງຄວາມສາມາດໃນການຟື້ນຟູສະພາບ ດ້ວຍຕົນເອງ. ບັນດາທັກສະເຫຼົ່ານີ້ ສຸມໃສ່ການສ້າງ ທັງ ຄວາມເຂັ້ມແຂງພາຍໃນ ຂອງໄວໜຸ່ມ ແລະ ລະບົບການຊ່ວຍເຫຼືອຈາກທາງນອກ. ສະໂມສອນໄວໜຸ່ມ ການນຳທາງແບບສະຫຼາດ ໄດ້ເສີມຂະຫຍາຍຈາກຜົນສຳເລັດ ທີ່ໄດ້ສະແດງອອກ ຈາກແມ່ແບບ ສະໂມສອນເພື່ອສັນຕິພາບ ຂອງອົງການສຸພະນິມິດ. ໃນການນຳໃຊ້ຄູ່ມື ໃດໜຶ່ງ ທີ່ເຮັດວຽກຢ່າງລົງເລິກກັບໄວໜຸ່ມ ເພື່ອສ້າງ ທັກສະ ແລະ ຄວາມຮູ້ ໂດຍຜ່ານຂອບເຂດໄລຍະເວລາ ໄວໜຸ່ມຈະຮຽນຮູ້ການສ້າງອະນາຄົດທີ່ປອດໄພສຳລັບພວກເຂົາເອງ.

ນີ້ແມ່ນ ຄູ່ມືການຝຶກອົບຮົມ ການນຳທາງແບບສະຫຼາດ ເຊິ່ງປະກອບດ້ວຍເຄື່ອງມືການນຳທາງແບບສະຫຼາດ ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກຂອງ ສະໂມສອນໄວໜຸ່ມ ການນຳທາງແບບສະຫຼາດ ແມ່ນໄດ້ຮັບການຝຶກອົບຮົມກ່ຽວກັບຄູ່ມືນີ້ ກ່ອນທີ່ພວກເຂົາຈະກັບຄືນຊຸມຊົນຂອງພວກເຂົາເພື່ອອຳນວຍຄວາມສະດວກຢູ່ໃນສະໂມສອນ. ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງສະໂມສອນໄວໜຸ່ມ ການນຳທາງແບບສະຫຼາດ ແມ່ນໄດ້ຮັບການຝຶກອົບຮົມກ່ຽວກັບພາກ C ຂອງຄູ່ມືສະບັບນີ້ (ໄວໜຸ່ມທີ່ເຂົ້າຮ່ວມ ສະໂມສອນໄວໜຸ່ມ ການນຳທາງແບບສະຫຼາດ ບໍ່ໄດ້ເຂົ້າຮ່ວມການຝຶກອົບຮົມດັ່ງກ່າວນີ້). ຄູ່ມືສະບັບດັ່ງກ່າວນີ້ອະທິບາຍວິທີການໃຊ້ເຄື່ອງມື ແລະ ວິທີຊ່ວຍພະນັກງານອົງການສຸພະນິມິດໃນການຝຶກອົບຮົມໃຫ້ ຜູ້ອຳນວຍຄວາມສະດວກ ເພື່ອສ້າງທັກສະດ້ານການສອນ-ການຝຶກອົບຮົມ. ເມື່ອຜູ້ອຳນວຍຄວາມສະດວກກັບຄືນ ສະໂມສອນໄວໜຸ່ມ ການນຳທາງແບບສະຫຼາດຂອງພວກເຂົາ, ພວກເຂົາຈະນຳໃຊ້ເຄື່ອງມື ເຊິ່ງຈະນຳພາພວກເຂົາຜ່ານແຕ່ລະບາດກ້າວ ຂອງການຈັດຕັ້ງປະຕິບັດ.

1 International Labour Organisation,'ILO Global Estimate of Forced Labour' (June 2012), http://www.ilo.org/wcmsp5/groups/public/---ed_norm/--¬ declaration/documents/publication/wcms_182004.pdf.

2 Although youth aged 12-17 are technically 'children' according to the international United Nations definition, they are referred to as 'youth' in this Manual because they would prefer to be called youth rather than children.

3 The framework for understanding internal and external strengths draws on the research conducted by Search Institute. See '40 Developmental Assets', available at http://www.search-institute.org.

4 L. Figueroa, B. Forbes and K. Mikailidi, The Peace Road Curriculum User's Manual (World Vision International: Seattle, 2011).



# ການຝຶກອົບຮົມ ແບບເປັນຊັ້ນ



## ຕາຕະລາງການຝຶກອົບຮົມ ສຳລັບຄູ່ມືການຝຶກອົບຮົມການນຳທາງແບບສະຫຼາດ

ພະນັກງານ ອົງການສຸພະນິມິດ ຝຶກອົບຮົມໃຫ້ ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກ ຂອງສະໂມສອນໄວໜຸ່ມ ການນຳທາງແບບສະຫຼາດ ເພື່ອນຳພາ ແລະ ສອນເຄື່ອງມືການນຳທາງແບບສະຫຼາດຢ່າງມີປະສິດທິຜົນ ໂດຍການນຳໃຊ້ ຄູ່ມືການຝຶກອົບຮົມ ການນຳທາງແບບສະຫຼາດ. ຖ້າເປັນໄປໄດ້, ພະນັກງານອົງການສຸພະນິມິດ ຄວນຝຶກອົບຮົມ ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກ ໃນການນຳໃຊ້ຄູ່ມືດັ່ງກ່າວນີ້ ສອງມື້. ເຖິງແນວໃດກໍ່ຕາມ, ຖ້າເວລາຈຳກັດ, ສາມາດຈັດການຝຶກອົບຮົມໃນມື້ດຽວ, ໂດຍປະຕິບັດຕາມຕາຕະລາງລຸ່ມນີ້. ພະນັກງານອົງການສຸພະນິມິດ ແລະ ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກ ຂອງສະໂມສອນໄວໜຸ່ມ ການນຳທາງແບບສະຫຼາດ ຄວນຝຶກອົບຮົມໃຫ້ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກ ຂອງສະໂມສອນໄວໜຸ່ມ ການນຳທາງແບບສະຫຼາດພາຍໃນມື້ໜຶ່ງເຊັ່ນກັນ.

| ຕົວຢ່າງ ຕາຕະລາງການຝຶກອົບຮົມໜຶ່ງມື້ ສຳລັບ ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກຂອງ **SNYC** | |
|---|---|
| 8.30–10.00 | ບົດຮຽນທີ 1: ວິທີສ້າງຕັ້ງ SNYC |
| 10.00–11.00 | ບົດຮຽນທີ 2: ການປະເມີນຄວາມສ່ຽງ |
| 11.00–11.15 | ພັກຜ່ອນ |
| 11.15–12.15 | ບົດຮຽນທີ 3: ຄຸນລັກສະນະ ຂອງເຄື່ອງມື ການນຳທາງແບບສະຫຼາດ |
| 12.15–1.15 | ພັກທ່ຽງ |
| 1.15–1.45 | ບົດຮຽນທີ 4: ການຕິດຕາມ ເຄື່ອງມືການນຳທາງແບບສະຫຼາດ |
| 1.45–2.15 | ບົດຮຽນທີ 5: ການສ້າງສາຍສຳພັນ ກັບໄວໜຸ່ມ |
| 2.15–3.15 | ບົດຮຽນທີ6: ທັກສະການອຳນວຍຄວາມສະດວກ: ການເຮັດວຽກກັບໄວໜຸ່ມ |
| 3.15–3.30 | ພັກຜ່ອນ |
| 3.30–4.30 | ບົດຮຽນທີ 7: ວິທີອຳນວຍຄວາມສະດວກການສົນທະນາ |
| 4.30–5.30 | ບົດຮຽນທີ 8: ວິທີເນັ້ນໃສ່ ເນື້ອໃນດ້ານເພດສຳພັນ ຫຼື ບັນຫາທີ່ລະອຽດອ່ອນ |

| ຕົວຢ່າງ ຕາຕະລາງການຝຶກອົບຮົມໜຶ່ງມື້ ສຳລັບ ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ **SNYC** | |
|---|---|
| 8.30–10.00 | ບົດຮຽນທີ 10: ການແນະນຳ SNYC ຕໍ່ກັບ ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກ |
| 10.00–11.00 | ບົດຮຽນທີ 11: ວິທີນຳພາ ເກມອຸ່ນເຄື່ອງ |
| 11.00–11.15 | ພັກຜ່ອນ |
| 11.15–12.00 | ບົດຮຽນທີ 12: ວິທີຊ່ວຍໄວໜຸ່ມຜູ້ທີ່ມີຄວາມຫຍຸ້ງຍາກໃນການອ່ານ |
| 12.00–1.00 | ພັກທ່ຽງ |
| 1.00–2.00 | ບົດຮຽນທີ 13: ວິທີຊ່ວຍເຫຼືອ ອຳນວຍຄວາມສະດວກ ການສົນທະນາກຸ່ມນ້ອຍ |
| 2.00–3.00 | ບົດຮຽນທີ 14: ວິທີສ້າງສາຍພົວພັນ ລະຫວ່າງຜູ້ເຂົ້າຮ່ວມສະໂມສອນ SNYC |

# ຕາຕະລາງການຝຶກອົບຮົມ ສຳລັບເຄື່ອງມື ການນຳທາງແບບສະຫຼາດ

ຫຼັງຈາກຝຶກອົບຮົມໃຫ້ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກ ຂອງສະໂມສອນໄວໜຸ່ມ ໃນການນຳໃຊ້ ຄູ່ມືການຝຶກອົບຮົມ ການນຳທາງແບບສະຫຼາດ, ພະນັກງານອົງການສຸພະນິມິດ ຈະຝຶກອົບຮົມໃຫ້ ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກ ຂອງສະໂມສອນໄວໜຸ່ມ ໃນການນຳພາ ແລະ ການສອນກ່ຽວກັບ ເຄື່ອງມືການນຳທາງແບບສະຫຼາດ. ຖ້າຫາກເປັນໄປໄດ້, ພະນັກງານອົງການສຸພະນິມິດ ຄວນຝຶກອົບຮົມໃຫ້ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກ ໃນໄລຍະເວລາ ສາມມື້. ໄວໜຸ່ມ ທີ່ເປັນຜູ້ອຳນວຍຄວາມສະດວກ ຂອງສະໂມສອນໄວໜຸ່ມ ອາດຈະບໍ່ເຂົ້າຮ່ວມການຝຶກຮົມດັ່ງກ່າວນີ້.

## ຕົວຢ່າງຕາຕະລາງການຝຶກອົບຮົມ

## ມື້ທີ 1

### ຕອນເຊົ້າ

- ຄຳສັບ
- ບົດທີ 1: ການສະເໜີກ່ຽວກັບສະໂມສອນຂອງພວກເຮົາ
- ບົດທີ 2: ການຄິດກ່ຽວກັບຊີວິດຂອງພວກເຮົາ
- ບົດທີ 3: ການຄ້າມະນຸດແມ່ນຫຍັງ? ການເຄື່ອນຍ້າຍແຮງງານແມ່ນຫຍັງ?
- ບົດທີ 4: ການຄ້າມະນຸດສາມາດເກີດຂຶ້ນໄດ້ຢູ່ທຸກສະຖານທີ່
- ບົດທີ 5: ການຈຳແນກທາງເພດ ເຮັດໃຫ້ແມ່ຍິງ ແລະ ເດັກຍິງ ມີຄວາມສ່ຽງຕໍ່ການຄ້າມະນຸດ
- ບົດທີ 6: ຜົນສະທ້ອນຂອງ ຢາເສບຕິດ ແລະ ເຫຼົ້າ ຕໍ່ກັບການຄ້າມະນຸດ

### ຕອນບ່າຍ

- ບົດທີ 7: ການຄ້າມະນຸດ ເພື່ອການໃຊ້ແຮງງານເດັກ ແລະ ການຂູດຮີດແຮງງານ
- ບົດທີ 8: ການຄ້າມະນຸດ ເພື່ອການຂູດຮີດທາງເພດ
- ບົດທີ 9: ຢ່າຖືກຫຼອກ!
- ບົດທີ 10: ສົນທິສັນຍາ ວ່າດ້ວຍສິດທິເດັກ

## ມື້ທີ 2

### ຕອນເຊົ້າ

- ບົດທີ 11: ກົດໝາຍການຄ້າມະນຸດ ແລະ ສິດທິ
- ບົດທີ 12: ການເຄື່ອນຍ້າຍທີ່ໄດ້ບັນທຶກ
- ບົດທີ 13: ການສະແດງຄຳເຫັນ (ທັກສະການສື່ສານ)
- ບົດທີ 14: ການຟັງທີ່ດີ (ທັກສະການສື່ສານ)
- ບົດທີ 15: ຄວາມຮູ້ສຶກ ແລະ ຄວາມຄິດ (ທັກສະການຈັດການກັບຄວາມຮູ້ສຶກ)
- ບົດທີ 16: ການຈັດການກັບຄວາມຮູ້ສຶກຂອງພວກເຮົາ (ທັກສະການຈັດການກັບຄວາມຮູ້ສຶກ)

**ຕອນບ່າຍ**

- ບົດທີ 17: ແມ່ນຜູ້ຄ້າມະນຸດ ຫຼື ບໍ່ແມ່ນ?
- ບົດທີ 18: ຄວາມປອດໄພດ້ານອິນເຕີເນັດ
- ບົດທີ 19: ທັກສະການຕັດສິນໃຈ
- ບົດທີ 20: ຮຽນຮູ້ຫຼາຍຂຶ້ນ
- ບົດທີ 21: ຖາມຄຳຖາມ

## ມື້ທີ 3

**ຕອນເຊົ້າ**

- ບົດທີ 22: ການນຳໃຊ້ ລາຍການກວດກາ ການເຄື່ອນຍ້າຍແບບປອດໄພ
- ບົດທີ 23: ການດູແລຄວາມປອດໄພໃນການເດີນທາງ
- ບົດທີ 24: ເມື່ອເດີນທາງເຖິງ
- ບົດທີ 25: ຈະເຮັດແນວໃດ ຖ້າເຈົ້າຖືກຄ້າມະນຸດ
- ບົດທີ 26: ການສະທ້ອນຄືນ, ເສັ້ນທາງ ການເຄື່ອນຍ້າຍແບບປອດໄພ

**ຕອນບ່າຍ**

- ບົດທີ 27: ແບ່ງປັນແລກປ່ຽນສິ່ງທີ່ເຈົ້າຮູ້ ກັບຜູ້ອື່ນ
- ບົດທີ 28: ການດຳເນີນການຂອງຊຸມຊົນ – ບາດກ້າວທີ 1
- ບົດທີ 29: ການດຳເນີນການຂອງຊຸມຊົນ – ບາດກ້າວທີ 2
- ບົດທີ 30: ການດຳເນີນການຂອງຊຸມຊົນ – ບາດກ້າວທີ 3
- ບົດທີ 31: ການດຳເນີນການຂອງຊຸມຊົນ – ບາດກ້າວທີ 4

# ພາກ A

# ການສ້າງຕັ້ງ ສະໂມສອນໄວໜຸ່ມ ການນຳທາງແບບ ສະຫຼາດ



# ບົດຮຽນທີ 1: ວິທີການສ້າງຕັ້ງສະໂມສອນໄວໜຸ່ມ ການນຳທາງແບບສະຫຼາດ

## ຈຸດປະສົງ

ບັນດາຜູ້ເຂົ້າຮ່ວມ ຈະໄດ້ຮຽນຮູ້ ຂັ້ນຕອນຂອງການສ້າງຕັ້ງ ສະໂມສອນໄວໜຸ່ມການນຳທາງແບບສະຫຼາດ (SNYC)

## ເວລາ

90 ນາທີ

## ອຸປະກອນ

- ສຳເນົາ ເອກະສານເຄື່ອງມື ສຳລັບຜູ້ເຂົ້າຮ່ວມແຕ່ລະຄົນ
- ປຶ້ມບັນທຶກ ແລະ ບິກສຳລັບ ຜູ້ເຂົ້າຮ່ວມແຕ່ລະຄົນ
- ກັບສຳລັບໃສ່ປຶ້ມບັນທຶກ
- ເຈັ້ຍແຜ່ນໃຫຍ່ ແລະ ບິກເຜີດ
- ສຳເນົາເອກະສານລຸ່ມນີ້ ສຳລັບຜູ້ເຂົ້າຮ່ວມແຕ່ລະຄົນ:
  - » IS 1a: 40 ຊັບສິນດ້ານການພັດທະນາ ຂອງ ສະຖາບັນ ເຊີດຈ໌
  - » IS 1b: ບັນຊີກວດກາ: ກອງປະຊຸມ SNYC
  - » IS 1c: ບັນຊີກວດກາ: ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກທີ່ດີ
  - » IS 1d: ບັນຊີກວດກາ: ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກທີ່ດີ
  - » IS 1e: ບັນຊີກວດກາ: ໄວໜຸ່ມທີ່ຢູ່ໃນພາວະສ່ຽງ
  - » IS 1f: ບັນຊີກວດກາ: ສະຖານທີ່ຂອງ SNYC

## ບັນດາຜູ້ເຂົ້າຮ່ວມ

ຜູ້ໃຫຍ່ ທີ່ເປັນຜູ້ອຳນວຍຄວາມສະດວກ 2–3 ຄົນ ຈາກແຕ່ລະ SNYC

## ຜູ້ອຳນວຍຄວາມສະດວກ

ພະນັກງານພາຍໃນປະເທດ ຂອງອົງການສຸພະນິມິດ ທີ່ເຄີຍໄດ້ເຂົ້າຮ່ວມ ການຝຶກອົບຮົມເຄື່ອງມືການນຳທາງທີ່ສະຫຼາດ ຂອງ ແຜນງານລົບລ້າງການຄ້າມະນຸດ (ETIP)

## ຄຳນຳ

ອ່ານຄຳນຳ ຂອງຄູ່ມືນີ້ (ໜ້າ 1) ດັງໆ ໃຫ້ກຸ່ມຟັງ.

ຫຼັງຈາກນັ້ນອະທິບາຍວ່າ SNYC ແມ່ນອັກສອນຫຍໍ້ ສຳລັບ ສະໂມສອນໄວໜຸ່ມ ການນຳທາງແບບສະຫຼາດ. ເຄື່ອງມື ການນຳທາງແບບສະຫຼາດ ແມ່ນປື້ມສຳລັບ ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກທຸກຄົນ ທີ່ອະທິບາຍກ່ຽວກັບວິທີ ດຳເນີນບັນດາບົດຮຽນຕ່າງໆ ຂອງ SNYC.

## ຄຳແນະນຳ: ສະໂມສອນໄວໜຸ່ມ ການນຳທາງແບບສະຫຼາດ ແມ່ນຫຍັງ?

### SNYC

ແມ່ນອັກສອນຫຍໍ້ ສຳລັບສະໂມສອນໄວໜຸ່ມ ການນຳທາງແບບສະຫຼາດ

### ຜູ້ອຳນວຍຄວາມສະດວກ

ແມ່ນບຸກຄົນທີ່ຊ່ວຍ ນຳພາກິດຈະກຳ, ໃນກໍລະນີນີ້ ແມ່ນກິດຈະກຳຂອງ SNYC

### ບົດຮຽນ

ບົດຮຽນ ແມ່ນແຜນການຮຽນ ທີ່ຕ້ອງປະຕິບັດຕາມໃນໄລຍະເວລາ 75 ນາທີ ໃນການປະຊຸມຂອງສະໂມສອນ. ມີທັງໝົດ 31 ບົດຮຽນ ສຳລັບ SNYC, ເຊິ່ງບັນຈຸຢູ່ໃນ ເຄື່ອງມືຂອງ SYNC. ເກືອບທຸກໆສະໂມສອນຈະມີປະຊຸມທຸກໆ ສອງອາທິດ ແລະ ສຳເລັດໜຶ່ງບົດຮຽນໃນແຕ່ລະ ການປະຊຸມ.

### IS

IS ແມ່ນອັກສອນຫຍໍ້ ສຳລັບ ແຜ່ນເຈ້ຍຂໍ້ມູນ. ສິ່ງດັ່ງກ່າວນີ້ ແມ່ນພາກສ່ວນໜຶ່ງຂອງເຄື່ອງມື. ໂດຍປົກກະຕິແລ້ວຈະມີແຜນເຈ້ຍທີ່ມີຂໍ້ມູນ ກ່ຽວກັບບົດຮຽນ ຫຼື ກິດຈະກຳ ທີ່ຜູ້ເຂົ້າຮ່ວມຈະຕ້ອງເຮັດໃຫ້ສຳເລັດ ເຊັ່ນ ຄຳແນະນຳສຳລັບການສະ ແດງບົດບາດສົມມຸດ. ບາງແຜ່ນເຈັ້ຍກໍ່ບັນຈຸຮູບພາບ ທີ່ຜູ້ອຳນວຍຄວາມສະດວກຂອງ SNYC ຈະຕ້ອງໃຊ້ໃນລະຫວ່າງກິດຈະກຳ ແລະ ບາງແຜ່ນເຈັ້ຍກໍ່ບັນຈຸ ຂໍ້ມູນທີ່ຜູ້ອຳນວຍຄວາມສະດວກຈະຕ້ອງອ່ານອອກສຽງດັງໆ. ຜູ້ອຳນວຍຄວາມສະ ດວກຂອງ SNYC ຈະຖືກແນະນຳໃຫ້ຖ່າຍສຳເນົາແຜ່ນເຈັ້ຍຂໍ້ມູນ ສຳລັບນຳໃຊ້ ໃນລະຫວ່າງບົດຮຽນ ຢູ່ສະເໝີ.

### ປື້ມນ້ອຍ ການນຳທາງແບບສະຫຼາດ

ເດັກນ້ອຍຢູ່ໃນ SNYC ຈະໄດ້ຮັບປື້ມນ້ອຍການນຳທາງແບບສະຫຼາດ ທີ່ສະຫຼຸບສັງລວມຂໍ້ມູນທີ່ສຳຄັນທີ່ສຸດຂອງ ເຄື່ອງ ມື. ໃນລະຫວ່າງການຝຶກອົບຮົມ, ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກຄວນຈະເອົາໃສ່ປື້ມນ້ອຍຂອງຜູ້ເຂົ້າຮ່ວມ ແລະ ແຈກຢາຍເມື່ອຈຳເປັນ ເພື່ອວ່າໄວໜຸ່ມທີ່ເຂົ້າຮ່ວມຈະບໍ່ລືມ. ໃນຕອນສຸດທ້າຍຂອງການຝຶກອົບຮົມ, ຜູ້ເຂົ້າຮ່ວມຈະເກັບຮັກສາປື້ມນ້ອຍໄວ້.

## ກິດຈະກຳ: ການສະທ້ອນຄືນ ກ່ຽວກັບຊັບສິນພາຍໃນ ແລະ ພາຍນອກ

ຢາຍປຶ້ມບັນທຶກໜຶ່ງຫົວ ແລະ ບິກໜຶ່ງກ້ານໃຫ້ຜູ້ເຂົ້າຮ່ວມແຕ່ລະຄົນ. ອະທິບາຍວ່າ ປຶ້ມບັນທຶກ ແມ່ນປຶ້ມທີ່ພວກເຈົ້າສາມາດຂຽນ ຫຼື ແຕ້ມກ່ຽວກັບຊີວິດຂອງພວກເຈົ້າ. ມັນຈະໄດ້ຖືກນຳໃຊ້ກັບໄວໜຸ່ມ ໃນຕະຫຼອດເຄື່ອງມືດັ່ງກ່າວນີ້. ອະທິບາຍວ່າ ທິດທາງທີ່ສຳຄັນຂອງປຶ້ມບັນທຶກດັ່ງກ່າວ ແມ່ນບໍ່ມີໃຜ ນອກຈາກຜູ້ຂຽນ ສາມາດອ່ານມັນ ແລະ ປຶ້ມບັນທຶກ ແມ່ນຖືກເກັບຮັກສາໄວ້ ຢູ່ໃນກັບ ເມື່ອບໍ່ໄດ້ຖືກນຳໃຊ້.

ບອກບັນດາຜູ້ເຂົ້າຮ່ວມໃຫ້ໃຊ້ເວລາ 10 ນາທີ ໃນການຂຽນ ປຶ້ມບັນທຶກຂອງພວກເຂົາ. ບອກຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ຄິດຄືນກ່ຽວກັບ ບັນດາໄວໜຸ່ມຂອງພວກເຂົາ. ບອກພວກເຂົາໃຫ້ພິຈາລະນາໄຕ່ຕອງ ວ່າພວກເຂົາໄດ້ກາຍມາເປັນບຸກຄົນໃນປະຈຸບັນ ໄດ້ແນວໃດ. ບອກພວກເຂົາໃຫ້ຄິດກ່ຽວກັບຊັບສິນພາຍໃນ. ຊັບສິນພາຍ ໃນ ຄວາມເຂັ້ມແຂງຂອງບຸກຄົນ. ບັນດາຕົວຢ່າງດັ່ງກ່າວປະກອບດ້ວຍເອກະລັກດ້ານບວກ, ຄວາມໝາຍໝັ້ນໃນການຮຽນຮູ້, ຄ່ານິຍົມດ້ານບວກ ແລະ ທັກສະດ້ານສັງຄົມ. ບອກໃຫ້ບັນດາຜູ້ເຂົ້າຮ່ວມໃຫ້ຄິດກ່ຽວກັບວ່າ ພວກເຂົາຈະຮຽນຮູ້ສິ່ງເຫຼົ່ານີ້ແນວໃດ.

ຫຼັງຈາກນັ້ນ, ບອກພວກເຂົາໃຫ້ຄິດກ່ຽວກັບ ຊັບສິນ ພາຍນອກ. ຊັບສິນພາຍນອກ ແມ່ນບັນດາລັກສະນະຂອງຊຸມຊົນ ທີ່ຊ່ວຍເຫຼືອສະໜັບສະໜູນບຸກຄົນໃດໜຶ່ງ. ບັນດາຕົວຢ່າງດັ່ງກ່າວ ປະກອບດ້ວຍ ຄອບຄົວ, ໝູ່ຄູ່ ແລະ ຊຸມຊົນ, ໂຮງຮຽນ ແລະ ອົງການຈັດຕັ້ງ ດ້ານສາດສະໜາ ຫຼື ໄວໜຸ່ມ. ບັນດາຜູ້ເຂົ້າຮ່ວມ ມີບັນດາຊັບສິນ ພາຍນອກເຫຼົ່ານີ້ບໍ່ ໃນເວລາທີ່ພວກເຂົາຈະເລີນເຕີບໂຕ? ບັນດາກຸ່ມພາຍນອກດັ່ງກ່າວໄດ້ຊ່ວຍເຫຼືອ ຫຼື ກີດຂວາງພວກເຂົາບໍ່? ແນວໃດ?

ເມື່ອພວກເຂົາສຳເລັດ, ອະນຸຍາດໃຫ້ພວກເຂົາອັດປຶ້ມບັນທຶກຂອງພວກເຂົາ. ບໍ່ບອກໃຫ້ພວກເຂົາແບ່ງປັນແລກປ່ຽນສິ່ງທີ່ພວກເຂົາໄດ້ຂຽນ.

ອະທິບາຍວ່າ ສະຖາບັນ ເຊີດຈ໌ ແມ່ນອົງການຈະຕັ້ງໜຶ່ງ ທີ່ໄດ້ເຮັດການສຳຫຼວດຄົ້ນຄວ້າມາໄດ້ຫຼາຍໆປີກ່ຽວກັບປັດໃຈ ທີ່ຊ່ວຍໃຫ້ໄວໜຸ່ມ ຈະເລີນເຕີບໂຕເປັນຜູ້ໃຫຍ່ ທີ່ດີ, ມີຈິດໃຈໂອບເອື້ອອາລີ ແລະ ມີຄວາມຮັບຜິດຊອບ. ສະຖາບັນໄດ້ ຄົ້ນພົບ 40 ຊັບສິນດ້ານການພັດທະນາ. ໃຫ້ແຈກຢາຍ ສຳເນົາ ແຜ່ນເຈ້ຍຊັບສິນ. ຊັບສິນດ້ານການພັດທະນາຂອງ ສະຖາບັນ ເຊີດຈ໌ ໄດ້ຖືກແບ່ງອອກເປັນ ຊັບສິນພາຍນອກ ແລະ ຊັບສິນພາຍໃນ. ເຄື່ອງມືດັ່ງກ່າວໄດ້ຖືກອອກແບບ ເພື່ອຊ່ວຍໄວໜຸ່ມສ້າງ ທັງ ຊັບສິນພາຍໃນ ແລະ ພາຍນອກເພື່ອຊ່ວຍພວກເຂົາຫຼຸດຜ່ອນຄວາມສ່ຽງ ຕໍ່ການຖືກຄ້າມະນຸດ. ໃນຂະນະທີ່ ສົນທະນາກ່ຽວກັບຂັ້ນຕອນການສ້າງຕັ້ງ SNYC ແລະ ແນະນຳເຄື່ອງມືໃຫ້ກັບບັນດາຜູ້ເຂົ້າຮ່ວມ, ໃຫ້ພະຍາຍາມລະບຸວິທີ ທີ່ສະໂມສອນ ແລະ ເຄື່ອງມື ຈະສ້າງ ຊັບສິນພາຍໃນ ແລະ ພາຍນອກ ສຳລັບໄວໜຸ່ມ ໃນໄລຍະເວລາຂອງການຝຶກອົບຮົມ.

## ວິທີສ້າງຕັ້ງ SNYC

ໃຫ້ອະທິບາຍວ່າ ລາຍການດັ່ງຕໍ່ໄປນີ້ ແມ່ນອະທິບາຍກ່ຽວກັບບາດກ້າວ ການສ້າງຕັ້ງ SNYC.
ແຕ່ລະບາດກ້າວ ແມ່ນໄດ້ຖືກອະທິບາຍລະອຽດຢູ່ດ້ານລຸ່ມນີ້.

- ຮັບເອົາ ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC (ຄວາມຮັບຜິດຊອບຂອງພະນັກງານອົງການສຸພະ ນິມິດ).
- ສ້າງແຜນຕອບໂຕ້ ທີ່ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ຕ້ອງໄດ້ປະຕິບັດຕາມ ຖ້າໄວໜຸ່ມ ລາຍງານກ່ຽວກັບ ການທາລຸນດ້ານຮ່າງກາຍ ຫຼື ທາງເພດ (ຄວາມຮັບຜິດຊອບຂອງພະນັກງານອົງການສຸພະ ນິມິດ).
- ຮັບເອົາ ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ອີງຕາມເງື່ອນໄຂມາດຖານຢູ່ໃນລາຍການກວດກາ (ຄວາມຮັບຜິດຊອບຂອງພະນັກງານອົງການສຸພະນິມິດ ແລະ ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC).

- ຝຶກອົບຮົມໃຫ້ ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC (ຄວາມຮັບຜິດຊອບຂອງພະນັກງານອົງການສຸພະນິມິດ ແລະ ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC).
- ຮັບເອົາໄວໜຸ່ມທີ່ເປັນຜູ້ເຂົ້າຮ່ວມ SNYC ອີງຕາມເງື່ອນໄຂມາດຖານ ຢູ່ໃນລາຍການກວດກາ (ຄວາມ ຮັບຜິດຊອບຂອງພະນັກງານອົງການສຸພະນິມິດ ແລະ ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC).
- ຈັດກອງປະຊຸມ ຢູ່ໃນ SNYC ຂອງຊຸມຊົນ ກັບ ພໍ່ແມ່/ຜູ້ປົກຄອງ,ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC (ຄວາມຮັບຜິດຊອບຂອງພະນັກງານອົງການສຸພະນິມິດ ແລະ ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC). ຢູ່ໃນກອງປະຊຸມ:
  - » ກຳນົດຂັ້ນສຸດທ້າຍກ່ຽວກັບຫົວຂໍ້ຂອງ ເຄື່ອງມື
  - » ອະທິບາຍກ່ຽວກັບ ຕາຕະລາງຂອງ SNYC
  - » ລະບຸ ສະຖານທີ່ສຳລັບ SNYC.
- ຈັດຕັ້ງປະຕິບັດການປະເມີນຄວາມສ່ຽງ ກັບໄວໜຸ່ມທັງໝົດທີ່ເປັນຜູ້ເຂົ້າຮ່ວມ SNYC, ອະທິບາຍໄວ້ຢູ່ໃນບົດຮຽນທີ 2 ຂອງຄູ່ມືສະບັບນີ້ ( ຄວາມຮັບຜິດຊອບຂອງພະນັກງານອົງການສຸພະນິມິດ ແລະ ຜູ້ໃຫຍ່ ທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC).
- ດຳເນີນການ ທົດສອບ ໄວໜຸ່ມທີ່ເປັນຜູ້ເຂົ້າຮ່ວມທັງໝົດ ກ່ອນຈະເລີ່ມບົດຮຽນທຳອິດ.

**ສາຍພົວພັນຂອງຊຸມຊົນ**

ໃຫ້ອະທິບາຍວ່າ ອົງການສຸພະນິມິດ ໄດ້ຕັດສິນໃຈເລີ່ມຕົ້ນ SNYC ຢູ່ໃນຊຸມຊົນແຫ່ງນີ້ ຍ້ອນວ່າອົງການສຸພະນິມິດ ໄດ້ມີສາຍພົວພັນທີ່ເຂັ້ມແຂງກັບຊຸມຊົນ.

## ການຮັບເອົາ ຜູ້ເຂົ້າຮ່ວມ ແລະ ຜູ້ອຳນວຍຄວາມສະດວກຂອງ SNYC

ອະທິບາຍວ່າ ແຕ່ລະ SNYC ຈະມີ ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກ ສອງຄົນການເປັນຜູ້ອຳນວຍຄວາມສະດວກຂອງ SNYC ແມ່ນມີຄວາມທ້າທາຍ ແລະ ໄດ້ປະໂຫຍດ. ມັນຕ້ອງການ ຄວາມໝາຍໝັ້ນ ແລະ ການເສຍສະຫຼະໄລຍະຍາວ ໃນການເຮັດວຽກກັບໄວໜຸ່ມ.

## ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກ ຂອງ SNYC

ອະທິບາຍວ່າ ໃນຂະນະທີ່ບໍ່ມີແບບແຜນ ສຳລັບອະທິບາຍກ່ຽວກັບ ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກທີ່ສົມບູນແບບ ຂອງ SNYC, ແຕ່ວ່າ ຄຸນລັກສະນະຕໍ່ໄປນີ້ສາມາດສາມາດອະທິບາຍໄດ້:

- ບຸກຄົນທີ່ ເຂົ້າກັບໄວໜຸ່ມໄດ້ດີ ແລະ ເປັນຜູ້ທີ່ໄວໜຸ່ມມັກ. ບຸກຄົນທີ່ສາມາດສ້າງສາຍພົວພັນກັບໄວໜຸ່ມ.
- ບຸກຄົນ ທີ່ມີປະສົບການ ຫຼື ການຝຶກອົບຮົມ ໃນການເຮັດວຽກກັບໄວໜຸ່ມ.
- ບຸກຄົນທີ່ ສາມາດເຮັດວຽກກັບສະມາຊິກຕ່າງໆ ຂອງຊຸມຊົນ ແລະ ສະມາຊິກຊຸມຊົນມັກ ແລະ ເຄົາລົບ.
- ເປັນຕົວແບບທີ່ໄວໜຸ່ມນັບຖືເອົາເປັນແບບຢ່າງ.
- ບຸກຄົນທີ່ມີພະລັງ ທີ່ເຮັດໃຫ້ກຸ່ມເຮັດວຽກ ກັບທຸກບົດຮຽນ ແລະ ສາມາດກະຕຸ້ນໃຫ້ຜູ້ອື່ນເຂົ້າຮ່ວມເປັນປົກກະຕິ.
- ບຸກຄົນທີ່ມີຄວາມຮັບຜິດຊອບພຽງພໍ ເພື່ອກະກຽມບັນດາບົດຮຽນ.
- ບຸກຄົນທີ່ຈະປະຕິບັດຕາມນະໂຍບາຍປົກປ້ອງເດັກຂອງອົງການສຸພະນິມິດ.
- ບຸກຄົນທີ່ເຫັນອົກເຫັນໃຈຄົນອື່ນ ທີ່ບໍ່ວິຈານຕັດສິນຜູ້ອື່ນ.

ໃຫ້ອະທິບາຍວ່າ ເມື່ອເຈົ້າລະບຸ ຜູ້ໃຫຍ່ທີ່ມີທ່າແຮງທີ່ຈະເປັນຜູ້ອຳນວຍຄວາມສະດວກ SNYC ແລ້ວ, ເຈົ້າຕ້ອງດຳເນີນການກວດກາເບື້ອງຫຼັງຄວາມເປັນມາ. ເຈົ້າຕ້ອງກວດກາກັບສະມາຊິກຂອງຊຸມຊົນ ທີ່ຮູ້ຈັກກັບບຸກຄົນດັ່ງກ່າວ ຢ່າງໜ້ອຍໜຶ່ງປີ ເພື່ອຮັບປະກັນວ່າ ບຸກຄົນດັ່ງກ່າວ ບໍ່ເຄີຍຕີ ຫຼື ທຳຮ້າຍເດັກນ້ອຍ ແລະ

ບໍ່ເຄີຍມີການພົວພັນທາງເພດກັບເດັກນ້ອຍ. ບຸກຄົນດັ່ງກ່າວນີ້ບໍ່ຄວນມີປະຫວັດດ້ານອາຊະຍາກຳ ຫຼື ຕິດເຫຼົ້າ ຫຼື ຢາເສບຕິດ.

ອົງການສຸພະນິມິດ ກຳປູເຈຍ ໄດ້ປະສົບຜົນສຳເລັດທີ່ພິເສດ ໃນການເຮັດວຽກກັບຜູ້ອຳນວຍຄວາມສະດວກທີ່ອາຍຸ ລະຫວ່າງ 30–40 ປີ, ເຊິ່ງເປັນຜູ້ທີ່ໜຸ່ມພຽງພໍ ໃນການພົວພັນກັບໄວໜຸ່ມ ແຕ່ວ່າກໍ່ມີອາຍຸ ແລະ ປະສົບການສົມຄວນ. ແຕ່ວ່າ ບຸກຄົນທີ່ໜຸ່ມກວ່າ ຫຼື ອາວຸໂສກວ່າ ກໍ່ສາມາດ ເປັນຜູ້ອຳນວຍຄວາມສະດວກທີ່ດີເຊັ່ນກັນ. ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກ SNYC ນຳໃຊ້ເຄື່ອງມື ເພື່ອດຳເນີນບົດຮຽນຂອງ SNYC.

## ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກ SNYC

ອະທິບາຍວ່າ ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກ SNYC ໄດ້ຮັບການຝຶກອົບຮົມ ໂດຍເປັນສ່ວນໜຶ່ງຂອງ SNYC ເພື່ອຊ່ວຍຜູ້ໃຫຍ່ ດຳເນີນ SNYC ແລະ ສ້າງການພົວພັນຕິດຕໍ່ກັບ ໄວໜຸ່ມໃນທ້ອງຖິ່ນ. ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກ ຄວນມີອາຍຸ ສູງກວ່າ 15 ປີ. ອົງການສຸພະນິມິດລາວ ແນະນຳໃຫ້ຄັດເລືອກ ໄວໜຸ່ມສູງສຸດ ສີ່ຄົນ ເພື່ອເປັນ ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ໃນແຕ່ລະສະໂມສອນ. ມັນມີຄວາມສຳຄັນທີ່ ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກ SNYC ໄດ້ຖືກຄັດເລືອກອີງໃສ່ບຸກຄະລິກສະເພາະຕົວ ຫຼາຍກວ່າອີງໃສ່ທັກສະພຽງຢ່າງດຽວ. ຕົວຢ່າງເຊັ່ນ: SNYC ແຫ່ງໜຶ່ງ ບໍ່ຄວນເລືອກໄວໜຸ່ມທີ່ມີຄະແນນຢູ່ໃນໂຮງຮຽນດີຫຼາຍ ແຕ່ວ່າບໍ່ມີໝູ່ ຫຼື ໄວໜຸ່ມທີ່ມັກບົງການແບບນາຍ. SNYC ຄວນເປັນສະຖານທີ່ ທີ່ມີຄວາມມ່ວນຊື່ນ ທີ່ເຮັດໃຫ້ໄວໜຸ່ມມາຍ້ອນວ່າພວກເຂົາຢາກມາ. ຖ້າໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກ SNYC ເປັນຜູ້ທີ່ຜູ້ອື່ນມັກ, ມັນຈະຊ່ວຍໃຫ້ ສະໂມສອນໄດ້ຮັບຄວາມນິຍົມຫຼາຍຂຶ້ນ. ສິ່ງດັ່ງລຸ່ມນີ້ ແມ່ນບາງຄຸນລັກສະນະ ແລະ ທັກສະ ສຳລັບ ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກທີ່ດີຂອງ SNYC:

- ໄວໜຸ່ມທີ່ໄດ້ຮັບຄວາມນັບຖືຈາກໝູ່ຄູ່.
- ໄວໜຸ່ມທີ່ ຜູ້ອື່ນເອົາເປັນແບບຢ່າງ ແລະ ເປັນແບບຢ່າງທີ່ດີ.
- ໄວໜຸ່ມທີ່ ສຸພາບ ແລະ ບໍ່ຂົ່ມເຫງ ຫຼື ເຍາະເຍີ້ຍຜູ້ອື່ນ.
- ໄວໜຸ່ມທີ່ ເປັນອາສາສະໝັກມາກ່ອນ.
- ໄວໜຸ່ມທີ່ມີເວລາພຽງພໍ ສຳລັບເຂົ້າຮ່ວມທຸກບົດຮຽນ. ບໍ່ເລືອກໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກ ທີ່ເຮັດວຽກຫຼາຍລົ້ນມື ເພື່ອສະໜັບສະໜູນຊ່ວຍເຫຼືອຄອບຄົວຂອງລາວ.
- ໄວໜຸ່ມທີ່ ສາມາດອ່ານໜັງສືໄດ້.

ໄວໜຸ່ມຄວນມີການພົວພັນກັບ ໄວໜຸ່ມທີ່ເປັນຜູ້ເຂົ້າຮ່ວມ ທີ່ເຈົ້າຄິດວ່າຈະຮັບເອົາ. ຍົກຕົວຢ່າງເຊັ່ນ: ຖ້າຫາກ SNYC ຕ້ອງການໄວໜຸ່ມຈາກຊົນເຜົ່າສະເພາະໃດໜຶ່ງໃຫ້ເຂົ້າຮ່ວມ, ມັນອາດຈະຊ່ວຍເຫຼືອໄດ້ ໂດຍການຮັບເອົາໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກ SNYC ຈາກຊຸມຊົນດັ່ງກ່າວນັ້ນ.

ຖ້າຫາກເຈົ້າບໍ່ສາມາດຄົ້ນພົບໝົດທຸກໆ ຄຸນລັກສະນະ ແລະ ທັກສະດັ່ງກ່າວນີ້ ຢູ່ໃນໄວໜຸ່ມຜູ້ໃດໜຶ່ງ, ໃຫ້ຄິດກ່ຽວກັບວ່າ ສິ່ງໃດແມ່ນສິ່ງສຳຄັນທີ່ສຸດພາຍໃນຊຸມຊົນຂອງເຈົ້າ ແລະ ຜູ້ສະໝັກ ອາດຈະຮຽນຮູ້ ບາງຄຸນລັກສະນະ ແລະ ທັກສະເຫຼົ່ານັ້ນ ໂດຍຜ່ານການອຳນວຍຄວາມສະດວກ ຫຼື ບໍ່. .

## ພາລະບົດບາດຂອງ ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກ SNYC ແມ່ນຫຍັງ?

ອະທິບາຍວ່າ ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກ SNYC ສາມາດ ເຂົ້າຮ່ວມ ການຝຶກອົບຮົມໜຶ່ງມື້ ທີ່ດຳເນີນ ໂດຍພະນັກງານອົງການສຸພະນິມິດ ແລະ ຜູ້ອຳນວຍຄວາມສະດວກທີ່ເປັນຜູ້ໃຫຍ່ຂອງ SNYC ໂດຍປະຕິບັດຕາມ ຄູ່ມືການຝຶກອົບຮົມ ການນຳທາງແບບສະຫຼາດ ກ່ອນຈະເລີ່ມຕົ້ນ SNYC.

ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກ SNYC ຈະ:

- ຊ່ວຍອຳນວຍຄວາມສະດວກ ການສົນທະນາ ເມື່ອມີການແບ່ງເປັນກຸ່ມນ້ອຍ.
- ຈັບຄູ່ກັບໄວໜຸ່ມທີ່ມີຄວາມຫຍຸ້ງຍາກໃນການອ່ານ ຫຼື ຂຽນ ເພື່ອວ່າໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກ SNYC ຈະສາມາດບັນທຶກແນວຄວາມຄິດຂອງພວກເຂົາ.
- ອຳນວຍຄວາມສະດວກໃນການຈັດກິດຈະກຳອຸ່ນເຄື່ອງ ກ່ອນຈະເລີ່ມຕົ້ນບົດຮຽນ.

- ລົງຢັ້ງມຢາມໄວໜຸ່ມ ຜູ້ທີ່ຂາດການຮຽນ ເພື່ອເບິ່ງວ່າເປັນຫຍັງພວກເຂົາຈຶ່ງບໍ່ມາຮຽນ.
- ຊ່ວຍເຫຼືອກະຕຸກຊຸກຍູ້ໄວໜຸ່ມອື່ນໆ ໃຫ້ເຂົ້າຮ່ວມ.
- ຈະຈັບຄູ່ກັບ ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກ ຢູ່ສະເໝີ ແລະ ຈະບໍ່ສອນຄືນດຽວເດັດຂາດ.

ອະທິບາຍວ່າ ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກ SNYC ສາມາດໄດ້ຮັບ 'ດາວ' ສຳລັບການເຂົ້າຮ່ວມ, ເຊັ່ນດຽວກັນກັບ ຜູ້ເຂົ້າຮ່ວມຄົນອື່ນໆ (ລະບົບໃຫ້ ດາວ ຈະໄດ້ຖືກແນະນຳຢູ່ໃນ ບົດຮຽນທີ 3). ຖ້າຫາກ ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກ SNYC ເຮັດວຽກໄດ້ດີ ແລະ ເຂົ້າຮ່ວມເກືອບທຸກບົດຮຽນ, ພວກເຂົາ ມີສິດເຂົ້າຮ່ວມ ການຝຶກອົບຮົມ ສຳລັບຜູ້ອຳນວຍຄວາມສະດວກ ໃນຮອບຕໍ່ໄປ ຢ່າງເຕັມສ່ວນ. ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກ SNYC ທີ່ມີອາຍຸສູງກວ່າ ອາດຈະຖືກຄັດເລືອກໃຫ້ ຮັບພາລະບົດບາດທີ່ໃນໄລຍະຜ່ານມາ ດຳເນີນໂດຍ ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກ.

## ບັນດາຜູ້ເຂົ້າຮ່ວມ SNYC

ອະທິບາຍວ່າ ອົງການສຸພະນິມິດ ແມ່ນອົງການທີ່ເອົາເດັກນ້ອຍເປັນໃຈກາງ ໂດຍສຸມໃສ່ ເດັກນ້ອຍ ແລະ ໄວໜຸ່ມທີ່ຢູ່ໃນພາວະສ່ຽງສູງສຸດ. ໄວໜຸ່ມເຫຼົ່ານີ້ ກໍ່ອາດຈະມີຄວາມສ່ຽງຕໍ່ການຖືກຄ້າມະນຸດ ຫຼື ການເຄື່ອນຍ້າຍແບບບໍ່ປອດໄພ ສູງທີ່ສຸດ. ຍ້ອນເຫດຜົນດັ່ງກ່າວນີ້ ພະນັກງານອົງການສຸພະນິມິດ ຄວນຈະຮັບເອົາໄວໜຸ່ມທີ່ຢູ່ໃນພາວະສ່ຽງ ເພື່ອເຂົ້າຮ່ວມ SNYC. ພະນັກງານ ຄວນພະຍາຍາມ ເພື່ອຮັບເອົາ:

- ໄວໜຸ່ມ ທີ່ບໍ່ສາມາດ ເຂົ້າໂຮງຮຽນໄດ້ ຫຼື ເຂົ້າເປັນບາງຄັ້ງ ແບບດົນໆເທື່ອໜຶ່ງ.
- ໄວໜຸ່ມ ທີ່ຮ່າງກາຍພິການ.
- ໄວໜຸ່ມ ຊົນເຜົ່າ.
- ຈຳນວນເທົ່າກັນລະຫວ່າງຍິງຊາຍ.
- ໄວໜຸ່ມ ທີ່ຖືກລະບຸວ່າ ເປັນຜູ້ທີ່ຢູ່ໃນພາວະສ່ຽງ.
- ໄວໜຸ່ມ ທີ່ມີ ເອື້ອຍອ້າຍນ້ອງ ອາຍຸຕ່ຳກວ່າ 21 ປີທີ່ເຄື່ອນຍ້າຍ ຫຼື ເລີ່ມຕົ້ນເຮັດວຽກແລ້ວ.
- ໄວໜຸ່ມ ທີ່ບໍ່ມີປະເທດ/ບໍ່ມີສັນຊາດ.
- ໄວໜຸ່ມ ທີ່ເປັນສະມາຊິກຂອງຫຼາຍໆ ສາດສະໜາ ຫຼື ບໍ່ມີສາດສະໜາ.

ເຮັດໃນສິ່ງທີ່ເຈົ້າສາມາດເຮັດໄດ້ ເພື່ອລວມເອົາໄວໜຸ່ມທີ່ພິການເຂົ້ານຳ, ຍ້ອນວ່າພວກເຂົາແມ່ນ ຜູ້ທີ່ຢູ່ໃນພາວະສ່ຽງສູງທີ່ສຸດ. ສົນທະນາກ່ຽວກັບວິທີທີ່ຈະລວມເອົາພວກເຂົາ ແລະ ປັບວິທີທີ່ກຸ່ມດຳເນີນ ເພື່ອໃຫ້ໄດ້ປະສົບການຈາກການດຳເນີນດັ່ງກ່າວໃຫ້ໄດ້ຫຼາຍທີ່ສຸດ.

ໃນເວລາດຽວກັນ, ອົງການສຸພະນິມິດກໍ່ຮັບຮູ້ວ່າ SNYC ດຳເນີນພາຍໃຕ້ຄວາມຈຳກັດໃນບາງສະພາບແວດລ້ອມ. ຖ້າລັດຖະບານຮຽກຮ້ອງວ່າ ແຜນງານດ້ານທັກສະຊີວິດທັງໝົດ ຕ້ອງໄດ້ສອນຢູ່ພາຍໃນໂຮງຮຽນ ໃຫ້ແກ່ໄວໜຸ່ມ ທີ່ກຳລັງເຂົ້າໂຮງຮຽນໃນປະຈຸບັນ, ໃນເງື່ອນໄຂດັ່ງກ່າວນັ້ນ SNYC ກໍ່ຕ້ອງໄດ້ເຮັດວຽກພາຍໃນຄວາມຈຳກັດດັ່ງກ່າວ. ເຖິງແນວໃດກໍ່ຕາມ, ເວລາໃດທີ່ເປັນໄປໄດ້ SNYC ຕ້ອງພະຍາຍາມ ຮັບເອົາໄວໜຸ່ມດັ່ງທີ່ໄດ້ກ່າວໄວ້ໃນລາຍການຂ້າງເທິງ.

ການເຂົ້າຮ່ວມ SNYC ຕ້ອງແມ່ນດ້ວຍໃຈສະໝັກ ແລະ ພະນັກງານອົງການສຸພະນິມິດ ຄວນຮັບປະກັນວ່າໄວໜຸ່ມບໍ່ໄດ້ຖືກບັງຄັບ ໃຫ້ເຂົ້າຮ່ວມ ໂດຍພໍ່ແມ່ຂອງພວກເຂົາ.

## ສ້າງແຜນຕອບໂຕ້

ຫ້ອງການປະຈຳປະເທດບາງຫ້ອງການ ອາດຈະມີ ແຜນກຸ່ມພ້ອມປົກປ້ອງເດັກ ລະດັບ 1 (L1 CPIPP) ທີ່ປະກອບດ້ວຍແຜນລະອຽດ ໃນການຕອບໂຕ້ ເຫດການທາລຸນ. ຖາມ ພະນັກງານປົກປ້ອງເດັກວ່າ ຢູ່ໃນຫ້ອງການມີ L1 CPIPP ບໍ່. ຖ້າບໍ່ດັ່ງນັ້ນ, ພະນັກງານໃນປະເທດ ຂອງອົງການສຸພະນິມິດ ຄວນສ້າງແຜນຕອບໂຕ້ ທີ່ອະທິບາຍ ວິທີທີ່ພະນັກງານ ອົງການສຸພະນິມິດ ຈະຕອບໂຕ້ ຖ້າຫາກເດັກນ້ອຍລາຍງານວ່າພວກເຂົາຖືກທາລຸນທາງຮ່າງກາຍ ຫຼື ທາງເພດ.

ແຜນຕອບໂຕ້ດັ່ງກ່າວນີ້ຄວນປະກອບດ້ວຍ:

- ຄຳອະທິບາຍກ່ຽວກັບ ຂັ້ນຕອນ ທີ່ຕ້ອງໄດ້ປະຕິບັດຕາມ ຖ້າຫາກເດັກນ້ອຍລາຍງານວ່າຖືກທາລຸນ, ເຊິ່ງປະກອບດ້ວຍ ຄຳອະທິບາຍລະອຽດ ກ່ຽວກັບພາລະບົດບາດຂອງພະນັກງານອົງການສຸພະນິມິດ ຫຼື ອົງການຈັດຕັ້ງທີ່ບໍ່ສັງກັດລັດອື່ນໆທີ່ເປັນຄູ່ຮ່ວມງານ ທີ່ກ່ຽວຂ້ອງ ຢູ່ໃນຂັ້ນຕອນດັ່ງກ່າວນີ້.
- ຄຳອະທິບາຍກ່ຽວກັບວິທີທີ່ ອົງການສຸພະນິມິດ ຈະອະທິບາຍກ່ຽວກັບ ແຜນຕອບໂຕ້ ຕໍ່ກັບເດັກນ້ອຍທີ່ກຳລັງກ່າວເຖິງ.
- ນຳເບີໂທລະສັບຂອງ ພະນັກງານອົງການສຸພະນິມິດ ຫຼື ອົງການຈັດຕັ້ງທີ່ບໍ່ສັງກັດລັດອື່ນໆທີ່ເປັນຄູ່ຮ່ວມງານ ທີ່ຈະດຳເນີນການ ເພື່ອປົກປ້ອງເດັກ ທີ່ລາຍງານວ່າຖືກທາລຸນ.
- ວິທີທາງ ເພື່ອສະເໜີ ການປົກປ້ອງທັນທີ ສຳລັບເດັກ ທີ່ລາຍງານວ່າຖືກລະເມີດ ເພື່ອປ້ອງກັນການແກ້ແຄ້ນຄືນຈາກຜູ້ທາລຸນ.
- ການຕິດຕໍ່ພົວພັນກັບ ຜູ້ໃຫ້ຄຳປຶກສາຂອງທ້ອງຖິ່ນ.

ການອະທິບາຍກ່ຽວກັບແຜນຕອບໂຕ້ດັ່ງກ່າວ ຄວນຖືກແຊກຊ້ອນເຂົ້າຢູ່ໃນເຄື່ອງມືໂດຍພະນັກງານອົງການສຸພະນິມິດ, ໂດຍເປັນເອກະສານຊ້ອນທ້າຍ B.

ຕໍ່ໄປ, ຢາຍ ສຳເນົາຂອງ 'IS 1c: ບັນຊີກວດກາ: ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກ SNYC ທີ່ດີ'; 'IS 1d: ບັນຊີກວດກາ: ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກ SNYC ທີ່ດີ ແລະ 'IS 1e: ບັນຊີກວດກາ: ໄວໜຸ່ມທີ່ຢູ່ໃນພາວະສ່ຽງ' (ບັນຊີດັ່ງກ່າວນີ້ ແມ່ນຖືກກວມເອົາຢູ່ໃນຕອນທ້າຍຂອງບົດຮຽນນີ້)

ຮັບປະກັນ ກັບບັນດາຜູ້ເຂົ້າຮ່ວມວ່າ ອົງການສຸພະນິມິດເຂົ້າໃຈ ວ່າພວກເຂົາອາດຈະບໍ່ສາມາດຄົ້ນພົບ ຜູ້ອຳນວຍຄວາມສະດວກ ຫຼື ໄວໜຸ່ມ ທີ່ມີໝົດທຸກຄຸນນະພາບດັ່ງກ່າວເຫຼົ່ານີ້. ບອກໃຫ້ບັນດາຜູ້ເຂົ້າຮ່ວມອ່ານຜ່ານບັນດາບັນຊີກວດກາ. ໃຫ້ຖາມວ່າ:

- ເຈົ້າສາມາດນຳໃຊ້ສິ່ງເຫຼົ່ານີ້ໄດ້ບໍ່?
- ແມ່ນຫຍັງທີ່ຈະເປັນອຸປະສັກໃນການນຳໃຊ້ສິ່ງດັ່ງກ່າວນີ້ ແລະ ຈະຂ້າມຜ່ານອຸປະສັກດັ່ງກ່າວນີ້ໄດ້ແນວໃດ?

## ກິດຈະກຳ: ການຮັບເອົາໄວໜຸ່ມທີ່ຢູ່ໃນພາວະສ່ຽງ

ແບ່ງໄວໜຸ່ມອອກເປັນກຸ່ມ 6–8 ຄົນ. ເອົາເຈ້ຍແຜ່ນໃຫຍ່ໜຶ່ງແຜ່ນ ແລະ ບິກເຟີດຈຳນວນໜຶ່ງໃຫ້ພວກເຂົາ. ບອກພວກເຂົາເຮັດບັນຊີລາຍຊື່ຂອງບັນດາໄວໜຸ່ມທີ່ຢູ່ໃນພາວະສ່ຽງສູງທີ່ສຸດ, ທີ່ອາຍຸ 12–17ປີ, ທີ່ຢູ່ໃນຊຸມຊົນຂອງພວກເຂົາ. ບອກພວກເຂົາໃຫ້ພິຈາລະນາກ່ຽວກັບໄວໜຸ່ມທີ່ຢູ່ໃນພາວະສ່ຽງຍ້ອນ:

- ວຽກ
- ພຶດຕິກຳທາງດ້ານເພດສຳພັນ
- ຄວາມເຈັບປ່ວຍ
- ການເຂົ້າເຖິງການສຶກສາ
- ອາດຈະເຄື່ອນຍ້າຍ
- ເພດ
- ຄວາມທຸກຍາກ
- ການໃຊ້ຄວາມຮຸນແຮງທາງຮ່າງກາຍ
- ສະພາບຄອບຄົວ.

ຕໍ່ໄປ, ບອກພວກເຂົາໃຫ້ ສ້າງບັນຊີລາຍຊື່:

- ສະຖານທີ່ ທີ່ພວກເຂົາເຫັນໄວໜຸ່ມຈຳນວນດັ່ງກ່າວເລື້ອຍໆ
- ອົງການຈັດຕັ້ງ NGO ອື່ນໆ ຫຼື ບັນດາກຸ່ມ ທີ່ເຮັດວຽກກັບໄວໜຸ່ມເຫຼົ່ານີ້
- ຕາຕະລາງປະຈຳວັນຂອງໄວໜຸ່ມດັ່ງກ່າວ.

ເອົາໄວໜຸ່ມທັງໝົດມາລວມກັນເປັນວົງກົມ ແລະ ຖາມວ່າ:

- ພວກເຈົ້າຈະສາມາດ ເຂົ້າເຖິງ ບັນດາໄວໜຸ່ມເຫຼົ່ານີ້ ດ້ວຍ ສະໂມສອນໄວໜຸ່ມບໍ່?
- ມີປັດໃຈໃດບໍ່ໃນຊີວິດຂອງພວກເຂົາ ທີ່ອາດຈະຢຸດພວກເຂົາບໍ່ໃຫ້ເຂົ້າຮ່ວມສະໂມສອນ?
- ມີສິ່ງໃດບໍ່ທີ່ເຈົ້າອາດຈະເຮັດໄດ້ ເພື່ອເນັ້ນໃສ່ປັດໃຈເຫຼົ່ານີ້?
- ຢູ່ໃນຊຸມຊົນ ແມ່ນໃຜສາມາດຊ່ວຍເຈົ້າ ເພື່ອເນັ້ນໃສ່ປັດໃຈເຫຼົ່ານີ້?
- ການສະໜັບສະໜູນແບບໃດທີ່ເຈົ້າຄາດຫວັງຈາກຊຸມຊົນ?

ບັນທຶກເອົາຄຳຕອບທີ່ໄດ້ຈາກພວກເຂົາ. ເມື່ອພວກເຂົາຕອບສຳເລັດແລ້ວ, ບອກບັນດາຜູ້ເຂົ້າຮ່ວມວ່າ ຖ້າຫາກ ບັນດາຄຳຕອບເຫຼົ່ານີ້ ເປັນປະໂຫຍດສຳລັບພວກເຂົາ, ພວກເຂົາຄວນຂຽນໄວ້ໃນພາກບັນທຶກທີ່ຢູ່ທ້າຍຂອງ ເຄື່ອງມື ການນຳທາງແບບສະຫຼາດ.

## ກອງປະຊຸມ SNYC

ອະທິບາຍວ່າ ພາຍຫຼັງທີ່ໄດ້ຮັບເອົາ ຜູ້ເຂົ້າຮ່ວມ ແລະ ຜູ້ອຳນວຍຄວາມສະດວກ SNYC ແລ້ວ, ພະນັກງານອົງການສຸພະນິມິດ ຈະຈັດກອງປະຊຸມທີ່ເຂົ້າຮ່ວມໂດຍ ພໍ່ແມ່ ຫຼື ຜູ້ປົກຄອງ, ໄວໜຸ່ມທີ່ເປັນຜູ້ເຂົ້າຮ່ວມ, ໄວໜຸ່ມ ແລະ ຜູ້ໃຫຍ່ ທີ່ເປັນຜູ້ອຳນວຍຄວາມສະດວກ SNYC ແລະ ສະມາຊິກຂອງຊຸມຊົນ ທີ່ສາມາດຊ່ວຍເຫຼືອສະໂມສອນ. ຢູ່ໃນກອງປະຊຸມ ຜູ້ເຂົ້າຮ່ວມຈະສົນທະນາກ່ຽວກັບການສ້າງຕັ້ງສະໂມສອນ ແລະ ແນະນຳກ່ຽວກັບເຄື່ອງມື.

ຢາຍສຳເນົາເອກະສານ ຂອງ 'IS 1b: ບັນຊີກວດກາ: ກອງປະຊຸມ SNYC' ແລະ 'IS 1f: ບັນຊີກວດກາ: ສະຖານທີ່ຂອງ SNYC'. ບອກໃຫ້ບັນດາຜູ້ເຂົ້າຮ່ວມອ່ານ ບັນດາບັນຊີກວດກາດັ່ງກ່າວ.

ອະທິບາຍວ່າ ໃນລະຫວ່າງການປະຊຸມດັ່ງກ່າວນີ້ ພະນັກງານອົງການສຸພະນິມິດ, ພໍ່ແມ່ ແລະ ໄວໜຸ່ມ ຄວນເຮັດວຽກຮ່ວມກັນເພື່ອ:

- ສົນທະນາກ່ຽວກັບເນື້ອໃນຂອງເຄື່ອງມື ແລະ ກຳນົດວ່າ ມີຫົວຂໍ້ໃດບໍ່ ທີ່ພໍ່ແມ່ ຫຼື ໄວໜຸ່ມ ຄິດວ່າມີຄວາມເໝາະສົມສຳລັບກຸ່ມອາຍຸນີ້ຫຼືວ່າຄວນສອນໃຫ້ສະເພາະແຕ່ໄວໜຸ່ມທີ່ມີອາຍຸຫຼາຍກວ່ານີ້ ເທົ່ານັ້ນຫຼືບໍ່.
- ກຳນົດກ່ຽວກັບຕາຕະລາງຂອງ SNYC. ແຕ່ລະບົດຮຽນຄວນໃຊ້ເວລາ 75 ນາທີ, ແຕ່ວ່າ ຜູ້ອຳນວຍຄວາມສະດວກ SNYC ກໍ່ຄວນອະນຸຍາດໃຫ້ມີເວລາພິເສດຕື່ມອີກເລັກໜ້ອຍ ເພື່ອວ່າ ພວກເຂົາຈະສາມາດຕື່ມແບບຟອມການຕິດຕາມຕົນເອງໃຫ້ສຳເລັດ ແລະ ຕອບຄຳຖາມຂອງບັນດາຜູ້ເຂົ້າຮ່ວມຫຼັງຈາກຈົບບົດຮຽນ. ບັນດາບົດຮຽນສາມາດກຳນົດຕາຕະລາງໃສ່ ໜຶ່ງຄັ້ງຕໍ່ອາທິດ, ສອງຄັ້ງຕໍ່ເດືອນ ຫຼື ກອງປະຊຸມໜຶ່ງມື້ ແບບຕໍ່ເນື່ອງ; ເຖິງແນວໃດກໍ່ຕາມ, ສອງຄັ້ງຕໍ່ເດືອນແມ່ນດີທີ່ສຸດ ບັນດາຜູ້ມີສ່ວນຮ່ວມ ຢູ່ໃນກອງປະຊຸມ ຄວນເລືອກເອົາຕາຕະລາງທີ່ເໝາະສົມກັບການດຳລົງຊີວິດຂອງຜູ້ເຂົ້າຮ່ວມ.
- ສົນທະນາກ່ຽວກັບ ການຕິດຕໍ່ພົວພັນທີ່ເປັນໄປໄດ້ ກັບບັນດາກຸ່ມທີ່ມີຢູ່ແລ້ວ ໃນຊຸມຊົນຕົວຢ່າງເຊັ່ນ, ຖ້າມີສະໂມສອນໄວໜຸ່ມອັນອື່ນຢູ່ກ່ອນແລ້ວ, SNYC ອາດຢາກຈະສ້າງການຕິດຕໍ່ພົວພັນກັບສະໂມສອນດັ່ງກ່າວ. ຫຼືວ່າ ຖ້າວ່າ ບັນດາຜູ້ເຂົ້າຮ່ວມຂອງ SNYC ບໍ່ຮູ້ຫຍັງເລີຍກ່ຽວກັບເພດສຳພັນ ແລະ ຕ້ອງການ ການອະທິບາຍ ເພື່ອໃຫ້ສາມາດເຂົ້າໃຈກ່ຽວກັບບົດຮຽນ 'ການຄ້າມະນຸດ ເພື່ອການຂູດຮີດທາງເພດ', ພວກເຂົາອາດຈະຕ້ອງການ ເປັນຄູ່ຮ່ວມງານກັບ ອົງການຈັດຕັ້ງທີ່ບໍ່ສັງກັດລັດ (NGO) ທີ່ເຮັດວຽກກ່ຽວກັບການຄຸມກຳເນີດ ແລະ ຂໍຮ້ອງໃຫ້ພວກເຂົາ ດຳເນີນບົດຮຽນດັ່ງກ່າວ.
- ລະບຸ ສະຖານທີ່ ສຳລັບການຈັດຕັ້ງ SNYC, ດ້ວຍການນຳໃຊ້ 'IS 1f: ບັນຊີກວດກາ: ສະຖານທີ່ຂອງ SNYC'.
- ອະທິບາຍກ່ຽວກັບ ການປະເມີນຄວາມສ່ຽງ ທີ່ມີຢູ່ໃນບົດຮຽນທີ 2 ຂອງຄູ່ມືສະບັບນີ້ ແລະ ຂໍຄວາມຍິນຍອມຈາກ ພໍ່ແມ່ ເພື່ອໃຫ້ລູກຂອງພວກເຂົາເຂົ້າຮ່ວມສະໂມສອນ.

- ພໍ່ແມ່ ແລະ ໄວໜຸ່ມ ຄວນເຊັນ ແບບຟອມການຍິນຍອມ ສໍາລັບການມີສ່ວນຮ່ວມຢູ່ໃນ ເຄື່ອງມື ການນໍາທາງແບບສະຫຼາດ, ຢູ່ໜ້າ 4

## ການຈັດການທົດສອບກ່ອນການຝຶກ

ອະທິບາຍວ່າ ການທົດສອບກ່ອນການຝຶກ ຄວນເກີດຂຶ້ນຫຼັງຈາກທີ່ ໄດ້ເລືອກສະຖານທີ່ຂອງສະໂມສອນໄວໜຸ່ມ ແລະ ໄດ້ຮັບເອົາສະມາຊິກ, ແຕ່ວ່າ ກ່ອນທີ່ຈະເລີ່ມບົດຮຽນທໍາອິດ ຈຸດປະສົງຂອງການທົດສອບກ່ອນການຝຶກ ແມ່ນເພື່ອວັດແທກ ການປ່ຽນແປງ ຄວາມຮູ້ ແລະ ພຶດຕິກໍາຂອງໄວໜຸ່ມ ທີ່ເປັນຜົນຈາກການຝຶກອົບຮົມ. ຍ້ອນເຫດຜົນດັ່ງກ່າວນີ້ ການທົດສອບ ຈະໄດ້ຈັດຂຶ້ນກ່ອນຈະເລີ່ມບົດຮຽນທໍາອິດ.

ພວກເຮົາຄາດວ່າ ໄວໜຸ່ມທີ່ ຢູ່ໃນສະໂມສອນຈະບໍ່ຮູ້ຈັກຫຼາຍກ່ຽວກັບບັນດາຫົວຂໍ້ເຫຼົ່ານີ້ ກ່ອນທີ່ພວກເຂົາຈະເລີ່ມການຝຶກອົບຮົມ. ພວກເຮົາບໍ່ຕ້ອງການໃຫ້ໄວໜຸ່ມຮູ້ສຶກເສຍໃຈ ຫຼື ອັບອາຍຂາຍໜ້າ ຍ້ອນບໍ່ຮູ້ຄໍາຕອບສໍາລັບຄໍາຖາມ, ຍ້ອນເຫດຜົນດັ່ງກ່າວນີ້ ມັນຈຶ່ງມີຄວາມສໍາຄັນຫຼາຍ ທີ່ຜູ້ອໍານວຍຄວາມສະດວກ ຕ້ອງອະທິບາຍ ຈຸດປະສົງຂອງການທົດສອບໄວໜຸ່ມ ແລະ ອ່ານຄໍາແນະນໍາຂອງການທົດສອບ.

ການທົດສອບດັ່ງກ່າວມີເຈດຕະນາເພື່ອປະເມີນ ວ່າ ໄວໜຸ່ມຮູ້ກ່ຽວກັບຫົວຂໍ້ດັ່ງກ່າວຫຼາຍສໍ່າໃດ. ມັນບໍ່ໄດ້ມີເຈດຕະນາເພື່ອທົດສອບວ່າ ພວກເຂົາອ່ານ ຫຼື ຂຽນໄດ້ດີສໍ່າໃດ. ຖ້າຫາກມີຜູ້ເຂົ້າຮ່ວມຢູ່ໃນກຸ່ມ ທີ່ມີຄວາມຫຍຸ້ງຍາກໃນການອ່ານຫຼືຂຽນ, ຜູ້ອໍານວຍຄວາມສະດວກ ສາມາດອ່ານ ຄໍາຖາມ ໃຫ້ໄວໜຸ່ມ ແລະ ຂຽນຄໍາຕອບຂອງພວກເຂົາໃຫ້ພວກເຂົາ.

ຮັກສາ ເອກະສານການທົດສອບກ່ອນການຝຶກ ໄວ້ໃນສະຖານທີ່ ທີ່ປອດໄພ. ເຈົ້າຈະ ຕ້ອງການເພື່ອສົມທຽບກັບ ການທົດສອບຫຼັງການຝຶກ ອີກເທື່ອ ໃນຕອນທ້າຍຂອງການຝຶກອົບຮົມ.

### ການສະຫຼຸບສັງລວມບົດຮຽນ

ລຸ່ມນີ້ ແມ່ນບາດກ້າວ ໃນການສ້າງຕັ້ງ SNYC:

- ສ້າງຕັ້ງ SNYC ຢູ່ໃນຊຸມຊົນ ທີ່ອີງການສຸພະນິມິດ ມີສາຍພົວພັນຢູ່ກ່ອນແລ້ວ ແລະ ໄດ້ດໍາເນີນການປະເມີນ ກ່ຽວກັບຈຸດແຂງ ແລະ ສິ່ງທ້າທາຍຂອງຊຸມຊົນ ກ່ອນແລ້ວ.
- ສ້າງແຜນຕອບໂຕ້ ທີ່ຜູ້ອໍານວຍຄວາມສະດວກຂອງ SNYC ຈະຕ້ອງປະຕິບັດຕາມ ຖ້າຫາກມີໄວໜຸ່ມຄົນໃດໜຶ່ງ ລາຍງານກ່ຽວກັບ ການທາລຸນທາງຮ່າງກາຍ ຫຼື ທາງເພດ.
- ຮັບເອົາຜູ້ໃຫຍ່ ແລະ ໄວໜຸ່ມທີ່ເປັນຜູ້ອໍານວຍຄວາມສະດວກ ຂອງ SNYC ໂດຍອີງຕາມເງື່ອນໄຂມາດຖານຢູ່ໃນ 'IS 1c: ບັນຊີກວດກາ: ຜູ້ໃຫຍ່ທີ່ເປັນຜູ້ອໍານວຍຄວາມສະດວກທີ່ດີ'; ແລະ 'IS 1d: ບັນຊີກວດກາ: ໄວໜຸ່ມທີ່ເປັນຜູ້ອໍານວຍຄວາມສະດວກທີ່ດີ'. ຮັບເອົາໄວ ໜຸ່ມ ທີ່ເປັນຜູ້ເຂົ້າຮ່ວມ SNYC ໂດຍອີງຕາມ ເງື່ອນໄຂມາດຖານຢູ່ໃນ 'IS 1e: ບັນຊີກວດກາ: ໄວໜຸ່ມທີ່ຢູ່ໃນພາວະສ່ຽງ'.
- ດໍາເນີນກອງປະຊຸມວິຊາການ ຢູ່ໃນຊຸມຊົນ ຂອງ SNYC ຮ່ວມກັບ ພໍ່ແມ່/ຜູ້ປົກຄອງ, ໄວໜຸ່ມ ແລະ ຜູ້ອໍານວຍຄວາມສະດວກຂອງ SNYC ເພື່ອ:
  - » ກໍານົດຂັ້ນສຸດທ້າຍ ກ່ຽວກັບ ບັນດາຫົວຂໍ້ຂອງເຄື່ອງມື
  - » ກໍານົດ ຕາຕະລາງຂອງ SNYC
  - » ລະບຸ ສະຖານທີ່ສໍາລັບ SNYC
- ດໍາເນີນການປະເມີນຄວາມສ່ຽງ ກັບ ໄວໜຸ່ມທີ່ເປັນຜູ້ເຂົ້າຮ່ວມ SNYC ທັງໝົດ, ເຊິ່ງອະທິບາຍ ຢູ່ໃນບົດຮຽນທີ 2 ຂອງຄູ່ມື ສະບັບນີ້.
- ຈັດ ການທົດສອບກ່ອນການຝຶກ ກັບໄວໜຸ່ມທີ່ເປັນຜູ້ເຂົ້າຮ່ວມທັງໝົດ ກ່ອນຈະເລີ່ມຕົ້ນບົດຮຽນທໍາອິດ.

# IS 1a: 40 ຊັບສິນດ້ານການພັດທະນາ ຂອງ ສະຖາບັນ ເຊີດຈ໌

## 40 ຊັບສິນດ້ານການພັດທະນາ® ສໍາລັບໄວໜຸ່ມ (ອາຍຸ 12–18)

ສະຖາບັນ ເຊີດຈ໌® ໄດ້ລະບຸຂອບເຂດຂອງການພັດທະນາທີ່ດີດັ່ງລຸ່ມນີ້ - ເຊິ່ງຮູ້ຈັກກັນໃນນາມ ຊັບສິນດ້ານ **ການພັດທະນາ®** — ເຊິ່ງຊ່ວຍໃຫ້ໄວໜຸ່ມ ຈະເລີນເຕີບໂຕ ແບບມີສຸຂະພາບດີ, ມີຄວາມເມດຕາ ແລະ ມີຄວາມຮັບຜິດຊອບ.

1. **ການຊ່ວຍເຫຼືອສະໜັບສະໜູນຂອງຄອບຄົວ** - ຊີວິດຄອບຄົວສະໜອງ ຄວາມຮັກ ແລະ ການສະໜັບສະໜູນຊ່ວຍເຫຼືອ ໃນລະດັບສູງ.
2. **ການສື່ສານໃນທາງບວກ ຂອງຄອບຄົວ** - ໄວໜຸ່ມ ແລະ ພໍ່ແມ່ຂອງລາວ ສື່ສານກັນໃນທາງບວກ ແລະ ໄວໜຸ່ມຕ້ອງການຊອກຄໍາແນະນໍາ ແລະ ການໃຫ້ຄໍາປຶກສາ ຈາກພໍ່ແມ່.
3. **ສາຍພົວພັນອື່ນໆຂອງໄວໜຸ່ມ** - ໄວໜຸ່ມໄດ້ຮັບການສະໜັບສະໜູນ ຈາກຜູ້ໃຫຍ່ ສາມຄົນ ຫຼື ຫຼາຍກວ່ານັ້ນ ທີ່ບໍ່ແມ່ນພໍ່ແມ່ ຂອງລາວ.
4. **ຄົນບ້ານໃກ້ເຮືອນຄຽງມີຄວາມເມດຕາ** - ໄວໜຸ່ມມີປະສົບການ ກ່ຽວກັບ ຄົນບ້ານໃກ້ເຮືອນຄຽງທີ່ມີຄວາມເມດຕາ.
5. **ສະພາບແວດລ້ອມແບບມີຄວາມເມດຕາຂອງໂຮງຮຽນ** - ໂຮງຮຽນ ສະໜອງສະພາບແວດລ້ອມທີ່ມີຄວາມເມດຕາ, ກະຕຸກຊຸກຍູ້.
6. **ພໍ່ແມ່ມີການກ່ຽວພັນກັບໂຮງຮຽນ** - ພໍ່ແມ່ ມີຄວາມກ່ຽວພັນກັບໂຮງຮຽນຢ່າງຫ້າວຫັນ ໃນການຊ່ວຍເຫຼືອໄວໜຸ່ມໃຫ້ປະສົບຜົນສໍາເລັດໃນໂຮງຮຽນ
7. **ຊຸມຊົນຮູ້ຄຸນຄ່າຂອງໄວໜຸ່ມ** - ໄວໜຸ່ມ ສັງເກດເຫັນວ່າ ຜູ້ໃຫຍ່ໃນຊຸມຊົນ ເຫັນຄຸນຄ່າຂອງໄວໜຸ່ມ.
8. **ໄວໜຸ່ມແມ່ນຊັບພະຍາກອນ** - ໄວໜຸ່ມໄດ້ຮັບບົດບາດທີ່ມີປະໂຫຍດ ຢູ່ໃນຊຸມຊົນ.
9. **ໃຫ້ການບໍລິການຄົນອື່ນ** - ໄວໜຸ່ມໃຫ້ການບໍລິການຢູ່ໃນຊຸມຊົນ ໜຶ່ງຊົ່ວໂມງ ຫຼື ຫຼາຍກວ່ານັ້ນ ຕໍ່ອາທິດ.
10. **ຄວາມປອດໄພ** - ໄວໜຸ່ມຮູ້ສຶກປອດໄພ ຢູ່ໃນບ້ານ, ໃນໂຮງຮຽນ ແລະ ຢູ່ໃນບໍລິເວນບ້ານໃກ້ເຮືອນຄຽງ.
11. **ຂອບເຂດຂອງຄອບຄົວ** - ຄອບຄົວ ມີລະບຽບ ແລະ ການລົງໂທດ ທີ່ຊັດເຈນ ແລະ ມີການຕິດຕາມການໄປມາຂອງໄວໜຸ່ມ.
12. **ຂອບເຂດຂອງໂຮງຮຽນ** - ໂຮງຮຽນ ສະໜອງ ລະບຽບ ແລະ ການລົງໂທດ ທີ່ຊັດເຈນ.
13. **ຂອບເຂດຂອງບໍລິເວນບ້ານໃກ້ເຮືອນຄຽງ** - ບ້ານໃກ້ເຮືອນຄຽງ ມີຄວາມຮັບຜິດຊອບໃນການຕິດຕາມພຶດຕິກໍາຂອງໄວໜຸ່ມ.
14. **ຜູ້ໃຫຍ່ທີ່ເປັນແບບຢ່າງ** - ແບບຢ່າງທີ່ດີ, ພຶດຕິກໍາທີ່ມີຄວາມຮັບຜິດຊອບ ຂອງ ພໍ່ແມ່ ແລະ ຜູ້ໃຫຍ່ຜູ້ອື່ນໆ.
15. **ອິດທິພົນດ້ານດີ ຈາກໝູ່ຄູ່** - ແບບຢ່າງດ້ານພຶດຕິກໍາທີ່ມີຄວາມຮັບຜິດຊອບ ຂອງໝູ່ທີ່ດີທີ່ສຸດ ຂອງໄວໜຸ່ມ.
16. **ຄວາມຄາດຫວັງສູງ** - ທັງ ພໍ່ແມ່ ແລະ ຄູສອນ ຊຸກຍູ້ໃຫ້ໄວໜຸ່ມ ເຮັດສິ່ງທີ່ດີ.
17. **ກິດຈະກໍາທີ່ສ້າງສັນ** - ໄວໜຸ່ມ ໃຊ້ເວລາ ສາມຊົ່ວໂມງ ຫຼື ຫຼາຍກວ່ານັ້ນ ຕໍ່ອາທິດ ຕໍ່ກັບບົດຮຽນ ຫຼື ພາກປະຕິບັດກ່ຽວກັບ ເພງ, ລະຄອນ ຫຼື ສິລະປະດ້ານອື່ນໆ.
18. **ກິດຈະກໍາຂອງໄວໜຸ່ມ** - ໄວໜຸ່ມ ໃຊ້ເວລາ ສາມຊົ່ວໂມງ ຫຼື ຫຼາຍກວ່ານັ້ນ ຕໍ່ອາທິດ ໃນການຫຼິ້ນກິລາ, ໃນສະໂມສອນ ຫຼື ຈັດກິດຈະກໍາ ຢູ່ໃນໂຮງຮຽນ ແລະ/ຫຼື ຢູ່ໃນຊຸມຊົນ.
19. **ຊຸມຊົນດ້ານສາດສະໜາ** - ໄວໜຸ່ມ ໃຊ້ເວລາ ໜຶ່ງຊົ່ວໂມງ ຫຼື ຫຼາຍກວ່ານັ້ນ ຕໍ່ອາທິດ ຢູ່ໃນກິດຈະກໍາຂອງສະຖາບັນສາດສະໜາ.
20. **ເວລາ ຢູ່ບ້ານ** - ໄວໜຸ່ມອອກໄປຫຼິ້ນກັບໝູ່ "ໂດຍບໍ່ໄດ້ເຮັດຫຍັງເປັນພິເສດ" ສອງ ຫຼື ສາມ ຄືນຕໍ່ອາທິດ.
21. **ແຮງຈູງໃຈ ດ້ານຜົນສໍາເລັດ** - ໄວໜຸ່ມ ໄດ້ຮັບແຮງຈູງໃຈ ໃຫ້ຮຽນໃຫ້ດີຢູ່ໃນໂຮງຮຽນ.
22. **ການມີການກ່ຽວພັນກັບໂຮງຮຽນ** - ໄວໜຸ່ມມີການກ່ຽວພັນຢ່າງຫ້າວຫັນກັບການຮຽນ.

23. **ວຽກບ້ານ** - ໄວໜຸ່ມລາຍງານກ່ຽວກັບການເຮັດວຽກບ້ານ ຢ່າງໜ້ອຍໜຶ່ງຊົ່ວໂມງ ໃນທຸກໆມື້ ຮຽນ.

24. **ຄວາມສຳພັນກັບໂຮງຮຽນ** - ໄວໜຸ່ມມີຄວາມຫ່ວງໃຍກ່ຽວກັບໂຮງຮຽນຂອງພວກເຂົາ.

25. **ການອ່ານເພື່ອຄວາມສຸກ** - ໄວໜຸ່ມອ່ານເພື່ອຄວາມສຸກ ສາມຊົ່ວໂມງ ຫຼື ຫຼາຍກວ່ານັ້ນ ຕໍ່ອາທິດ.

26. **ມີຄວາມເມດຕາ** - ໄວໜຸ່ມ ເຫັນຄຸນຄ່າສູງໃນການຊ່ວຍເຫຼືອຄົນອື່ນ.

27. **ຄວາມສະເໝີພາບ ແລະ ຄວາມຍຸດຕິທຳໃນສັງຄົມ** - ໄວໜຸ່ມເຫັນຄຸນຄ່າສູງໃນການສົ່ງເສີມຄວາມສະເໝີພາບ ແລະ ການຫຼຸດຜ່ອນຄວາມອຶດຫິວ ແລະ ຄວາມທຸກຍາກ.

28. **ຄວາມຊື່ສັດ** - ໄວໜຸ່ມ ປະຕິບັດຕາມ ການຕັດສິນຄວາມຜິດ ແລະ ສະໜັບສະໜູນປົກປ້ອງຄວາມເຊື່ອຂອງພວກເຂົາ.

29. **ຄວາມສຸດຈະຫຼິດ** - ໄວໜຸ່ມ "ເວົ້າຄວາມຈິງ ເຖິງແມ່ນວ່າ ມັນບໍ່ງ່າຍທີ່ຈະເວົ້າອອກມາ".

30. **ຄວາມຮັບຜິດຊອບ** - ໄວໜຸ່ມ ຍອມຮັບ ແລະ ມີຄວາມຮັບຜິດຊອບ ດ້ວຍຕົນເອງ.

31. **ການຢັບຢັ້ງໃຈ** - ໄວໜຸ່ມ ເຊື່ອວ່າມັນມີຄວາມສຳຄັນທີ່ ບໍ່ຕ້ອງມີຄວາມຫ້າວຫັນດ້ານເພດສຳພັນ ຫຼື ບໍ່ດື່ມເຫຼົ້າ ຫຼືບໍ່ໃຊ້ສານເສບຕິດອື່ນໆ.

32. **ການວາງແຜນ ແລະ ການຕັດສິນໃຈ** - ໄວໜຸ່ມຮູ້ ວິທີການວາງແຜນລ່ວງໜ້າ ແລະ ຄັດເລືອກ.

33. **ຄວາມສາມາດໃນການພົວພັນກັບບຸກຄົນ** - ໄວໜຸ່ມ ມີທັກສະ ໃນການເຂົ້າອົກເຂົ້າໃຈຄົນອື່ນ, ດ້ານຄວາມສະດຸ້ງໄວ ແລະ ດ້ານມິດຕະພາບ.

34. **ຄວາມສາມາດດ້ານວັດທະນະທຳ** - ໄວໜຸ່ມ ມີຄວາມຮູ້ ແລະ ມີຄວາມສະດວກສະບາຍ ກັບ ບຸກຄົນທີ່ມີວັດທະນະທຳ/ເຊື້ອຊາດ/ຊົນເຜົ່າທີ່ແຕກຕ່າງກັນ.

35. **ທັກສະໃນການຕ້ານທານ** - ໄວໜຸ່ມ ສາມາດຕ້ານທານ ຄວາມກົດດັນດ້ານລົບຈາກໝູ່ຄູ່ ແລະ ສະພາບການທີ່ອັນຕະລາຍ.

36. **ການແກ້ໄຂຂໍ້ຂັດແຍ່ງແບບສັນຕິ** - ໄວໜຸ່ມ ຊອກຫາວິທີເພື່ອແກ້ໄຂຂໍ້ຂັດແຍ່ງໂດຍບໍ່ໃຊ້ຄວາມຮຸນແຮງ.

37. **ພະລັງອຳນາດສ່ວນຕົວ** - ໄວໜຸ່ມຮູ້ສຶກວ່າຕົນເອງ ມີສາມາດຄວບຄຸມ "ສິ່ງທີ່ເກີດຂຶ້ນກັບຕົນເອງ".

38. **ການເຄົາລົບນັບຖືຕົນເອງ** - ໄວໜຸ່ມລາຍງານວ່າ ມີຄວາມເຄົາລົບນັບຖືຕົນເອງສູງ.

39. **ຄວາມຮູ້ສຶກກ່ຽວກັບເປົ້າໝາຍ** - ໄວໜຸ່ມລາຍງານວ່າ "ຊີວິດຂອງພວກເຂົາມີເປົ້າໝາຍ".

40. **ທັດສະນະດີ ກ່ຽວກັບອະນາຄົດສ່ວນຕົວ** - ໄວໜຸ່ມເບິ່ງໂລກໃນແງ່ດີ ກ່ຽວກັບອະນາຄົດສ່ວນຕົວ.

ໜ້ານີ້ ອາດຈະຜະລິດຊ້ຳຄືນໄດ້ ເພື່ອການນຳໃຊ້ດ້ານການສຶກສາທີ່ບໍ່ເປັນຮູບແບບການຄ້າເທົ່ານັ້ນ. ລິຂະສິດ© 1997, 2006 ໂດຍສະຖາບັນ ເຊີດຈ໌, 615 ຖະໜົນ First Avenue N.E., ຫ້ອງ 125, ມິນີອາໂປລິສ໌, MN 55413; 800-888-7828; www.search-institute.org. ຈົດລິຂະສິດທັງໝົດ. ສິ່ງຕໍ່ໄປນີ້ ແມ່ນຂຶ້ນທະບຽນເຄື່ອງໝາຍການຄ້າ ຂອງສະຖາບັນ ເຊີດຈ໌: ສະຖາບັນ ເຊີດຈ໌®, ຊັບສິນດ້ານການພັດທະນາ® ແລະ ຊຸມຊົນທີ່ດີ • ໄວໜຸ່ມທີ່ດີ®.

## IS 1b: ບັນຊີກວດກາ: ກອງປະຊຸມ SNYC

ບັນດາກຸ່ມຄົນດັ່ງຕໍ່ໄປນີ້ ຄວນຖືກເຊີນເຂົ້າຮ່ວມ ກອງປະຊຸມ SNYC:

- ພໍ່ແມ່/ຜູ້ປົກຄອງ
- ໄວໜຸ່ມ (ຜູ້ເຂົ້າຮ່ວມ SNYC ໃນອະນາຄົດ)
- ຜູ້ປົກປ້ອງທີ່ສຳຄັນ ຂອງຊຸມຊົນ (ສະມາຊິກຊຸມຊົນ ທີ່ມີຄວາມສົນໃຈໃນການຊ່ວຍເຫຼືອ SNYC ແລະ ເຊິ່ງການສະໜັບສະໜູນຊ່ວຍເຫຼືອຂອງພວກເຂົາ ຈະຊຸກຍູ້ໃຫ້ ພໍ່ແມ່/ຜູ້ປົກຄອງ ສົ່ງລູກຫຼານຂອງພວກເຂົາເຂົ້າຮ່ວມສະໂມສອນ).

| ຮັບປະກັນວ່າ ບັນດາບາດກ້າວລຸ່ມນີ້ ໄດ້ຖືກປະຕິບັດບັນລຸຜົນຢູ່ໃນກອງປະຊຸມ SNYC | ✔ |
|---|---|
| ໃຫ້ການສະຫຼຸບສັງລວມກ່ຽວກັບເນື້ອໃນຂອງເຄື່ອງມື ແກ່ຜູ້ມີສ່ວນຮ່ວມ. | |
| ຕັດສິນໃຈ ຖ້າຫາກ ມີຫົວຂໍ້ໃດໜຶ່ງທີ່ ພໍ່ແມ່ ຫຼື ໄວໜຸ່ມຄິດວ່າບໍ່ເໝາະສົມ ສຳລັບກຸ່ມອາຍຸນີ້ ຫຼື ຄວນຈະສອນໃຫ້ພຽງທີ່ໄວໜຸ່ມທີ່ອາຍຸສູງກວ່ານີ້ເທົ່ານັ້ນ. | |
| ກຳນົດ ຕາຕະລາງສຳລັບກຸ່ມ. ຄວາມຕ້ອງການ ແລະ ຕາຕະລາງ ຂອງໄວໜຸ່ມ ຄວນເປັນສິ່ງສຳຄັນ ແລະ ຄວນເປັນສິ່ງຕັດສິນຕາຕະລາງ. | |
| ລະບຸຄູ່ຮ່ວມງານຢູ່ໃນຊຸມຊົນ. ຍົກຕົວຢ່າງ, ອົງການ NGO ທີ່ສາມາດ ສະໜອງການຝຶກອົບຮົມທີ່ກ່ຽວຂ້ອງເພີ່ມເຕີມ ຫຼື ກຸ່ມໄວໜຸ່ມທີ່ມີຢູ່ແລ້ວ. | |
| ພໍ່ແມ່/ຜູ້ປົກຄອງ ເຊັນໃບຍິນຍອມ ເພື່ອອະນຸຍາດໃຫ້ລູກຫຼານຂອງພວກເຂົາເຂົ້າຮ່ວມການຝຶກອົບຮົມເຄື່ອງມືການນຳທາງແບບສະຫຼາດ ແລະ ການປະເມີນຄວາມສ່ຽງ. | |

## IS 1c: Checklist: Good Adult SNYC Facilitators

World Vision Staff can use this checklist to help identify good SNYC facilitators.

| Preferred qualities for an adult SNYC facilitator | Yes | No |
|---|---|---|
| Has sufficient time in their schedule to prepare for and run SNYC for a year | | |
| Gets along well with youth – a person who can build relationships with youth | | |
| Experience or training working with youth | | |
| Able to work with various members of the community | | |
| Liked or respected by members of the community | | |
| A role model that youth can look up to | | |
| A high level of commitment to facilitating the SNYC | | |
| Can motivate youth to attend | | |
| Responsible enough to prepare for the sessions | | |
| A person who will follow World Vision's child protection policy | | |
| A compassionate person, who does not judge others | | |
| Has never physically or sexually abused a child (ensure you have conducted a background check) | | |

## IS 1d: ບັນຊີກວດກາ: ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກທີ່ດີ ຂອງ SNYC

| ຄຸນນະພາບທີ່ຕ້ອງການ ສຳລັບໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກທີ່ດີ | ແມ່ນ | ບໍ່ແມ່ນ |
|---|---|---|
| ໄວໜຸ່ມທີ່ໄດ້ຮັບຄວາມນິຍົມ | | |
| ເປັນແບບຢ່າງທີ່ດີ | | |
| ສຸພາບ ແລະ ບໍ່ຂົ່ມເຫງ ຫຼື ເຍາະເຍີ້ຍຜູ້ອື່ນ | | |
| ມີປະສົບການເປັນອາສາສະໝັກມາກ່ອນ | | |
| ໄວໜຸ່ມທີ່ ມີເວລາພຽງພໍ ສຳລັບເຂົ້າຮ່ວມທຸກບົດຮຽນ; ຕ້ອງລະວັງວ່າ ບໍ່ເລືອກໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກ ທີ່ເຮັດວຽກຫຼາຍລົ້ນມື ເພື່ອສະໜັບສະໜູນຊ່ວຍເຫຼືອຄອບຄົວຂອງລາວ | | |
| ໄວໜຸ່ມທີ່ ສາມາດອ່ານໄດ້ | | |
| ໄວໜຸ່ມທີ່ມາຈາກວັດທະນະທຳດຽວກັນກັບ ຜູ້ເຂົ້າຮ່ວມ; ຕົວຢ່າງເຊັ່ນ: ຖ້າຫາກຜູ້ເຂົ້າຮ່ວມແມ່ນຜູ້ເຄື່ອນຍ້າຍມາຈາກພະມ້າ, ໃຫ້ເລືອກໄວໜຸ່ມ ທີ່ເປັນຜູ້ເຄື່ອນຍ້າຍມາຈາກພະມ້າຄືກັນ | | |

## IS 1e: ບັນຊີກວດກາ: ໄວໜຸ່ມທີ່ຢູ່ໃນພາວະສ່ຽງ

| ບັນດາຜູ້ເຂົ້າຮ່ວມ SNYC ຄວນມາຈາກ | ແມ່ນ | ບໍ່ແມ່ນ |
|---|---|---|
| ໄວໜຸ່ມ ທີ່ບໍ່ສາມາດ ເຂົ້າໂຮງຮຽນໄດ້ ຫຼື ເຂົ້າເປັນບາງຄັ້ງ ແບບດົນໆເທື່ອໜຶ່ງ | | |
| ໄວໜຸ່ມ ທີ່ຮ່າງກາຍພິການ | | |
| ໄວໜຸ່ມ ຊົນເຜົ່າ | | |
| ຈຳນວນເທົ່າກັນລະຫວ່າງຍິງຊາຍ | | |
| ໄວໜຸ່ມ ທີ່ຖືກລະບຸວ່າ ເປັນຜູ້ທີ່ຢູ່ໃນພາວະສ່ຽງ | | |
| ໄວໜຸ່ມ ທີ່ມີ ເອື້ອຍອ້າຍນ້ອງ ອາຍຸຕ່ຳກວ່າ 21 ປີທີ່ເຄື່ອນຍ້າຍ ຫຼື ເລີ່ມຕົ້ນເຮັດວຽກແລ້ວ | | |
| ໄວໜຸ່ມ ທີ່ມີ ເອື້ອຍອ້າຍນ້ອງ ອາຍຸຕ່ຳກວ່າ 21 ປີທີ່ໄປເຮັດວຽກແລ້ວ | | |
| ໄວໜຸ່ມ ທີ່ບໍ່ມີປະເທດ/ບໍ່ມີສັນຊາດ | | |
| SNYC ບໍ່ຈຳແນກ ສາດສະໜາ; ໄວໜຸ່ມ ທີ່ເປັນສະມາຊິກຂອງ ສາດສະໜາຕ່າງໆ ຫຼື ບໍ່ມີສາດສະໜາ ສາມາດເຂົ້າຮ່ວມ SNYC | | |

## IS 1f: ບັນຊີກວດກາ: ສະຖານທີ່ຂອງ SNYC

| ຄຸນນະພາບດີທີ່ສຸດ ສຳລັບສະຖານທີ່ຂອງສະໂມສອນໄວໜຸ່ມ | ແມ່ນ | ບໍ່ແມ່ນ |
|---|---|---|
| ກວ້າງພຽງພໍ ຢ່າງນ້ອຍ ສຳລັບຜູ້ເຂົ້າຮ່ວມ 25 ຄົນ | | |
| ປ້ອງກັນ ແດດ ແລະ ຝົນ | | |
| ຢ່າງນ້ອຍມີ ຝາໜຶ່ງດ້ານ ເພື່ອຫ້ອຍຮູບ ແລະ ເຈັ້ຍແຜ່ນໃຫຍ່ ໃນເວລາຮຽນ | | |
| ເນື້ອທີ່ສຳລັບ ບັນດາຜູ້ເຂົ້າຮ່ວມນັ່ງເປັນວົງຢູ່ກັບພື້ນ ເພື່ອຫຼິ້ນເກມອຸ່ນເຄື່ອງ (ໂຕະ ແລະ ຕັ່ງແມ່ນບໍ່ຈຳເປັນ, ແຕ່ວ່າມັນກໍ່ບໍ່ເປັນບັນຫາ ຖ້າວ່າຢູ່ໃນຫ້ອງມີໂຕະແລະຕັ່ງ, ຖ້າຫາກວ່າມີເນື້ອທີ່ສຳລັບນັ່ງກັບພື້ນ) | | |
| ສະຖານທີ່ ເຊິ່ງໄວໜຸ່ມສາມາດເວົ້າ ແບບເປີດເຜີຍ ໂດຍປາດສະຈາກການລັກຟັງ ຈາກຄົນອື່ນທີ່ຢູ່ນອກສະໂມສອນ | | |
| ສະຖານທີ່ ເຊິ່ງບັນດາຜູ້ເຂົ້າຮ່ວມ ຮູ້ສຶກສະດວກສະບາຍ ແລະ ໄດ້ຮັບການຕ້ອນຮັບ | | |

# ບົດຮຽນທີ 2: ການປະເມີນຄວາມສ່ຽງຂອງການເຂົ້າຮ່ວມຂອງໄວໜຸ່ມ

ຈຸດປະສົງຂອງບົດຮຽນນີ້ ແມ່ນເພື່ອປະເມີນ ໄພຂົ່ມຂູ່ ແລະ ພາວະສ່ຽງຂອງໄວໜຸ່ມ ທີ່ມີສ່ວນຮ່ວມຢູ່ໃນສະໂມສອນໄວໜຸ່ມ. ພະນັກງານອົງການສຸພະນິມິດ, ໂດຍການຊ່ວຍເຫຼືອ ຈາກ ຜູ້ໃຫຍ່ທີ່ເປັນຜູ້ ອໍານວຍຄວາມສະດວກ SNYC, ຄວນດໍາເນີນການປະເມີນຄວາມສ່ຽງ ຢູ່ໃນຕອນເລີ່ມຕົ້ນຂອງແຕ່ລະ ສະໂມສອນ. ບາດກ້າວສໍາລັບການດໍາເນີນ ມີດັ່ງລຸ່ມນີ້:

ການປະເມີນຄວາມສ່ຽງ ແລະ ຂັ້ນຕອນການຫຼຸດຜ່ອນ ຈະຊ່ວຍໃຫ້ບັນລຸບັນດາຈຸດປະສົງດັ່ງຕໍ່ໄປນີ້:

1. ລະບຸຄວາມສ່ຽງທີ່ອາດເປັນໄປໄດ້ ທີ່ມີຕໍ່ໄວໜຸ່ມ ທີ່ເຂົ້າຮ່ວມ ສະໂມສອນໄວໜຸ່ມການນໍາທາງແບບສະຫຼາດ.
2. ສ້າງແຜນການຫຼຸດຜ່ອນຄວາມສ່ຽງ.

ບັນດາກິດຈະກໍາເຫຼົ່ານີ້ ຈຸດໜັກຈະປະເມີນຄວາມສ່ຽງທີ່ກ່ຽວຂ້ອງກັບສາມຂົງເຂດສໍາຄັນຂອງຊີວິດຂອງໄວໜຸ່ມດັ່ງຕໍ່ໄປນີ້:

- ການພັດທະນາດ້ານການສຶກສາ: ຜົນກະທົບຕໍ່ການສຶກສາຂອງໄວໜຸ່ມ, ເຊິ່ງລວມທັງການເຂົ້າຮຽນ ແລະ ວຽກ ບ້ານ.
- ການພັດທະນາດ້ານສັງຄົມ: ຜົນກະທົບຕໍ່ສາຍພົວພັນຂອງໄວໜຸ່ມກັບ ໄວໜຸ່ມຜູ້ອື່ນໆ, ໄວໜຸ່ມ ແລະ ຜູ້ໃຫຍ່ ຢູ່ໃນຄອບຄົວ ແລະ ຊຸມຊົນຂອງພວກເຂົາ, ເຊິ່ງລວມທັງການຈໍາແນກຈາກໄວໜຸ່ມຜູ້ອື່ນ ທີ່ບໍ່ເຫັນດີກັບການເຂົ້າຮ່ວມຂອງໄວໜຸ່ມຜູ້ດັ່ງກ່າວ.
- ການຮັກສາຄວາມປອດໄພ: ຜົນກະທົບຕໍ່ ຄວາມປອດໄພສ່ວນຕົວຂອງໄວໜຸ່ມ ໃນຂະນະທີ່ເຂົ້າຮ່ວມກິດຈະກໍາຂອງສະໂມສອນ, ເຊິ່ງລວມທັງໄພຂົ່ມຂູ່ຈາກຜູ້ຄ້າມະນຸດທາງເພດ ແລະ ແຮງງານ.

ມັນສໍາຄັນທີ່ສຸດທີ່ ເຄື່ອງມືການປະເມີນຄວາມສ່ຽງ ໄດ້ຖືກນໍາໃຊ້ໂດຍອີງໃສ່ການປະຕິບັດ ດ້ານຈັນຍາບັນທີ່ຖືກຕ້ອງ ແລະ ຖືກຍອມຮັບໂດຍທົ່ວໄປ, ເພື່ອວ່າ ຜົນກະທົບທາງລົບທຸກຢ່າງທີ່ອາດເປັນໄປໄດ້ຕໍ່ໄວໜຸ່ມໄດ້ຖືກກວມເອົາ ແລະ ໄດ້ຖືກເນັ້ນໃສ່ຢ່າງມີປະສິດທິພາບ.

ໂດຍອີງໃສ່ສິ່ງດັ່ງກ່າວ, ຄວນປະຕິບັດຕາມບັນດາຄໍາແນະນໍາດັ່ງຕໍ່ໄປນີ້:

1. ກ່ອນຈະເລີ່ມດໍາເນີນບົດຮຽນດັ່ງກ່າວ ຕ້ອງໄດ້ການຍິນຍອມເປັນລາຍລັກອັກສອນ ຈາກພໍ່ແມ່ ຫຼື ຜູ້ດູແລຂອງໄວໜຸ່ມ ເຊິ່ງອະນຸຍາດໃຫ້ໄວໜຸ່ມ ເຂົ້າຮ່ວມຂັ້ນຕອນການປະເມີນຄວາມສ່ຽງ. ອະທິບາຍວ່າຈຸດປະສົງຂອງການປະເມີນຄວາມສ່ຽງ ແມ່ນເພື່ອຊ່ວຍໃຫ້ໄວໜຸ່ມເຂົ້າໃຈ ກ່ຽວກັບຄວາມປອດໄພຂອງພວກເຂົາເອງ ແລະ ເພື່ອຊ່ວຍໃຫ້ ອົງການສຸພະນິມິດ ປັບປຸງ ການສະໜັບສະໜູນຊ່ວຍເຫຼືອຂອງພວກເຂົາຕໍ່ບັນດາຜູ້ເຂົ້າຮ່ວມສະໂມສອນໄວໜຸ່ມ.
2. ແຈ້ງໃຫ້ບັນດາຜູ້ເຂົ້າຮ່ວມຮູ້ກ່ຽວກັບຈຸດປະສົງ ຂອງການປະເມີນ ແລະ ຜົນຂອງມັນຈະຖືກນໍາໃຊ້ແນວໃດ.
3. ຮັບປະກັນກັບບັນດາຜູ້ເຂົ້າຮ່ວມວ່າ ຜົນໄດ້ຮັບຂອງການປະເມີນ ຈະຮັກສາເປັນຄວາມລັບ ແລະ ພວກເຂົາບໍ່ຈໍາເປັນຕ້ອງຕອບຄໍາຖາມທີ່ ເຮັດໃຫ້ພວກເຂົາຮູ້ສຶກບໍ່ສະດວກ.
4. ແຈ້ງໃຫ້ບັນດາຜູ້ເຂົ້າຮ່ວມຮູ້ວ່າ ບາງຂໍ້ມູນສ່ວນຕົວຈະຖືກຖາມໃນລະຫວ່າງຂັ້ນຕອນການປະເມີນຄວາມສ່ຽງ. ຖ້າບັນດາຜູ້ເຂົ້າຮ່ວມບໍ່ສະດວກ ກັບບັນດາຄໍາຖາມເຫຼົ່ານີ້, ບັນດາຄໍາຖາມດັ່ງກ່າວຄວນຖືກຂ້າມໄປທັງໝົດ.

5. ໃນລະຫວ່າງຂັ້ນຕອນການປະເມີນຄວາມສ່ຽງ ປະຕິກິລິຍາຂອງບັນດາຜູ້ເຂົ້າຮ່ວມ ຄວນຖືກຕິດຕາມຢ່າງໃກ້ຊິດ. ຖ້າຫາກໃນເວລາໃດໜຶ່ງ ໄວໜຸ່ມມີຄວາມໂສກເສົ້າ ຫຼື ເສຍໃຈ, ໃຫ້ຂ້າມຄຳຖາມທັນທີ ຫຼື, ຖ້າຈຳເປັນ, ຢຸດຕິຂັ້ນຕອນທັງໝົດ. ມັນສຳຄັນທີ່ຕ້ອງພົບກັບຜູ້ເຂົ້າຮ່ວມໄວເທົ່າທີ່ເປັນໄປໄດ້ ເພື່ອສົນທະນາ ກ່ຽວກັບປະຕິກິລິຍາຂອງລາວ ແລະ ສະໜອງການຊ່ວຍເຫຼືອດ້ານຈິດໃຈ ຕາມຄວາມເໝາະສົມ - ເຊິ່ງລວມທັງການສົ່ງຕໍ່ໃຫ້ຜູ້ໃຫ້ຄຳປຶກສາທີ່ໄດ້ຜ່ານການຝຶກອົບຮົມ ຖ້າຈຳເປັນ. ໂດຍອີງໃສ່ນະໂຍບາຍປົກປ້ອງເດັກຂອງອົງການສຸພະນິມິດ , ສະພາບ ຫຼື ເຫດການຂອງການທາລຸນ ທີ່ໄດ້ຮັບການແລກປ່ຽນແບ່ງປັນ ຄວນໄດ້ຮັບການລາຍງານທັນທີ.

# ການປະເມີນຄວາມສ່ຽງ

## ຈຸດປະສົງ

ເພື່ອປະເມີນ ລະດັບຄວາມສ່ຽງ ຂອງຜູ້ເຂົ້າຮ່ວມແຕ່ລະຄົນ ແລະ ຂອງກຸ່ມເພື່ອເຂົ້າຮ່ວມສະໂມສອນໄວໜຸ່ມ.

## ເວລາ

45 ນາທີ

## ອຸປະກອນ

- ເຈ້ຍແຜ່ນໃຫຍ່
- ເຈ້ຍບັນທຶກທີ່ຕິດໄດ້
- ສໍດຳ
- ຖ່າຍສຳເນົາເອກະສານລຸ່ມນີ້ ສຳລັບຜູ້ເຂົ້າຮ່ວມທຸກຄົນ:
  - » IS2a: ແບບຟອມການຍິນຍອມ ສຳລັບໄວໜຸ່ມທີ່ເປັນຜູ້ເຂົ້າຮ່ວມ
  - » IS2b: ແບບຟອມການຍິນຍອມ ສຳລັບ ພໍ່ແມ່ ຫຼື ຜູ້ປົກຄອງ ຂອງໄວໜຸ່ມທີ່ເປັນຜູ້ເຂົ້າຮ່ວມ
  - » IS2c: ເຄື່ອງມືການປະເມີນຄວາມສ່ຽງ

## ບັນດາຜູ້ເຂົ້າຮ່ວມ

ບັນດາຜູ້ເຂົ້າຮ່ວມ ສະໂມສອນ SNYC

## ຜູ້ອຳນວຍຄວາມສະດວກ

ພະນັກງານພາຍໃນປະເທດຂອງອົງການສຸພະນິມິດ ທີ່ເຂົ້າຮ່ວມການຝຶກອົບຮົມ ETIP SNYC

*ເອົາໃຈໃສ່: ກ່ອນຈະເລີ່ມຕົ້ນບົດຮຽນນີ້, ຮັບປະກັນວ່າ ພໍ່ແມ່ ຫຼື ຜູ້ປົກຄອງ ຂອງໄວໜຸ່ມທີ່ເປັນຜູ້ເຂົ້າຮ່ວມແຕ່ລະຄົນ ຕ້ອງໄດ້ເຊັນ 'IS 2b: ແບບຟອມການຍິນຍອມ ສຳລັບ ພໍ່ແມ່ ຫຼື ຜູ້ປົກຄອງ ຂອງໄວໜຸ່ມທີ່ເປັນຜູ້ເຂົ້າຮ່ວມ'.*

## ກິດຈະກຳ

ຍິນດີຕ້ອນຮັບເດັກນ້ອຍ ເຂົ້າສູ່ບົດຮຽນ. ອະທິບາຍວ່າ ມື້ນີ້ ພວກເຮົາຈະຄິດກ່ຽວກັບວິທີທີ່ຈະຮັບປະກັນວ່າ ໄວໜຸ່ມ ສາມາດເຂົ້າຮ່ວມສະໂມສອນ ໂດຍປາດສະຈາກການທົນທຸກທໍລະມານກັບຜົນຕອບແທນທາງລົບ.

ຢາຍແບບຟອມຄວາມຍິນຍອມ. ອ່ານແບບຟອມດັ່ງໆ ແລະ ບອກບັນດາຜູ້ເຂົ້າຮ່ວມອ່ານ ແລະ ເຊັນແບບຟອມ. ຖ້າຫາກເດັກນ້ອຍບໍ່ສາມາດອ່ານໄດ້, ເຈົ້າສາມາດອ່ານແບບຟອມໃຫ້ເຂົາເປັນບຸກຄົນ ແລະ ຫຼັງຈາກນັ້ນໃນຕອນທ້າຍ ຖາມຄວາມເຫັນຈາກພວກເຂົາເພື່ອຂຽນຊື່ຂອງພວກເຂົາໃສ່.

ບອກເດັກນ້ອຍໃຫ້ຈັດກຸ່ມ 6–8 ຄົນ. ຢາຍເຈັ້ຍແຜ່ນໃຫຍ່ໃຫ້ແຕ່ລະກຸ່ມ. ອະທິບາຍວ່າ ມື້ນີ້ ພວກເຮົາຈະພະຍາຍາມ ຄາດລ່ວງໜ້າບັນດາຄວາມສ່ຽງທີ່ອາດເປັນໄປໄດ້ ຂອງການເຂົ້າຮ່ວມ ສະໂມສອນໄວໜຸ່ມ. ອະທິບາຍວ່າ ບາດກ້າວທຳອິດ ແມ່ນການຄິດກ່ຽວກັບ ຄວາມສ່ຽງທີ່ກ່ຽວຂ້ອງກັບການສຶກສາ.

ເລີ່ມຕົ້ນດ້ວຍການອະທິບາຍ ຄຳນິຍາມຂອງຄວາມສ່ຽງ. ຄວາມສ່ຽງແມ່ນສະພາບທີ່ກ່ຽວຂ້ອງກັບການປະເຊີນກັບອັນຕະລາຍ. ອະທິບາຍວ່າ ຄວາມສ່ຽງທີ່ເປັນໄປໄດ້ ທີ່ອາດຈະເກີດຂຶ້ນ ຈາກການເຂົ້າຮ່ວມສະໂມສອນໄວໜຸ່ມ ສາມາດຮວມເປັນສາມໝວດ ຄື: (1) ຄວາມສ່ຽງຕໍ່ ການສຶກສາ ຫຼື ວຽກຂອງພວກເຮົາ, (2) ຄວາມສ່ຽງ ຕໍ່ກັບສາຍພົວພັນໃນຊຸມຊົນ, ແລະ (3) ຄວາມສ່ຽງຕໍ່ຄວາມປອດໄພສ່ວນຕົວຂອງພວກເຮົາ.

ເອົາໃຈໃສ່: ສະມາຊິກ ສະໂມສອນບາງຄົນ ອາດຈະບໍ່ເຂົ້າໂຮງຮຽນ ແລະ ໄປເຮັດວຽກ ເຕັມເວລາ ຫຼື ບາງເວລາ. ອະທິບາຍວ່າ ເຖິງແມ່ນວ່າ ຄວາມສ່ຽງສະເພາະໃດໜຶ່ງ ບໍ່ໄດ້ເກີດຂຶ້ນໃນອະດີດຜ່ານມາ, ມັນບໍ່ໄດ້ໝາຍຄວາມວ່າມັນບໍ່ແມ່ນຄວາມສ່ຽງ ຫຼື ຄວາມສ່ຽງທີ່ເກີດຂຶ້ນຊ້ຳ.

ອະທິບາຍວ່າ ພວກເຂົາຈະໄດ້ສ້າງແຜນວາດແນວຄວາມຄິດ ກ່ຽວກັບຄວາມສ່ຽງທີ່ເປັນໄປໄດ້ຕໍ່ກັບການສຶກສາ. ບອກໃຫ້ໄວໜຸ່ມ ແຕ້ມວົງມົນ ໃສ່ໃຈກາງຂອງເຈັ້ຍແຜ່ນໃຫຍ່. ໄວໜຸ່ມຄວນຂຽນຄວາມສ່ຽງທີ່ເປັນໄປໄດ້ຕໍ່ການສຶກສາ ໃສ່ເຈັ້ຍບັນທຶກທີ່ຕິດໄດ້ ແລະ ຕິດໃສ່ໃນໃຈກາງຂອງວົງມົນ.

ໃນເວລາທີ່ພວກເຂົາເຮັດວຽກ, ອ່ານລາຍການຄຳຖາມລຸ່ມນີ້ ເພື່ອກະຕຸ້ນພວກເຂົາໃຫ້ພິຈາລະນາກ່ຽວກັບຄວາມສ່ຽງຕ່າງໆ. ອະທິບາຍວ່າ ຖ້າພວກເຂົາຄິດວ່າ ຄຳຕອບຂອງຄຳຖາມດັ່ງກ່າວນີ້ແມ່ນ "ບໍ່, ບໍ່ມີຄວາມສ່ຽງ", ພວກເຂົາບໍ່ຄວນລວມເອົາໃສ່ໃນແຜນວາດແນວຄວາມຄິດ. ຖ້າຫາກພວກເຂົາ ຄິດວ່າມີຄວາມສ່ຽງ, ພວກເຂົາຄວນຂຽນ ຄຳຕອບເຕັມ ໃສ່ເຈັ້ຍບັນທຶກທີ່ຕິດໄດ້ ແລະ ຕິດໃສ່ແຜນວາດແນວຄວາມຄິດ. ຕົວຢ່າງເຊັ່ນ: "ຄວາມສ່ຽງຕໍ່ການຂາດໂຮງຮຽນ ຍ້ອນການເຂົ້າຮ່ວມສະໂມສອນໄວໜຸ່ມ".

### ຄຳຖາມ

ເຈົ້າຄິດວ່າ ການເຂົ້າຮ່ວມສະໂມສອນຈະ:

- ເຮັດໃຫ້ເຈົ້າຂາດໂຮງຮຽນບໍ່?
- ເຮັດໃຫ້ເຈົ້າອອກໂຮງຮຽນບໍ່?
- ເຮັດໃຫ້ເຈົ້າບໍ່ສາມາດ ເຮັດວຽກບ້ານໃຫ້ແລ້ວບໍ່?
- ເຮັດໃຫ້ເຈົ້າຮຽນຢູ່ໃນຫ້ອງ ບໍ່ທັນໝູ່ບໍ່?
- ເຮັດໃຫ້ນັກຮຽນຜູ້ອື່ນ ດູຖູກເຈົ້າ ຫຼື ວ່າໃຈຮ້າຍໃສ່ເຈົ້າບໍ່?
- ເຮັດໃຫ້ຄູສອນ ດູຖູກເຈົ້າ ຫຼື ວ່າໃຈຮ້າຍໃສ່ເຈົ້າບໍ່?
- ຖ້າເຈົ້າເຮັດວຽກ, ມັນຈະເຮັດໃຫ້ເຈົ້າຂາດວຽກ ແລະ ຫຼຸດລາຍໄດ້ຂອງເຈົ້າບໍ່?

ຕໍ່ໄປ, ຢາຍເຈ້ຍແຜ່ນໃຫຍ່ ອີກແຜ່ນໜຶ່ງໃຫ້ແຕ່ລະກຸ່ມ ແລະ ບອກໃຫ້ກຸ່ມ ສ້າງແຜ່ນວາດແນວຄວາມຄິດແຜ່ນທີ່ສອງ ໂດຍການແຕ້ມວົງມົນໃຫຍ່ໃສ່ເຈ້ຍແຜ່ນໃຫຍ່. ອະທິບາຍວ່າ ບາດນີ້ ພວກເຮົາຈະຕີລາຄາຄວາມສ່ຽງ ທີ່ກ່ຽວຂ້ອງກັບສາຍພົວພັນຢູ່ໃນຊຸມຊົນຂອງພວກເຮົາ. ເຕືອນພວກເຂົາວ່າ ແຕ່ລະຄວາມສ່ຽງຄວນຂຽນລົງໃສ່ເຈ້ຍບັນທຶກທີ່ຕິດໄດ້ ແລະ ເອົາຕິດໃສ່ວົງມົນ.

ໃນເວລາທີ່ພວກເຂົາເຮັດວຽກ, ອ່ານລາຍການຄໍາຖາມລຸ່ມນີ້ ເພື່ອກະຕຸ້ນພວກເຂົາໃຫ້ພິຈາລະນາກ່ຽວກັບຄວາມສ່ຽງຕ່າງໆ. ເຕືອນພວກເຂົາວ່າ ຖ້າຫາກບໍ່ມີຄວາມສ່ຽງ, ພວກເຂົາບໍ່ຄວນຂຽນໃສ່ ແຜນວາດແນວຄວາມຄິດ. ຖ້າຫາກພວກເຂົາ ຄິດວ່າມີຄວາມສ່ຽງ ທີ່ພວກເຂົາຄວນກວມເອົາ, ພວກເຂົາຄວນຂຽນ ຄໍາຕອບເຕັມ ໃສ່ເຈ້ຍບັນທຶກທີ່ຕິດໄດ້ ແລະ ຕິດໃສ່ແຜນວາດແນວຄວາມຄິດ. ຕົວຢ່າງເຊັ່ນ: 'ຄວາມສ່ຽງກ່ຽວກັບ ຄົນຄິດວ່າ ເຈົ້າເປັນເດັກຊາຍ ຫຼື ເດັກຍິງທີ່ບໍ່ດີ'.

## ຄໍາຖາມ

ເຈົ້າຄິດວ່າ ການເຂົ້າຮ່ວມສະໂມສອນໄວໜຸ່ມຈະ:

- ເຮັດໃຫ້ຜູ້ຄົນໃນຊຸມຊົນຂອງເຈົ້າ ໃຈຮ້າຍກ່ຽວກັບເຈົ້າ ດັ່ງນັ້ນພວກເຂົາຈຶ່ງເວົ້າບໍ່ດີກ່ຽວກັບເຈົ້າ ບໍ່?
- ເຮັດໃຫ້ຜູ້ຄົນໃນຊຸມຊົນຂອງເຈົ້າ ໃຈຮ້າຍກ່ຽວກັບເຈົ້າ ດັ່ງນັ້ນພວກເຂົາຈຶ່ງ ພະຍາຍາມ ທໍາຮ້າຍເຈົ້າ ບໍ່?
- ເຮັດໃຫ້ຕໍາຫຼວດ, ຜູ້ນໍາບ້ານ ຫຼື ຜູ້ຄົນທີ່ກ່ຽວຂ້ອງກັບອາດສະຍາກໍາ ໃຈຮ້າຍກ່ຽວກັບເຈົ້າບໍ່?
- ເຮັດໃຫ້ພໍ່ແມ່ຂອງເຈົ້າ ໃຈຮ້າຍກ່ຽວກັບເຈົ້າບໍ່?
- ເຮັດໃຫ້ຜູ້ຄົນ ຄິດວ່າເຈົ້າເປັນເດັກຊາຍ ຫຼື ເດັກຍິງທີ່ບໍ່ດີບໍ່?
- ເຮັດໃຫ້ໄວໜຸ່ມຄົນອື່ນ ຮູ້ສຶກຄືວ່າ ພວກເຂົາ ຖືກແຍກອອກ ຫຼື ບໍ່ໄດ້ເຂົ້າຮ່ວມບໍ່?
- ເຮັດໃຫ້ໄວໜຸ່ມຄົນອື່ນອິດສາເຈົ້າບໍ່?

ສຸດທ້າຍ, ຖາມແຕ່ລະກຸ່ມ ໃຫ້ເອົາເຈ້ຍແຜ່ນໃຫຍ່ແຜ່ນທີສາມອອກມາ ແລະ ສ້າງແຜນວາດແນວຄວາມຄິດກ່ຽວກັບຄວາມສ່ຽງທີ່ກ່ຽວຂ້ອງກັບການຮັກສາຄວາມປອດໄພສ່ວນຕົວ. ເຕືອນພວກເຂົາວ່າແຕ່ລະຄວາມສ່ຽງຄວນຂຽນລົງໃສ່ເຈ້ຍບັນທຶກທີ່ຕິດໄດ້ ແລະ ເອົາຕິດໃສ່ວົງມົນ.

ອີກເທື່ອໜຶ່ງ, ໃນເວລາທີ່ພວກເຂົາເຮັດວຽກ, ອ່ານລາຍການຄໍາຖາມລຸ່ມນີ້ ເພື່ອກະຕຸ້ນພວກເຂົາໃຫ້ພິຈາລະນາກ່ຽວກັບຄວາມສ່ຽງຕ່າງໆ. ເຕືອນພວກເຂົາວ່າ ຖ້າຫາກບໍ່ມີຄວາມສ່ຽງ, ພວກເຂົາບໍ່ຄວນຂຽນໃສ່ແຜນວາດແນວຄວາມຄິດ.

## ຄໍາຖາມ

- ສະໂມສອນ ຫຼື ກິດຈະກໍາຂອງສະໂມສອນ ຕັ້ງຢູ່ໃນເຂດທີ່ອັນຕະລາຍບໍ່?
- ສະໂມສອນ ຫຼື ກິດຈະກໍາຂອງສະໂມສອນ ຕັ້ງຢູ່ ໄກຈາກເຮືອນເຈົ້າເກີນໄປບໍ່?
- ເຈົ້າຈະປະສົບກັບການເຂົ້າທໍາຮ້າຍຮ່າງກາຍ ໃນເວລາເດີນທາງເຂົ້າຮ່ວມສະໂມສອນບໍ່?
- ເຈົ້າຈະຖືກລະເມີດ ຫຼື ຂົ່ມຂູ່ ຍ້ອນວ່າເຈົ້າເຂົ້າຮ່ວມກິດຈະກໍາຂອງສະໂມສອນບໍ່?
- ມີຄວາມສ່ຽງຕໍ່ອາດຊະຍາກໍານ້ອຍໆ (ເຊັ່ນ ການປຸ້ນຈີ້) ໃນເວລາເດີນທາງ ຫຼື ຢູ່ໃນສະໂມສອນບໍ່?
- ມີຄວາມສ່ຽງຕໍ່ ການປຸ້ນຈີ້ລັດ ໃນເວລາເດີນທາງໄປສະໂມສອນບໍ່?
- ມີຄວາມສ່ຽງອື່ນບໍ່ ທີ່ເຈົ້າຕ້ອງການຕື່ມໃສ່?

ບາດກ້າວຕໍ່ໄປ ແມ່ນບອກໃຫ້ບັນດາຜູ້ເຂົ້າຮ່ວມ ເອົາຄວາມສ່ຽງໃສ່ ຕາຕະລາງ:

## ຕາຕະລາງ ຄວາມເປັນໄປໄດ້ ແລະ ຄວາມຮ້າຍແຮງ

| | ເປັນໄປໄດ້ສູງ | ເປັນໄປໄດ້ | ບໍ່ເປັນໄປໄດ້ |
|---|---|---|---|
| ຮ້າຍແຮງຫຼາຍ | | | |
| ຮ້າຍແຮງປານກາງ | | | |
| ຮ້າຍແຮງຕໍ່າ | | | |

ອະທິບາຍ ຄວາມໝາຍຂອງຄໍາສັບ ຄວາມເປັນໄປໄດ້ ດ້ວຍການອະທິບາຍວ່າ ເປັນໄປໄດ້ສູງ ທີ່ຄວາມສ່ຽງຈະເກີດຂຶ້ນ, ເປັນໄປໄດ້ທີ່ຈະເກີດຂຶ້ນ ຫຼື ບໍ່ເປັນໄປໄດ້ ທີ່ຈະເກີດຂຶ້ນ. ຫຼັງຈາກນັ້ນ ອະທິບາຍຄວາມໝາຍຂອງຄວາມຮ້າຍແຮງ ແລະ ຄວາມແຕກຕ່າງ ຂອງຄວາມຮ້າຍແຮງ ສູງ, ກາງ ແລະ ຕໍ່າ. ຄວາມຮ້າຍແຮງຖືກວັດແທກ ດ້ວຍຂະໜາດຄວາມຈິງຈັງ ຫຼື ຄວາມໂຫດຮ້າຍ ຂອງຄວາມສ່ຽງ ຢູ່ໃນບັນທັດຖານ ຄວາມສູງ, ກາງ ແລະ ຕໍ່າ.

ເມື່ອເຈົ້າໄດ້ອະທິບາຍ ຄວາມໝາຍຂອງ ຄວາມເປັນໄປໄດ້ ແລະ ຄວາມຮ້າຍແຮງ ແລ້ວ, ບອກໃຫ້ບັນດາຜູ້ເຂົ້າຮ່ວມ ຕິດຄວາມສ່ຽງທັງໝົດ ທີ່ພວກເຂົາຂຽນໃສ່ເຈ້ຍບັນທຶກທີ່ຕິດໄດ້ ໃສ່ໃນເຈ້ຍແຜ່ນໃຫຍ່ ໂດຍອີງໃສ່ຄວາມເປັນໄປໄດ້ທີ່ມັນອາດຈະເກີດຂຶ້ນ ແລະ ມັນຮ້າຍແຮງສໍ່າໃດ. ບັນດາຄວາມສ່ຽງທີ່ຮ້າຍແຮງທີ່ສຸດ ແລະເປັນໄປໄດ້ຫຼາຍທີ່ສຸດຈະຖືກຕິດໄວ້ ຢູ່ເທິງສຸດເບື້ອງຊ້າຍຂອງຕາຕະລາງ.

ເມື່ອບັນດາຜູ້ເຂົ້າຮ່ວມໄດ້ລະບຸວ່າ ຄວາມສ່ຽງໃດ ເປັນໄປໄດ້ສູງສຸດ ແລະ ຮ້າຍແຮງທີ່ສຸດ ແລ້ວ, ບາດກ້າວຕໍ່ໄປ ແມ່ນສ້າງແຜນຫຼຸດຜ່ອນ ສໍາລັບບັນດາຄວາມສ່ຽງ ທີ່ບັນດາຜູ້ເຂົ້າຮ່ວມຕິດໃສ່ ຫ້ອງສີສົ້ມ ແລະ ສີແດງ.

ເອົາເຈ້ຍບັນທຶກທີ່ຕິດໄດ້ ອອກຈາກ ຫ້ອງສີແດງ ແລະ ສີສົ້ມ ຂອງຕາຕະລາງ ແລະ ຕິດໃສ່ເຈ້ຍແຜ່ນໃຫຍ່ຕ່າງຫາກ. ເບິ່ງຄວາມສ່ຽງແຕ່ລະອັນ ທີ່ໄດ້ຖືກລະບຸແຍກກັນແຕ່ລະອັນ ແລະ ບອກບັນດາຜູ້ເຂົ້າຮ່ວມໃຫ້ຄິດກ່ຽວກັບວ່າ ພວກເຂົາຄວນເຮັດຫຍັງ ຖ້າພວກເຂົາປະເຊີນໜ້າກັບແຕ່ລະສະພາບຂອງຄວາມສ່ຽງ. ສົນທະນາ ແລະ ບັນທຶກ ແຜນ ສໍາລັບສິ່ງທີ່ຈະປ່ຽນແປງໃນການຈັດຕັ້ງປະຕິບັດ ກິດຈະກໍາທີ່ໄດ້ວາງແຜນໄວ້ແລ້ວເພື່ອຫຼຸດຜ່ອນຄວາມສ່ຽງເຫຼົ່ານັ້ນ. ເພື່ອບັນທຶກແຜນດັ່ງກ່າວນີ້, ຜູ້ອໍານວຍຄວາມສະດວກຮ່ວມກັບໄວໜຸ່ມສາມາດຕື່ມໃສ່ 'IS 2c: ເຄື່ອງມືການປະເມີນຄວາມສ່ຽງ'. ເມື່ອເຄື່ອງມື ປະເມີນຄວາມສ່ຽງຖືກຕື່ມສໍາເລັດ, ຮັບປະກັນວ່າ ມັນໄດ້ຖືກເກັບກໍາເຂົ້າແຟ້ມ ແລະ ທົບທວນຄືນ ໃນຕອນທ້າຍຂອງຮອບວຽນສະໂມສອນ. ຖ້າຫາກມີ ຄວາມສ່ຽງໃດໜຶ່ງທີ່ພົ້ນເດັ່ນ ທີ່ໄດ້ຖືກຍົກໃຫ້ເຫັນ ໃນລະຫວ່າງການຝຶກຫັດ, ມັນຈໍາເປັນທີ່ສຸດທີ່ຕ້ອງຖືກຍົກຂຶ້ນຫາ ພະນັກງານອົງການສຸພະນິມິດ ເພື່ອຕອບໂຕ້.



## IS 2a: ແບບຟອມການຍິນຍອມ ສຳລັບໄວໜຸ່ມທີ່ເປັນຜູ້ເຂົ້າຮ່ວມ

- ໃນ ບົດຮຽນພາກນີ້ ພວກເຮົາຈະສົນທະນາບັນຫາຢູ່ໃນຊີວິດຂອງເຈົ້າ ທີ່ອາດຈະເຮັດໃຫ້ເຈົ້າມີຄວາມສ່ຽງ ຖ້າຫາກເຈົ້າເລືອກທີ່ຈະເຂົ້າຮ່ວມສະໂມສອນໄວໜຸ່ມດັ່ງກ່າວນີ້. ບັນດາຄວາມສ່ຽງດັ່ງກ່າວເຫຼົ່ານີ້ແມ່ນ ໄດ້ນຳມາສົນທະນາ ເພື່ອເຮັດໃຫ້ເຈົ້າມີຄວາມປອດໄພ.
- ໃນລະຫວ່າງການປະເມີນຄວາມສ່ຽງ ໄດ້ມີບັນດາຄຳຖາມກ່ຽວກັບຊີວິດຂອງເຈົ້າ. ບັນດາຄຳຕອບທີ່ເຈົ້າໃຫ້ ຈະສະໜອງຂໍ້ມູນສຳລັບການລາຍງານກ່ຽວກັບຄວາມສ່ຽງ, ແຕ່ວ່າຂໍ້ມູນຂອງເຈົ້າ ຈະຖືກຮັກສາໄວ້ເປັນ ຄວາມລັບ.
- ການມີສ່ວນຮ່ວມຂອງເຈົ້າ ໃນການປະເມີນຄວາມສ່ຽງ ແມ່ນດ້ວຍຄວາມສະໝັກໃຈ. ເຈົ້າສາມາດຢຸດ ຕອນໃດກໍ່ໄດ້.
- ໃນລະຫວ່າງການປະເມີນ ເຈົ້າສາມາດຕອບພຽງແຕ່ຄຳຖາມທີ່ເຈົ້າຕ້ອງການ. ຖ້າເຈົ້າບໍ່ຕ້ອງການເວົ້າ, ເຈົ້າມິດຢູ່ກໍ່ໄດ້. ເຈົ້າອາດຈະເລືອກທີ່ຈະຢຸດໝົດທຸກຢ່າງ ໃນຕອນໃດກໍ່ໄດ້.
- ໃນລະຫວ່າງການຝຶກອົບຮົມ,ຖ້າຫາກວ່າ ເຈົ້າເປີດເຜີຍຂໍ້ມູນທີ່ເຮັດໃຫ້ ຜູ້ອຳນວຍຄວາມສະດວກເຊື່ອ ວ່າ ເຈົ້າຢູ່ໃນສະພາບທີ່ຖືກລະເມີດ ຫຼື ອັນຕະລາຍ, ຜູ້ອຳນວຍຄວາມສະດວກ ຈະລາຍງານສິ່ງດັ່ງກ່າວ ທັນທີ ຕໍ່ເຈົ້າໜ້າທີ່ ທີ່ເໝາະສົມຂອງອົງການສຸພະນິມິດ.



ຂ້ອຍໄດ້ອ່ານ ແລະ ເຂົ້າໃຈ ຂໍ້ມູນຂ້າງເທິງ

ຂ້ອຍເລືອກທີ່ຈະເຂົ້າຮ່ວມ ການປະເມີນຄວາມສ່ຽງ

ຂ້ອຍເຂົ້າໃຈວ່າ ຂ້ອຍສາມາດຢຸດຕອນໃດກໍ່ໄດ້

**ຊື່** ..................................................................................................

**ວັນທີ** ..................................................................................................

**ລາຍເຊັນ** ..................................................................................................



## IS 2b: ແບບຟອມການຍິນຍອມ ສຳລັບ ພໍ່ແມ່ ຫຼື ຜູ້ປົກຄອງ ຂອງໄວໜຸ່ມທີ່ເປັນຜູ້ເຂົ້າຮ່ວມ

- ໃນ ບົດຮຽນພາກນີ້ ພວກເຮົາຈະສົນທະນາກ່ຽວກັບບັນຫາ ຢູ່ໃນຊີວິດຂອງລູກຂອງເຈົ້າ ທີ່ອາດຈະເຮັດໃຫ້ພວກເຂົາ ມີຄວາມສ່ຽງ ຖ້າຫາກພວກເຂົາເຂົ້າຮ່ວມສະໂມສອນໄວໜຸ່ມດັ່ງກ່າວນີ້. ການເວົ້າກ່ຽວກັບຄວາມສ່ຽງຈະຊ່ວຍໃນການລະບຸບັນດາຄວາມສ່ຽງຕ່າງໆ. ບັນດາຄວາມສ່ຽງດັ່ງກ່າວນີ້ໄດ້ຖືກຍົກຂຶ້ນມາສົນທະນາ ເພື່ອເຮັດໃຫ້ລູກຂອງພວກເຈົ້າປອດໄພ.
- ການມີສ່ວນຮ່ວມຂອງລູກຂອງເຈົ້າ ໃນການປະເມີນຄວາມສ່ຽງດັ່ງກ່າວນີ້ ແມ່ນດ້ວຍຄວາມສະໝັກໃຈ. ລູກຂອງເຈົ້າສາມາດຢຸດຕອນໃດກໍ່ໄດ້.
- ບັນດາຄຳຕອບຂອງໄວໜຸ່ມ ແລະ ຜູ້ໃຫຍ່ ອາດຈະຖືກລວມຢູ່ໃນການລາຍງານສຸດທ້າຍທີ່ຂຽນກ່ຽວກັບຄວາມສ່ຽງເຫຼົ່ານີ້, ແຕ່ວ່າຂໍ້ມູນ ຈະຖືກຮັກສາໄວ້ເປັນຄວາມລັບ.
- ໃນລະຫວ່າງການປະເມີນ ລູກຂອງເຈົ້າສາມາດຕອບພຽງແຕ່ຄຳຖາມທີ່ລູກຂອງເຈົ້າຕ້ອງການຕອບ. ຖ້າລູກຂອງເຈົ້າບໍ່ຕ້ອງການເວົ້າ, ລູກຂອງເຈົ້າມິດຢູ່ກໍ່ໄດ້.



- ໃນລະຫວ່າງການຝຶກອົບຮົມ,ຖ້າຫາກວ່າ ລູກຂອງເຈົ້າເປີດເຜີຍຂໍ້ມູນທີ່ເຮັດໃຫ້ ຜູ້ອຳນວຍຄວາມສະດວກເຊື່ອວ່າ ລູກຂອງເຈົ້າຢູ່ໃນສະພາບທີ່ຖືກລະເມີດ ຫຼື ອັນຕະລາຍ, ຜູ້ອຳນວຍຄວາມສະດວກ ຈະລາຍງານສິ່ງດັ່ງກ່າວທັນທີ ຕໍ່ເຈົ້າໜ້າທີ່ ທີ່ເໝາະສົມຂອງອົງການສຸພະນິມິດ.

ຂ້ອຍໄດ້ອ່ານ ແລະ ເຂົ້າໃຈ ຂໍ້ມູນຂ້າງເທິງ

ຂ້ອຍເລືອກທີ່ຈະເຂົ້າຮ່ວມ ການປະເມີນຄວາມສ່ຽງ

ຂ້ອຍເຂົ້າໃຈວ່າ ຂ້ອຍສາມາດຢຸດຕອນໃດກໍ່ໄດ້

**ຊື່** ..............................................................................................

**ວັນທີ** ..............................................................................................

**ລາຍເຊັນ** ..............................................................................................

# IS 2c: ເຄື່ອງມືການປະເມີນຄວາມສ່ຽງ

*ປັບມາຈາກ ເຄື່ອງມືປະເມີນຄວາມສ່ຽງຂອງອົງການສຸພະນິມິດ ທີ່ຢູ່ໃນການປະເມີນຄວາມສ່ຽງເພື່ອປົກປ້ອງເດັກຂອງອົງການສຸພະນິມິດ ສຳລັບເອກະສານກິດຈະກຳການມີສ່ວນຮ່ວມຂອງເດັກນ້ອຍ.*

| ວັນທີ: | ໂຄງການ | ຊື່ຂອງບຸກຄົນທີ່ ດຳເນີນການປະເມີນນີ້ ສຳເລັດ |
|---|---|---|
| ການອະທິບາຍກ່ຽວກັບຂອບເຂດຂອງສະໂມສອນໄວໜຸ່ມ: (ໃຜ ແລະ ຈັກຄົນ ຈະເຂົ້າຮ່ວມ, ເຊິ່ງລວມທັງການຊີ້ນຳຂອງຜູ້ໃຫຍ່, ສະຖານທີ່, ຄວາມຖີ່ ແລະໄລຍະຂອງກິດຈະກຳຂອງສະໂມສອນ ແລະ ອື່ນໆ) | | |
| ການອະທິບາຍກ່ຽວກັບຊະນິດຂອງກິດຈະກຳຂອງສະໂມສອນໄວໜຸ່ມ: (ຈະຈັດກິດຈະກຳແບບໃດ? ການປະຊຸມຂອງສະໂມສອນ, ບັນດາກິດຈະກຳທີ່ນຳພາໂດຍຊາວໜຸ່ມ ເຊັ່ນ ການໂຄສະນາການປ້ອງກັນຂອງທ້ອງຖິ່ນ ແລະ ອື່ນໆ) | | |
| ການອະທິບາຍ ກ່ຽວກັບສະພາບເງື່ອນໄຂປະຈຸບັນ ຂອງສະໂມສອນໄວໜຸ່ມ ແລະ ຊຸມຊົນ ທີ່ຜູ້ເຂົ້າຮ່ວມອາໄສຢູ່: (ເຊິ່ງລວມທັງພາລະບົດບາດຂອງ ກຸ່ມ CPA ແລະ ການສະໜັບສະໜູນຂອງພວກເຂົາຕໍ່ສະໂມສອນໄວໜຸ່ມ, ຖ້າມີ) | | |
| ການອະທິບາຍ ກ່ຽວກັບ ໄວໜຸ່ມທີ່ໄດ້ຮັບການປຶກສາ: | | |

| **ຄວາມສ່ຽງທີ່ເປັນໄປໄດ້ (ຕໍ່ກັບໄວໜຸ່ມທີ່ເຂົ້າຮ່ວມ ສະໂມສອນໄວໜຸ່ມ)** | **ຄວາມເປັນໄປໄດ້ຂອງ ຄວາມສ່ຽງ ທີ່ອາດຈະເກີດຂຶ້ນ (ເປັນໄດ້ຫຼາຍ: 3; ເປັນໄປໄດ້: 2; ບໍ່ເປັນ ໄປໄດ້: 1)** | **ຄວາມຮ້າຍແຮງ ຂອງຜົນຕາມມາ (ສູງ: 3; ປານກາງ: 2; ຕໍ່າ: 1)** | **ແຜນ ຈັດການກັບຄວາມສ່ຽງ** |
|---|---|---|---|
| *ອະທິບາຍວ່າ: ໄວໜຸ່ມບາງຄົນອາດ ຈະຍ່າງມາ ສະຖານທີ່ ຂອງສະ ໂມສອນ; ໃນລະ ຫວ່າງການ ເດີນທາງ ພວກເຂົາ ອາດຖືກທຳຮ້າຍ ດ້ານຮ່າງກາຍ ຫຼື ທາງເພດ.* | 2 | 3 | 1. ຮັບປະກັນວ່າ ກິດຈະກຳຂອງສູນບໍ່ຈົບຊ້າໃນຕອນແລງ ເພື່ອວ່າ ໄວໜຸ່ມທີ່ຍ່າງມາສະໂມສອນ ແລະ ຍ່າງກັບບ້ານຈະບໍ່ໄດ້ຍ່າງກັບໃນ ເວລາທີ່ມືດ.<br>2. ຮັບປະກັນວ່າ ບັນດາຜູ້ທີ່ມີສ່ວນກ່ຽວຂ້ອງກັບ ສະໂມສອນ ອາໄສຢູ່ໃນໄລຍະຫ່າງທີ່ ເໝາະສົມຈາກສະຖານທີ່ຂອງໂມສອນ ເພື່ອວ່າພວກເຂົາຈະບໍ່ໄດ້ເດີນທາງໄກ.<br>3. ຈັດໃຫ້ໄວໜຸ່ມເດີນທາງກັບບ້ານເປັນກຸ່ມ ແລະ, ຖ້າເປັນໄປໄດ້, ໃຫ້ມີຜູ້ໃຫຍ່ທີ່ເປັນ ຜູ້ດູແລໄປນຳ. |

***ຄຳເຫັນ/ຄຳອ້າງອີງ ອື່ນໆ:***

*ບັນທຶກ ທຸກໆຄວາມເປັນຫ່ວງ ທີ່ເຈົ້າຄິດວ່າ ຄວນສົ່ງຕໍ່ໃຫ້ພະນັກງານອົງການສຸພະນິມິດ.*

# ບັນທຶກ

# ພາກ B

# ຄຸນລັກສະນະຂອງ ເຄື່ອງມື ການນຳທາງ ແບບສະຫຼາດ



# ບົດຮຽນທີ 3: ຄຸນລັກສະນະຂອງເຄື່ອງມື ການນໍາທາງແບບສະຫຼາດ

## ຈຸດປະສົງ

ບັນດາຜູ້ເຂົ້າຮ່ວມ ຈະຮຽນຮູ້ວິທີການໃຊ້ເຄື່ອງມື ແລະ ຈະເຂົ້າໃຈຈຸດປະສົງຂອງຄຸນລັກສະນະສະເພາະ.

## ເວລາ

60 ນາທີ

## ອຸປະກອນ

- ຖ່າຍສໍາເນົາ ເອກະສານເຄື່ອງມື ໃຫ້ຜູ້ເຂົ້າຮ່ວມແຕ່ລະຄົນ
- 'IS 3a: ບັນຊີກວດກາ: ໄວໜຸ່ມທີ່ບໍ່ສາມາດອ່ານໜັງສືໄດ້'

## ຜູ້ເຂົ້າຮ່ວມ

ຜູ້ໃຫຍ່ ທີ່ເປັນຜູ້ອໍານວຍຄວາມສະດວກ 2–3 ຄົນ ຈາກແຕ່ລະ SNYC

## ຜູ້ອໍານວຍຄວາມສະດວກ

ພະນັກງານພາຍໃນປະເທດຂອງອົງການສຸພະນິມິດ ທີ່ເຂົ້າຮ່ວມການຝຶກອົບຮົມ ETIP SNYC

## ຄໍາແນະນໍາກ່ຽວກັບ ຄຸນລັກສະນະຂອງເຄື່ອງມື ການນໍາທາງແບບສະຫຼາດ

ບອກບັນດາຜູ້ເຂົ້າຮ່ວມ ໃຫ້ເອົາເອກະສານເຄື່ອງມືຂອງພວກເຂົາອອກມາ ແລະ ເປີດໄປ 'ບົດຮຽນທີ 1: ແນະນໍາກ່ຽວກັບສະໂມສອນຂອງພວກເຮົາ'. ອ່ານພາກຕໍ່ໄປນີ້ດັງໆໃຫ້ບັນດາຜູ້ເຂົ້າຮ່ວມຟັງ, ໃນຂະນະທີ່ພວກເຂົາເບິ່ງເອກະສານເຄື່ອງມື.

# ພາບລວມຂອງ ເຄື່ອງມື ການນຳທາງແບບສະຫຼາດ

ອະທິບາຍວ່າ ເຄື່ອງມື ປະກອບດ້ວຍ ຫົກພາກ ຄື:

- ພາກ A: ສ້າງຕັ້ງ ສະໂມສອນໄວໜຸ່ມການນຳທາງແບບສະຫຼາດ
- ພາກ B: ຂໍ້ມູນກ່ຽວກັບການຄ້າມະນຸດ
- ພາກ C: ທັກສະຊີວິດ ທີ່ສາມາດສ້າງຄວາມຕ້ານທານສ່ວນຕົວ
- ພາກ D: ການວາງແຜນການເຄື່ອນຍ້າຍແບບປອດໄພ
- ພາກ E: ການດຳເນີນການ
- ພາກ F: ການສະຫຼຸບສັງລວມ ຈຸດສຳຄັນຂອງການອຳນວຍຄວາມສະດວກ

# ຄຸນລັກສະນະຂອງເຄື່ອງມື

ອະທິບາຍວ່າ ບັນດາບົດຮຽນ ປະກອບດ້ວຍຄຸນລັກສະນະແບບຕໍ່ເນື່ອງຊ້ຳກັນຫຼາຍເທື່ອ. ບາງການຕໍ່ເນື່ອງດັ່ງກ່າວແມ່ນໄດ້ຖືກອອກແບບ ເພື່ອຊ່ວຍຜູ້ອຳນວຍຄວາມສະດວກຂອງ SNYC ເພື່ອວາງແຜນສຳລັບບົດຮຽນ. ບາງການຕໍ່ເນື່ອງອື່ນໆ ແມ່ນຖືກອອກແບບເພື່ອຊ່ວຍບັນດາຜູ້ເຂົ້າຮ່ວມ ຮຽນຮູ້ກ່ຽວກັບຫົວຂໍ້ໃຫ້ເລິກເຊິ່ງຂຶ້ນກວ່າເກົ່າ. ຢູ່ດ້ານລຸ່ມນີ້ ແມ່ນການສະຫຼຸບສັງລວມກ່ຽວກັບຄຸນລັກສະນະດັ່ງກ່າວເຫຼົ່ານີ້:

**ຈຸດປະສົງ**

ສິ່ງດັ່ງກ່າວນີ້ ບອກຜູ້ອຳນວຍຄວາມສະດວກຂອງ SNYC ວ່າ ບັນດາຜູ້ເຂົ້າຮ່ວມຈະຮຽນຫຍັງ ຈາກບົດຮຽນ.

**ອຸປະກອນ**

ພາກນີ້ ໄດ້ເຮັດລາຍການ ອຸປະກອນທີ່ ຜູ້ອຳນວຍຄວາມສະດວກຂອງ SNYC ຕ້ອງການ ເພື່ອນຳພາບົດຮຽນ. ບັນດາອຸປະກອນດັ່ງກ່າວນີ້ຈະສະໜອງໃຫ້ໂດຍອີງການສຸພະນິມິດ. ເຖິງແນວໃດກໍ່ຕາມ, ຜູ້ອຳນວຍຄວາມສະດວກ SNYC ອາດຈະຈຳເປັນຕ້ອງໄດ້ກະກຽມເລັກນ້ອຍ; ຍົກຕົວຢ່າງເຊັ່ນ: ຖ່າຍສຳເນົາເອກະສານ IS ເພື່ອວ່າ ຈະມີສຳເນົາເອກະສານພຽງພໍ ສຳລັບບັນດາຜູ້ເຂົ້າຮ່ວມໝົດທຸກຄົນ. ຜູ້ອຳນວຍຄວາມສະດວກ SNYC ຍັງສາມາດຂໍຄວາມຊ່ວຍເຫຼືອຈາກ ບັນດາຜູ້ເຂົ້າຮ່ວມ SNYC ກ່ຽວກັບວຽກດັ່ງກ່າວນີ້; ຕົວຢ່າງເຊັ່ນ: ຕັດເລື່ອງເລົ່າອອກຈາກ ເອກະສານ IS. ຜູ້ອຳນວຍຄວາມສະດວກ SNYC ຄວນອ່ານບັນຊີລາຍການອຸປະກອນ ອາທິດໜຶ່ງກ່ອນໜ້າການເລີ່ມຕົ້ນບົດຮຽນ ເພື່ອວ່າ ຈະມີເວລາພຽງພໍສຳລັບກະກຽມ.

**ການກະກຽມ**

ອະທິບາຍວ່າ ບາງບົດຮຽນ ຈະລວມເອົາຂໍ້ເອົາໃຈໃສ່ກ່ຽວກັບການກະກຽມ. ສິ່ງດັ່ງກ່າວນີ້ ອາດຈະລວມເອົາການອະທິບາຍໃຫ້ຜູ້ເຂົ້າຮ່ວມກ່ອນການເລີ່ມຕົ້ນບົດຮຽນວ່າ ເນື້ອໃນຂອງບົດຮຽນຕໍ່ໄປແມ່ນມີຄວາມລະອຽດອ່ອນ. ຜູ້ອຳນວຍຄວາມສະດວກຄວນອ່ານຄຳແນະນຳກ່ຽວກັບການກະກຽມ ຢ່າງໜ້ອຍ ໜຶ່ງອາທິດກ່ອນການເລີ່ມຕົ້ນບົດຮຽນ.

**ເຊັນເຂົ້າ**

ອະທິບາຍວ່າ ບັນດາຜູ້ເຂົ້າຮ່ວມ SNYC ເຊັນເຂົ້າ ໃນຕອນເລີ່ມຕົ້ນຂອງແຕ່ລະບົດຮຽນ. ສິ່ງດັ່ງກ່າວນີ້ ແມ່ນເພື່ອສ້າງຄວາມໝາຍໝັ້ນ. ມັນຍັງສາມາດ ເຮັດໃຫ້ຜູ້ອຳນວຍຄວາມສະດວກ SNYC ນັບວ່າ ຜູ້ເຂົ້າຮ່ວມໄດ້ເຂົ້າຮ່ວມ ໄດ້ເຂົ້າຮ່ວມຈັກບົດຮຽນ ສຳລັບລະບົບການໃຫ້ດາວ (ອະທິບາຍຢູ່ດ້ານລຸ່ມ).

**ການອຸ່ນເຄື່ອງ**

ແຕ່ລະບົດຮຽນເລີ່ມຕົ້ນດ້ວຍເກມອຸ່ນເຄື່ອງ. ບັນດາເກມດັ່ງກ່າວນີ້ແມ່ນມ່ວນຊື່ນ, ແຕ່ວ່າມັນກໍ່ຮັບໃຊ້ຈຸດປະສົງອື່ນໆ. ມັນຊ່ວຍໃຫ້ໄວໜຸ່ມທີ່ເປັນຜູ້ເຂົ້າຮ່ວມ ຜ່ອນຄາຍ ແລະ ຮູ້ສຶກສະດວກສະບາຍ ກ່ອນທີ່ພວກເຂົາຈະເລີ່ມການສົນທະນາກ່ຽວກັບບັນດາຫົວຂໍ້ທີ່ອາດຈະຍາກໃນການເວົ້າກ່ຽວກັບມັນ. ມັນຊ່ວຍໃຫ້ບັນດາຜູ້ເຂົ້າຮ່ວມຮູ້ຈັກ ແລະ ເຊື່ອໃຈກັນແລະກັນ. ມັນຍັງເຮັດໃຫ້ບັນດາຜູ້ເຂົ້າຮ່ວມມີພະລັງ ໃນຕອນເລີ່ມຕົ້ນບົດຮຽນ. ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກ ຂອງ SNYC ຈະນຳພາຫຼິ້ນເກມ. ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ຄວນຮັບປະກັນວ່າ ເກມບໍ່ໃຊ້ເວລາຫຼາຍກວ່າ 10 ນາທີ.

### ການທົບທວນ

ອະທິບາຍວ່າ ການທົບທວນ ເຮັດໃຫ້ບັນດາຜູ້ເຂົ້າຮ່ວມ ຈື່ຈຳສິ່ງທີ່ພວກເຂົາໄດ້ຮຽນໃນບັນດາບົດຮຽນທີ່ຜ່ານມາ. ມັນປະເມີນວ່າ ບັນດາຜູ້ເຂົ້າຮ່ວມຈື່ ຂໍ້ມູນ ແລະ ນຳໃຊ້ມັນຢູ່ໃນການດຳລົງຊີວິດຂອງພວກເຂົາບໍ່. ມັນຍັງຊຸກຍູ້ໃຫ້ບັນດາຜູ້ເຂົ້າຮ່ວມ ເຊື່ອມຕໍ່ຂໍ້ມູນທີ່ພວກເຂົາໄດ້ຮຽນ ກັບບັນດາບົດຮຽນຕ່າງໆ.

### ປື້ມບັນທຶກປະຈຳວັນ

ອະທິບາຍວ່າ ປື້ມບັນທຶກປະຈຳວັນສາມາດຂຽນ ຫຼື ແຕ້ມກໍ່ໄດ້. ເຄື່ອງມືຊ່ວຍໄວໜຸ່ມໃນສະໂມສອນ ໃຫ້ຕື່ນຕົວຫຼາຍຂຶ້ນ ໃນການຄິດກ່ຽວກັບຊີວິດຂອງພວກເຂົາ ແລະ ເຮັດການຕັດສິນໃຈແບບມີສະຕິ ເພື່ອເປັນທິດທາງໃຫ້ແກ່ຊີວິດຂອງພວກເຂົາ ແທນທີ່ຈະລ່ອງລອຍ ຄືກັບໃບໄມ້ຢູ່ໃນກະແສນ້ຳ. ປື້ມບັນທຶກປະຈຳວັນຍັງໃຫ້ພື້ນທີ່ສະແດງຄວາມຮູ້ສຶກດ້ານຈິດໃຈ ໂດຍປາດສະຈາກ ການຕັດສິນວິຈານ ຫຼື ຄວາມອັບອາຍ. ມັນສຳຄັນຫຼາຍ ທີ່ບໍ່ມີໃຜອີກອ່ານບັນທຶກປະຈຳວັນຂອງ ບັນດາຜູ້ເຂົ້າຮ່ວມ. ແມ່ນແຕ່ຜູ້ອຳນວຍຄວາມສະດວກຂອງ SNYC ກໍ່ບໍ່ສາມາດອ່ານປື້ມບັນທຶກປະຈຳວັນຂອງ ບັນດາຜູ້ເຂົ້າຮ່ວມ. ປື້ມບັນທຶກປະຈຳວັນ ຄວນສະໜອງພື້ນທີ່ສ່ວນຕົວແທ້ໆ.

### ການສະແດງບົດບາດສົມມຸດ

ອະທິບາຍວ່າ ການສະແດງບົດບາດສົມມຸດ ໃນລະຫວ່າງບາງບົດຮຽນ ແມ່ນອອກແບບເພື່ອຊ່ວຍບັນດາຜູ້ເຂົ້າຮ່ວມຄົ້ນຄວ້າວິໃຈຫົວຂໍ້ ແລະ ເພື່ອສະແດງຄວາມຄິດເຫັນອອກມາ.

### ການຮັກສາເວລາ

ເຄື່ອງມືໄດ້ລວມເອົາເວລາທີ່ໄດ້ແນະນຳ ສຳລັບແຕ່ລະບົດຮຽນ. ມັນສຳຄັນທີ່ຕ້ອງຢູ່ພາຍໃນຂອບເຂດເວລາທີ່ໄດ້ແນະນຳ ສຳລັບແຕ່ລະບົດຮຽນ, ເພື່ອວ່າບັນດາຜູ້ເຂົ້າຮ່ວມຈະບໍ່ຂາດບົດຮຽນຈັກບົດ ແລະ ການຮຽນບົດຮຽນຈະບໍ່ກາຍເວລາ.

### ສະຫຼຸບສັງລວມບົດຮຽນ

ສິ່ງດັ່ງກ່າວນີ້ ສະເໜີຈຸດສຳຄັນຂອງບົດຮຽນ. ຜູ້ອຳນວຍຄວາມສະດວກຂອງ SNYC ອ່ານມັນດັງໆ. ມັນຄວນໃຊ້ເວລາພຽງແຕ່ 1-3 ນາທີ ເພື່ອອ່ານບົດສະຫຼຸບສັງລວມບົດຮຽນ.

ບອກໃຫ້ບັນດາຜູ້ເຂົ້າຮ່ວມ ເບິ່ງຢູ່ໃນເຄື່ອງມື ແລະ ຊອກຫາຕົວຢ່າງ ແຕ່ລະອັນຂອງຄຸນລັກສະນະລຸ່ມນີ້. ອ່ານຜ່ານລາຍການ ແລະ ຖາມຫາອາສາສະໝັກ ເພື່ອອະທິບາຍດັງໆ ໃນໜຶ່ງປະໂຫຍກ ວ່າ ຄຸນລັກສະນະດັ່ງກ່າວແມ່ນເພື່ອຫຍັງ.

- ຈຸດປະສົງ
- ອຸປະກອນ
- ຍິນດີຕ້ອນຮັບ
- ການອຸ່ນເຄື່ອງ
- ການທົບທວນ
- ສະຫຼຸບສັງລວມບົດຮຽນ
- ປື້ມບັນທຶກປະຈຳວັນ
- ການສະແດງບົດບາດສົມມຸດ.

ໃນຕອນທ້າຍຂອງ ການປະຊຸມສະໂມສອນ ມັນຈະມີປະໂຫຍດທີ່ຕ້ອງໃຫ້ເວລາ ແກ່ບັນດາຜູ້ເຂົ້າຮ່ວມເພື່ອຂຽນ ຫຼື ຖາມ ຄຳຖາມ ແລະ/ຫຼື ສະໜອງການຕຳນິຕິຊົມ ທີ່ພວກເຂົາສາມາດຍື່ນໃຫ້ຜູ້ອຳນວຍຄວາມສະດວກ. ສິ່ງດັ່ງກ່າວນີ້ ສາມາດເກັບຮັບໂຮມແບບບໍ່ໃສ່ຊື່ ແລະ ຈະໃຫ້ແນວຄວາມຄິດແກ່ ຜູ້ອຳນວຍຄວາມສະດວກ ວ່າຫົວຂໍ້ໃດທີ່ຕ້ອງການ ເນັ້ນໃສ່ ຫຼື ອະທິບາຍເພີ່ມເຕີມ. ຜູ້ອຳນວຍຄວາມສະດວກສາມາດຕອບ ຄວາມສົນໃຈ ຫຼື ຄຳຖາມ ຢູ່ໃນບົດຮຽນຕໍ່ໄປ ຫຼື ວາງແຜນເພື່ອຕອບໃນເວລາຕໍ່ໄປ.

## ປຶ້ມນ້ອຍ ການນຳທາງແບບສະຫຼາດ

ອະທິບາຍວ່າ ເຄື່ອງມືດັ່ງກ່າວ ແມ່ນຕິດຕາມດ້ວຍ ປຶ້ມນ້ອຍ ການນຳທາງແບບສະຫຼາດ. ປຶ້ມດັ່ງກ່າວນີ້ມີຂະໜາດເທົ່າກັບ ໜັງສືເດີນທາງ ແລະ ຖືກອອກແບບ ໃຫ້ໃສ່ໃນກະເປົານ້ອຍ ຫຼື ກະເປົາເງິນແຂວນແອວໄດ້. ມັນລວມເອົາ ການສະຫຼຸບສັງລວມ ຂໍ້ມູນທີ່ສຳຄັນ ໂດຍເປັນສ່ວນໜຶ່ງຂອງເຄື່ອງມື ແລະ ສຳຄັນທີ່ສຸດ ແມ່ນ ນຳເບີ ໂທລະສັບ ແລະ ທີ່ຢູ່ຂອງອົງການຈັດ ຕັ້ງທີ່ຊ່ວຍເຫຼືອຜູ້ເຄື່ອນຍ້າຍ. ຜູ້ອຳນວຍຄວາມສະດວກ ຂອງ SNYC ໄດ້ຮັບຄຳແນະນຳ ເພື່ອບອກບັນດາຜູ້ເຂົ້າຮ່ວມ ໃຫ້ເບິ່ງ ປຶ້ມນ້ອຍການນຳທາງແບບສະຫຼາດ ໃນເວລາທີ່ແນ່ນອນໃດໜຶ່ງ ໃນລະຫວ່າງບົດຮຽນກ່ຽວກັບເຄື່ອງມື. ປຶ້ມນ້ອຍການ ນຳທາງແບບສະຫຼາດ ແມ່ນຖືກເກັບຮັກສາໄວ້ ກັບປຶ້ມບັນທຶກ ຢູ່ໃນ SNYC ຈົນກະທັ້ງຕອນທ້າຍຂອງເຄື່ອງມືເພື່ອວ່າ ໄວໜຸ່ມຈະບໍ່ເຮັດປຶ້ມນ້ອຍຂອງພວກເຂົາເສຍ.

## ★ ລະບົບການໃຫ້ດາວ

ອະທິບາຍວ່າ ເພື່ອສ້າງຄວາມໝາຍໝັ້ນ ແລະ ສົ່ງເສີມການເຂົ້າຮ່ວມ, SNYC ມີລະບົບການໃຫ້ດາວ. ມີ 31 ບົດຮຽນຢູ່ໃນເຄື່ອງມື, ເຊິ່ງປະກອບດ້ວຍບັນດາບົດຮຽນທີ່ສົ່ງເສີມ ກິດຈະກຳການດຳເນີນການຂອງຊຸມຊົນ. ບັນດາຜູ້ເຂົ້າຮ່ວມ ໄດ້ຮັບ ໜຶ່ງດາວ ສຳລັບແຕ່ລະບົດຮຽນທີ່ພວກເຂົາໄດ້ເຂົ້າຮ່ວມ. ຜູ້ເຂົ້າຮ່ວມ ທີ່ໄດ້ຮັບ 22 ດາວ ແມ່ນມີສິດ ສຳລັບ 'ລາງວັນສິ່ງຈູງໃຈ ລະດັບ 1'; ຜູ້ເຂົ້າຮ່ວມ ທີ່ໄດ້ຮັບ 26 ດາວ ແມ່ນມີສິດສຳລັບ 'ລາງວັນສິ່ງຈູງໃຈ ລະດັບ 2'; ແລະ ຜູ້ເຂົ້າຮ່ວມທີ່ໄດ້ເຂົ້າຮ່ວມໝົດ 31 ບົດຮຽນແມ່ນມີສິດສຳລັບ 'ລາງວັນສິ່ງຈູງໃຈ ລະດັບ 3'. ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກ ກໍ່ມີສິດໄດ້ຮັບດາວສຳລັບການເຂົ້າຮ່ວມ. ຜູ້ອຳນວຍຄວາມສະດວກ SNYC ສາມາດຕັດສິນໃຈວ່າວິທີໃດ ທີ່ພວກເຂົາຢາກແຈກຢາຍ ແລະ ສະແດງ ບັນດາດາວທີ່ພວກເຂົາໄດ້ຮັບ.

ອະທິບາຍວ່າ ພະນັກງານອົງການສຸພະນິມິດ ແລະ ບັນດາຜູ້ອຳນວຍຄວາມສະດວກ SNYC ສາມາດຕັດສິນໃຈຮ່ວມກັນວ່າ ສິ່ງຈູງໃຈດັ່ງກ່າວເຫຼົ່ານີ້ຄວນແມ່ນຫຍັງ. ແນວຄວາມຄິດສຳລັບສິ່ງຈູງໃຈອາດຈະປະກອບດ້ວຍ:

- ເຄື່ອງຂອງທີ່ຖືກ ບໍລິຈາກໃຫ້ອົງການສຸພະນິມິດ ເຊັ່ນ: ບັດຊົມຄອນເສີດ ຫຼື ເສື້ອຍືດ
- ເສື້ອຍືດ ຫຼື ໝວກ SNYC
- ຄ່າໃຊ້ຈ່າຍສຳລັບ ການຝຶກອົບຮົມວິຊາຊີບ ໃນຫົວຂໍ້ ທີ່ພົວພັນກັບ ການເຄື່ອນຍ້າຍແບບປອດໄພ
- ເຂົ້າຮ່ວມຢູ່ໃນ ກິດຈະກຳຕ້ານການຄ້າມະນຸດ ຫຼື ກອງປະຊຸມຖອດຖອນບົດຮຽນ ຂອງອົງການສຸພະນິມິດໃນລະດັບພາກພື້ນ.

ລາງວັນເຫຼົ່ານີ້ ຈະແຕກຕ່າງ ສຳລັບແຕ່ລະ SNYC.

## ການປະຕິບັດຕາມ ຄຳແນະນຳຂອງເຄື່ອງມື

ອະທິບາຍວ່າ ອົງການສຸພະນິມິດ ຊຸກຍູ້ໃຫ້ບັນດາຜູ້ອຳນວຍຄວາມສະດວກ ໃຫ້ນຳຄວາມຮູ້ ແລະ ປະສົບການມາສູ່ SNYC ແລະ ເພື່ອເຊື່ອມບັນດາບົດຮຽນເຂົ້າກັບຄວາມເປັນຈິງຂອງຊຸມຊົນຂອງພວກເຂົາ. ໃນເວລາດຽວກັນ, ຜູ້ອຳນວຍຄວາມສະດວກຕ້ອງປະຕິບັດຕາມຄຳແນະນຳຂອງ ເຄື່ອງມືຢ່າງລະມັດລະວັງ. ຜູ້ອຳນວຍຄວາມສະດວກຂອງ SNYC ຄວນເອົາເຄື່ອງມື ມານຳໃນທຸກພາກຂອງບົດຮຽນ ແລະ ປະຕິບັດຕາມບັນດາບາດກ້າວໃນເວລາທີ່ພວກເຂົາສອນ. ຜູ້ອຳນວຍຄວາມສະດວກຂອງ SNYC ຄວນອ່ານຈາກເອກະສານ

ເຄື່ອງມື ຕະຫຼອດໄລຍະຂອງບົດຮຽນ ຍ້ອນວ່າຂໍ້ມູນ ຢູ່ໃນເຄື່ອງມື ແມ່ນມີຄວາມພິເສດສະເພາະຫຼາຍ (ຕົວຢ່າງເຊັ່ນ: ຄຳນິຍາມ ຂອງ ການຄ້າມະນຸດ, ນຳເບີ ສາຍດ່ວນ ແລະ ກົດໝາຍກ່ຽວກັບ ການຄ້າມະນຸດ).

ຜູ້ອຳນວຍຄວາມສະດວກຂອງ SNYC **ຕ້ອງປະຕິບັດຕາມ ຄຳແນະນຳຂອງເຄື່ອງມື.**

## ການພິຈາລະນາອື່ນໆ

### ໄວໜຸ່ມທີ່ບໍ່ສາມາດອ່ານໜັງສືໄດ້

ອະທິບາຍວ່າ SNYC ເລັງເປົ້າໝາຍໃສ່ ໄວໜຸ່ມທີ່ຢູ່ໃນພາວະສ່ຽງ. ບາງຈຳນວນຂອງໄວໜຸ່ມດັ່ງກ່າວ ຈະມີທັກສະໃນການອ່ານຂຽນທີ່ຈຳກັດ. ເຄື່ອງມືດັ່ງກ່າວແມ່ນຖືກອອກແບບ ສຳລັບໄວໜຸ່ມທີ່ສາມາດອ່ານໄດ້. ມັນອາດຈະຕ້ອງໄດ້ປັບ ຖ້າຫາກ SNYC ໃດໜຶ່ງ ມີອັດຕາສ່ວນໄວໜຸ່ມທີ່ອ່ານບໍ່ໄດ້ ຫຼາຍ. ເຖິງແນວໃດກໍ່ຕາມ, SNYC ສາມາດປະກອບດ້ວຍ ໂດຍປະມານ 20 ສ່ວນຮ້ອຍ ຂອງໄວໜຸ່ມ ຜູ້ທີ່ອ່ານໜັງສືບໍ່ໄດ້, ຖ້າຈຳເປັນ. ຖ້າຫາກ SNYC ມີບັນດາຜູ້ເຂົ້າຮ່ວມທີ່ບໍ່ສາມາດອ່ານໄດ້, ໃຫ້ໃຊ້ລາຍການກວດກາລຸ່ມນີ້ ເພື່ອຮັບປະກັນວ່າບັນດາຜູ້ເຂົ້າຮ່ວມເຫຼົ່ານີ້ ໄດ້ຮັບການຊ່ວຍເຫຼືອ:

- ຫ້າມບອກ ທັງໝົດກຸ່ມວ່າຜູ້ເຂົ້າຮ່ວມຜູ້ໃດຜູ້ໜຶ່ງ ບໍ່ສາມາດອ່ານໜັງສືໄດ້.
- ເມື່ອໃດມີການຢາຍຂໍ້ມູນຂຽນ (ຕົວຢ່າງເຊັ່ນ: IS), ມັນສຳຄັນທີ່ຕ້ອງອ່ານດັງໆ ຄືກັນ ເພື່ອວ່າບັນດາຜູ້ເຂົ້າຮ່ວມທີ່ບໍ່ສາມາດອ່ານໜັງສືໄດ້ ສາມາດໄດ້ຍິນ.
- ເມື່ອໃດທີ່ ຜູ້ອຳນວຍຄວາມສະດວກ SNYC ແບ່ງບັນດາຜູ້ເຂົ້າຮ່ວມອອກເປັນກຸ່ມ ເພື່ອເຮັດວຽກກັບບົດຝຶກຫັດຢູ່ໃນເຈ້ຍແຜ່ນໃຫຍ່ ຫຼື ສົນທະນາບັນຫາ, ມັນສຳຄັນທີ່ຕ້ອງແບ່ງບັນດາໄວໜຸ່ມທີ່ບໍ່ສາມາດອ່ານໜັງສືໄດ້ ໃສ່ໃນກຸ່ມ ເພື່ອວ່າໄວໜຸ່ມທີ່ອ່ານອອກຂຽນໄດ້ ສາມາດຂຽນໃຫ້ພວກເຂົາ.
- ເຄື່ອງມື ສະໜອງ ໂອກາດຫຼາຍໆຢ່າງ ສຳລັບຜູ້ເຂົ້າຮ່ວມໃຫ້ແຕ້ມຮູບກ່ຽວກັບປະສົບການຂອງພວກເຂົາ. ຜູ້ອຳນວຍຄວາມສະດວກຂອງ SNYC ຄວນເນັ້ນໃສ່ວ່າ ການແຕ້ມຮູບ ແມ່ນທາງເລືອກອັນໜຶ່ງ (ຕົວຢ່າງເຊັ່ນ: ຢູ່ໃນພາກບົດຮຽນ ປື້ມບັນທຶກປະຈຳວັນ).
- ຖ້າຫາກ ບົດຝຶກຫັດ ກ່ຽວຂ້ອງກັບການສົ່ງຕໍ່ ຖົງທີ່ມີຂໍ້ມູນຂຽນໃສ່ເຈ້ຍ, ຜູ້ອຳນວຍຄວາມສະດວກຂອງ SNYC ຄວນ ຮັບປະກັນວ່າຖົງ ຈະບໍ່ຢຸດຢູ່ທີ່ ຜູ້ເຂົ້າຮ່ວມທີ່ບໍ່ສາມາດອ່ານໜັງສືໄດ້.
- ກິດຈະກຳເກືອບທັງໝົດ ບອກໃຫ້ໄວໜຸ່ມ ເຮັດວຽກເປັນຄູ່ ຫຼື ເປັນກຸ່ມ ສະນັ້ນໄວໜຸ່ມຜູ້ທີ່ບໍ່ຮູ້ໜັງສືກໍ່ສາມາດເຮັດວຽກກັບໄວໜຸ່ມທີ່ຮູ້ໜັງສືໄດ້.

### ໄວໜຸ່ມທີ່ແຍກກັບພໍ່ແມ່ຂອງພວກເຂົາ

SNYC ໄດ້ອອກແບບເພື່ອສ້າງສາຍພົວພັນ ລະຫວ່າງບັນດາໄວໜຸ່ມ, ພໍ່ແມ່ຂອງພວກເຂົາ ແລະ ຊຸມຊົນທ້ອງຖິ່ນ ໂດຍເຊື່ອວ່າສິ່ງດັ່ງກ່າວນີ້ ຈະສ້າງຄວາມເຂັ້ມແຂງໃຫ້ການຮຽນຮູ້ ແລະ ສ້າງຄວາມໝາຍໝັ້ນຕໍ່ກັບສະໂມສອນ. ແຕ່ວ່າ ເຖິງແນວໃດກໍ່ຕາມ, ໃນບາງກໍລະນີ SNYC ກໍ່ອາດຈະເຮັດວຽກກັບ ບັນດາໄວໜຸ່ມທີ່ບໍ່ໄດ້ອາໄສຢູ່ກັບພໍ່ແມ່ຂອງພວກເຂົາ. ໃນກໍລະນີ ດັ່ງກ່າວນີ້ ຜູ້ອຳນວຍຄວາມສະດວກຂອງ SNYC ຄວນຂ້າມບົດຮຽນ ຂອງເຄື່ອງມື ໃນພາກທີ່ແນະນຳໃຫ້ໄວໜຸ່ມສົນທະນາບັນຫາ ກັບພໍ່ແມ່ຂອງພວກເຂົາ. ຖ້າຫາກເໝາະສົມ, ພວກເຂົາຄວນບອກໃຫ້ໄວໜຸ່ມສົນທະນາບັນດາບັນຫາກັບຜູ້ໃຫຍ່ທີ່ພວກເຂົາໃກ້ຊິດ, ຜູ້ນຳດ້ານສາດສະໜາ ຫຼື ໝູ່ຄູ່ ແທນທີ່ ພໍ່ແມ່ຂອງພວກເຂົາ.

## ສະຫຼຸບສັງລວມ ບົດຮຽນ

- ເຄື່ອງມື ປະກອບດ້ວຍ ຫົກພາກ.
- ແຕ່ລະພາກ ປະກອບດ້ວຍບັນດາບົດຮຽນ, ເຊິ່ງແມ່ນການວາງແຜນບົດຮຽນທີ່ໃຊ້ເວລາປະມານ 75 ນາທີ.
- ບັນດາຜູ້ເຂົ້າຮ່ວມກໍ່ຈະໄດ້ຮັບ ປື້ມນ້ອຍການນໍາທາງແບບສະຫຼາດ ທີ່ສະຫຼຸບສັງລວມບັນດາຫົວຂໍ້ທີ່ສໍາຄັນທີ່ສຸດຂອງເຄື່ອງມື.
- ຜູ້ເຂົ້າຮ່ວມແຕ່ລະຄົນ ຈະໄດ້ຮັບດາວໜຶ່ງດວງ ສໍາລັບແຕ່ລະບົດຮຽນທີ່ພວກເຂົາໄດ້ເຂົ້າຮ່ວມ, ດາວຈະຖືກສະສົມໄວ້ ເພື່ອຮັບລາງວັນ.
- SNYC ສາມາດຍອມຮັບ ອັດຕາສ່ວນໜ້ອຍໜຶ່ງ ຂອງໄວໜຸ່ມທີ່ເປັນຜູ້ເຂົ້າຮ່ວມທີ່ບໍ່ສາມາດອ່ານໜັງສືໄດ້, ໂດຍນໍາໃຊ້ບາດກ້າວທີ່ອະທິບາຍຢູ່ຂ້າງເທິງ.
- ຜູ້ອໍານວຍຄວາມສະດວກ ຂອງ SNYC ຄວນປະຕິບັດຕາມ ຄໍາແນະນໍາຂອງເຄື່ອງມື.

# IS 3a: ໄວໜຸ່ມທີ່ບໍ່ສາມາດອ່ານໜັງສືໄດ້

ເຄື່ອງມືດັ່ງກ່າວແມ່ນຖືກອອກແບບ ສໍາລັບໄວໜຸ່ມທີ່ສາມາດອ່ານໄດ້. ມັນອາດຈະຕ້ອງໄດ້ປັບ ຖ້າຫາກ SNYC ໃດໜຶ່ງ ມີອັດຕາສ່ວນໄວໜຸ່ມທີ່ອ່ານບໍ່ໄດ້ ຫຼາຍ. ເຖິງແນວໃດກໍ່ຕາມ, SNYC ສາມາດປະກອບດ້ວຍ ໂດຍປະມານ 20 ສ່ວນຮ້ອຍ ຂອງໄວໜຸ່ມ ຜູ້ທີ່ອ່ານໜັງສືບໍ່ໄດ້, ຖ້າຈໍາເປັນ. ຖ້າຫາກ SNYC ມີບັນດາຜູ້ເຂົ້າຮ່ວມທີ່ບໍ່ສາມາດອ່ານໄດ້, ໃຫ້ນໍາໃຊ້ຄໍາແນະນໍາລຸ່ມນີ້ ເພື່ອຮັບປະກັນວ່າບັນດາຜູ້ເຂົ້າຮ່ວມເຫຼົ່ານີ້ ໄດ້ຮັບການຊ່ວຍເຫຼືອ:

- ຫ້າມບອກ ທັງໝົດກຸ່ມວ່າຜູ້ເຂົ້າຮ່ວມຜູ້ໃດຜູ້ໜຶ່ງ ບໍ່ສາມາດອ່ານໜັງສືໄດ້.
- ເມື່ອໃດມີການຢາຍຂໍ້ມູນຂ່າວ (ຕົວຢ່າງເຊັ່ນ: IS), ມັນສໍາຄັນທີ່ຕ້ອງອ່ານດັງໆ ຄືກັນ ເພື່ອວ່າບັນດາຜູ້ເຂົ້າຮ່ວມທີ່ບໍ່ສາມາດອ່ານໜັງສືໄດ້ ສາມາດໄດ້ຍິນ.
- ເມື່ອໃດທີ່ ຜູ້ອໍານວຍຄວາມສະດວກ SNYC ແບ່ງບັນດາຜູ້ເຂົ້າຮ່ວມອອກເປັນກຸ່ມ ເພື່ອເຮັດວຽກກັບບົດຝຶກຫັດຢູ່ໃນເຈ້ຍແຜ່ນໃຫຍ່ ຫຼື ສົນທະນາບັນຫາ, ມັນສໍາຄັນທີ່ຕ້ອງແບ່ງບັນດາໄວໜຸ່ມທີ່ບໍ່ສາມາດອ່ານໜັງສືໄດ້ ໃສ່ໃນກຸ່ມ ເພື່ອວ່າ ໄວໜຸ່ມທີ່ອ່ານອອກຂຽນໄດ້ ສາມາດຂຽນໃຫ້ພວກເຂົາ.
- ເຄື່ອງມື ສະໜອງ ໂອກາດຫຼາຍໆຢ່າງ ສໍາລັບຜູ້ເຂົ້າຮ່ວມໃຫ້ແຕ້ມຮູບກ່ຽວກັບປະສົບການຂອງພວກເຂົາ. ຜູ້ອໍານວຍຄວາມສະດວກຂອງ SNYC ຄວນເນັ້ນໃສ່ວ່າ ການແຕ້ມຮູບ ແມ່ນທາງເລືອກອັນໜຶ່ງ (ຕົວຢ່າງເຊັ່ນ: ຢູ່ໃນພາກບົດຮຽນ ປຶ້ມບັນທຶກປະຈໍາວັນ).
- ຖ້າຫາກ ບົດຝຶກຫັດ ກ່ຽວຂ້ອງກັບການສົ່ງຕໍ່ ຖົງທີ່ມີຂໍ້ມູນຂຽນໃສ່ເຈ້ຍ, ຜູ້ອໍານວຍຄວາມສະດວກຂອງ SNYC ຄວນ ຮັບປະກັນວ່າຖົງ ຈະບໍ່ຢຸດຢູ່ທີ່ ຜູ້ເຂົ້າຮ່ວມທີ່ບໍ່ສາມາດອ່ານໜັງສືໄດ້.
- ກິດຈະກໍາເກືອບທັງໝົດ ບອກໃຫ້ໄວໜຸ່ມ ເຮັດວຽກເປັນຄູ່ ຫຼື ເປັນກຸ່ມ ສະນັ້ນ ໄວໜຸ່ມຜູ້ທີ່ບໍ່ຮູ້ໜັງສືກໍ່ສາມາດເຮັດວຽກກັບໄວໜຸ່ມທີ່ຮູ້ໜັງສືໄດ້.

# ບົດຮຽນທີ 4: ການຕິດຕາມ ເຄື່ອງມື ການນຳທາງແບບສະຫຼາດ

## ຈຸດປະສົງ

ບັນດາຜູ້ເຂົ້າຮ່ວມ ຈະເຂົ້າໃຈພາລະບົດບາດ ຂອງແບບຟອມການຕິດຕາມຕົນເອງ, ການຄຸ້ມຄອງຊີ້ນຳ ແລະ ນີ້ປະເມີນ. ບັນດາຜູ້ເຂົ້າຮ່ວມຈະຮູ້ກ່ຽວກັບມາດຖານເງື່ອນໄຂທີ່ສຳຄັນ ເຊິ່ງອີງໃສ່ມາດຖານເງື່ອນໄຂ ດັ່ງກ່າວ SNYC ແລະ ເຄື່ອງມື ຈະຖືກປະເມີນໃນຕອນສຸດທ້າຍ.

## ເວລາ

60 ນາທີ

## ອຸປະກອນ

- ສຳເນົາເອກະສານເຄື່ອງມືສຳລັບຜູ້ເຂົ້າຮ່ວມແຕ່ລະຄົນ
- ປື້ມບັນທຶກປະຈຳວັນຂອງຜູ້ເຂົ້າຮ່ວມ

## ຜູ້ເຂົ້າຮ່ວມ

ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກ 2–3 ຄົນ ຈາກແຕ່ລະ SNYC

## ຜູ້ອຳນວຍຄວາມສະດວກ

ພະນັກງານພາຍໃນປະເທດຂອງອົງການສຸພະນິມິດ ທີ່ໄດ້ເຂົ້າຮ່ວມການຝຶກອົບຮົມ ETIP SNYC

## ຄຳແນະນຳ

ອະທິບາຍວ່າ ບົດຮຽນນີ້ ຈະອະທິບາຍກ່ຽວກັບວິທີທີ່ SNYC ແລະ ເຄື່ອງມືຈະຖືກປະເມີນ.

ການປະເມີນ ສາມາດຊ່ວຍ ອົງການສຸພະນິມິດ ເຂົ້າໃຈຈຸດແຂງ ແລະ ຈຸດອ່ອນ ຂອງເຄື່ອງມື ແລະ SNYC, ເພື່ອຈະປັບປຸງ.

ບອກບັນດາຜູ້ເຂົ້າຮ່ວມ ໃຫ້ເປີດໄປຫາແບບຟອມການຕິດຕາມຕົນເອງ ຢູ່ໃນເຄື່ອງມືຂອງພວກເຂົາ, ຢູ່ໜ້າທີ 7.

## ແບບຟອມການຕິດຕາມຕົນເອງ

ແບບຟອມການຕິດຕາມຕົນເອງ ແມ່ນລວມຢູ່ໃນຕອນຕົ້ນຂອງເຄື່ອງມື. ຜູ້ໃຫຍ່ ທີ່ເປັນຜູ້ອຳນວຍຄວາມສະດວກ ຄວນຕື່ມແບບຟອມດັ່ງກ່າວໃຫ້ສຳເລັດ ຫຼັງຈາກແຕ່ລະບົດຮຽນ ແລະ ຮັກສາມັນໄວ້ຢູ່ໃນກັບທີ່ໃສ່ລັອກໄວ້ ຮວມກັບປຶ້ມບັນທຶກປະຈຳວັນ ແລະ ໃບເຊັນເຂົ້າ.

ແບບຟອມການຕິດຕາມຕົນເອງ ອະນຸຍາດໃຫ້ ຜູ້ອຳນວຍຄວາມສະດວກ SNYC ສະທ້ອນຄືນ ກ່ຽວກັບສິ່ງທີ່ໄດ້ເກີດຂຶ້ນຢູ່ໃນບົດຮຽນ ແລະ ສິ່ງທີ່ເສີມສ້າງຕໍ່ຈາກຄວາມເຂັ້ມແຂງ ຫຼືວ່າ ດັດປັບຍ້ອນຜົນຂອງສິ່ງທ້າທາຍ. ຜູ້ອຳນວຍຄວາມສະດວກ ຖືກຊຸກຍູ້ໃຫ້ຊື່ສັດຈິງໃຈ. ມັນບໍ່ແມ່ນການສອບເສັງ; ມັນແມ່ນເຄື່ອງມື ທີ່ຜູ້ອຳນວຍຄວາມສະດວກ SNYC ສາມາດນຳໃຊ້ເພື່ອປັບປຸງ. ຖ້ານຳໃຊ້ໄດ້ດີ, ມັນສາມາດເຮັດໃຫ້ ຊີວິດຂອງຜູ້ອຳນວຍຄວາມສະດວກ SNYC ງ່າຍຂຶ້ນ ດ້ວຍການຊ່ວຍເຮັດໃຫ້ ສະໂນສອນ ແລ່ນຄ່ອງແຄ້ວຂຶ້ນກວ່າເກົ່າ. ມັນຍັງເຮັດໃຫ້ຜູ້ອຳນວຍຄວາມສະດວກ ເກັບຮັກສາ ການບັນທຶກກ່ຽວກັບບັນຫາທີ່ໄດ້ປະເຊີນ ໃນການສອນກ່ຽວກັບເຄື່ອງມື ເພື່ອວ່າ ພວກເຂົາຈະໄດ້ແລກປ່ຽນແບ່ງປັນມັນກັບສະມາຊິກພະນັກງານຂອງອົງການສຸພະນິມິດ. ຖາມບັນດາຜູ້ເຂົ້າຮ່ວມວ່າ:

- ເຈົ້າຄິດວ່າບັນດາຄຳຖາມເຫຼົ່ານີ້ ຈະຊ່ວຍໃນການປັບປຸງ SNYC ບໍ່?
- ອຸປະສັກອັນໃດທີ່ອາດຈະມີ ໃນການນຳໃຊ້ ແບບຟອມເຫຼົ່ານີ້?
- ເຈົ້າຈະຂ້າມຜ່ານອຸປະສັກເຫຼົ່ານີ້ໄດ້ແນວໃດ?
- ເຈົ້າຄິດວ່າເລື້ອຍປານ ໃດ ທີ່ຈະເປັນໄປໄດ້ ສຳລັບການຕື່ມແບບຟອມດັ່ງກ່າວນີ້?

## ການຄຸ້ມຄອງຊີ້ນຳ

ຜູ້ໃຫຍ່ ທີ່ເປັນຜູ້ອຳນວຍຄວາມສະດວກ SNYC ເຮັດວຽກໜັກຫຼາຍ ໃນການດຳເນີນ SNYC ແລະ ເຄື່ອງມືດັ່ງກ່າວນີ້ ອາດຈະສະເໜີສິ່ງທ້າທາຍພິເສດ ສຳລັບຜູ້ອຳນວຍຄວາມສະດວກ SNYC. ອະທິບາຍວ່າພະນັກງານອົງການສຸພະນິມິດ ຈະສະໜອງການຄຸ້ມຄອງຊີ້ນຳ ໃຫ້ແກ່ຜູ້ອຳນວຍຄວາມສະດວກ SNYC. ພະນັກງານອົງການສຸພະນິມິດ ຈະເອົາເບີໂທລະສັບຂອງພວກເຂົາໃຫ້ ຜູ້ອຳນວຍຄວາມສະດວກ SNYC ແລະ ຊຸກຍູ້ໃຫ້ພວກເຂົາໂທຫາ ຖ້າຫາກພວກເຂົາພົບກັບບັນຫາ ຫຼື ມີຄຳຖາມ. ພວກເຂົາກໍຈະໂທຫາ ຜູ້ອຳນວຍຄວາມສະດວກສອງຄັ້ງຕໍ່ອາທິດ ເພື່ອສົນທະນາກ່ຽວກັບຄວາມຄືບໜ້າ ແລະ ບັນຫາ. ພະນັກງານ ອົງການສຸພະນິມິດກໍ່ຈະສ້າງຕາຕະລາງກອງປະຊຸມ ກັບຜູ້ອຳນວຍຄວາມສະດວກ SNYC ສຳລັບທຸກໆ ສອງເດືອນ ເພື່ອສະໜອງການຄຸ້ມຄອງຊີ້ນຳ ແລະ ການສະໜັບສະໜູນຊ່ວຍເຫຼືອ.

## ມື້ປະເມີນ

ພະນັກງານອົງການສຸພະນິມິດ ຈະນຳພາຈັດກອງປະຊຸມໜຶ່ງມື້ ເພື່ອດຳເນີນການປະເມີນແບບມີສ່ວນຮ່ວມແບບເປັນມິດກັບໄວໜຸ່ມ ໃນຕອນທ້າຍຂອງເຄື່ອງມື.

ພະນັກງານອົງການສຸພະນິມິດ ຈະສະໜອງເຄື່ອງມືການປະເມີນແບບມີສ່ວນຮ່ວມທີ່ເໝາະສົມ ແລະ ເປັນມິດກັບໄວໜຸ່ມ ເພື່ອນຳໃຊ້ໃນມື້ ປະເມີນ.

## ບັນດາຜູ້ມີສ່ວນຮ່ວມ

ບັນດາບຸກຄົນຕໍ່ໄປນີ້ ຄວນຖືກເຊີນ:

- ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກ
- ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກ
- ໄວໜຸ່ມທີ່ເປັນຜູ້ເຂົ້າຮ່ວມ SNYC

ບຸກຄົນເຫຼົ່ານີ້ ຄວນປະຊຸມ ເປັນກຸ່ມແຍກກັນຕ່າງຫາກ ເພື່ອປະເມີນ SNYC ແລະ ເຄື່ອງມື.

### ໄວໜຸ່ມທີ່ເປັນຜູ້ເຂົ້າຮ່ວມ ແລະ ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກ SNYC

ເຄື່ອງມືສຳລັບໄວໜຸ່ມ ປະເມີນຄວາມຮູ້ທີ່ເພີ່ມຂຶ້ນກ່ຽວກັບ:

- ການຄ້າມະນຸດ
- ການຫຼອກລວງທົ່ວໄປ ຂອງຜູ້ຄ້າມະນຸດ
- ກົດໝາຍການຄ້າມະນຸດ ແລະ ສິດທິ
- ການຈຳແນກທາງເພດ ແລະ ການຄ້າມະນຸດ
- ຄວາມອັນຕະລາຍ ຂອງ ສິ່ງເສບຕິດ ແລະ ເຫຼົ້າ ແລະ ການຄ້າມະນຸດ
- ການສື່ສານແບບ ກົງໄປກົງມາ
- ການຟັງທີ່ດີ
- ການຈັດການກັບ ຄວາມຮູ້ສຶກດ້ານຈິດໃຈທີ່ຮຸນແຮງ
- ການເຮັດການຕັດສິນໃຈທີ່ດີ
- ບັນດາເອກະສານ ແລະ ຂໍ້ມູນ ທີ່ຕ້ອງມີ ຖ້າເຈົ້າວ່າເຈົ້າວາງແຜນຈະເຄື່ອນຍ້າຍ
- ຈະເຮັດແນວໃດໃຫ້ມີຄວາມປອດໄພໃນເວລາເດີນທາງ
- ຈະເຮັດແນວໃດໃຫ້ມີຄວາມປອດໄພ ເມື່ອໄປຮອດ
- ຈະເຮັດແນວໃດ ຖ້າເຈົ້າຖືກຄ້າມະນຸດ.

ເຄື່ອງມືສຳລັບໄວໜຸ່ມ ຈະປະເມີນ **ການປ່ຽນແປງ ການປະພຶດ ແລະ ພຶດຕິກຳ** ຂອງໄວໜຸ່ມ, ໂດຍສະເພາະແມ່ນ:

- ໄວໜຸ່ມວາງແຜນ ເພື່ອເຄື່ອນຍ້າຍຊ້າລົງຫຼືບໍ່
- ໄວໜຸ່ມຈະໃຊ້ຂໍ້ມູນຢູ່ໃນເຄື່ອງມື ຫຼືບໍ່ (ເຊັ່ນ ບັນດາລາຍການກວດກາ) ເພື່ອວາງແຜນສຳລັບການເຄື່ອນຍ້າຍແບບປອດໄພ – ຍ້ອນຫຍັງຈຶ່ງໃຊ້ ຫຼື ຍ້ອນຫຍັງຈຶ່ງບໍ່ໃຊ້?
- ໄວໜຸ່ມ ຄິດວ່າພວກເຂົາໄດ້ເພີ່ມທັກສະ ຍ້ອນ SNYC ຫຼື ບໍ່
- ຜົນກະທົບທາງບວກ ແລະ ທາງລົບ ຂອງ SNYC ທີ່ມີຕໍ່ ຊີວິດຂອງໄວໜຸ່ມ.

### ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກ SNYC

ເຄື່ອງມືສຳລັບຜູ້ໃຫຍ່ ທີ່ເປັນຜູ້ອຳນວຍຄວາມສະດວກຈະ:

- ລະບຸຂົງເຂດ ຂອງຄວາມສຳເລັດຂອງ SNYC
- ລະບຸ ສິ່ງທ້າທາຍທີ່ SNYC ປະເຊີນໜ້າ ແລະ ວິທີ ທີ່ອາດຈະຂ້າມຜ່ານສິ່ງເຫຼົ່ານີ້
- ປະເມີນ ຄຸນນະພາບ ຂອງການອຳນວຍຄວາມສະດວກ ໃນດ້ານທັກສະການສອນ ແລະ ຄວາມຮູ້.

ສຸດທ້າຍ, ທັງຜູ້ອຳນວຍຄວາມສະດວກ ແລະ ໄວໜຸ່ມຄວນປະກອບສ່ວນໃສ່ ການປະເມີນ ການດຳເນີນງານຂອງ SNYC, ເຊິ່ງປະກອບດ້ວຍ:

- ລະດັບການເຂົ້າຮ່ວມ
- ປັດໃຈທີ່ກະທົບຕໍ່ລະດັບການເຂົ້າຮ່ວມ
- ໄວໜຸ່ມມີຄວາມມ່ວນຊື່ນກັບສະໂມສອນບໍ່ ແລະ ຖ້າບໍ່ມ່ວນ, ຍ້ອນຫຍັງ
- SNYC ກວມເອົາທຸກພາກສ່ວນບໍ່
- ຄຸນນະພາບຂອງການອຳນວຍຄວາມສະດວກ
- ຂອບເຂດຂອງຜົນສຳເລັດຂອງ SNYC
- ສິ່ງທ້າທາຍທີ່ SNYC ປະເຊີນໜ້າ.

**ວິທີວິທະຍາ**

ເຄື່ອງມື ທີ່ໃຊ້ກັບທັງ ຜູ້ໃຫຍ່ ແລະ ໄວໜຸ່ມ ຈະເປັນແບບມີສ່ວນຮ່ວມ; ເຊິ່ງກໍ່ຄື, ເຄື່ອງມືຈະຊຸກຍູ້ໃຫ້ບັນດາຜູ້ຄົນ ສະເໜີທາງເລືອກ ແລະ ຄວາມຄິດ, ບໍ່ແມ່ນພຽງແຕ່ຄວາມເປັນຈິງ.

ເຄື່ອງມື ທີ່ໃຊ້ກັບ ໄວໜຸ່ມ ແມ່ນເປັນມິດກັບເດັກນ້ອຍ (ເຊິ່ງນໍາໃຊ້ ກິດຈະກໍາທີ່ໄວໜຸ່ມມັກ ເຊັ່ນ: ການແຕ້ມຮູບເພື່ອສະແດງຄວາມຄິດ).

ພະນັກງານອົງການສຸພະນິມິດ ຈະຮວມເອົາຜົນຂອງການປະເມີນເຂົ້າໃນການວາງແຜນໃນອະນາຄົດ ສໍາລັບ SNYC ແລະ ຈະດັດປັບເຄື່ອງມືສໍາລັບການນໍາໃຊ້ໃນອະນາຄົດ.

## ກິດຈະກໍາ: ການສະທ້ອນສ່ວນຕົວ ຕໍ່ການປ່ຽນແປງພຶດຕິກໍາ

ບອກໃຫ້ຜູ້ເຂົ້າຮ່ວມເອົາປື້ມບັນທຶກປະຈໍາວັນຂອງພວກເຂົາອອກມາ. ບອກໃຫ້ຜູ້ເຂົ້າຮ່ວມ ຂຽນ ຫຼື ແຕ້ມໃສ່ປື້ມບັນທຶກຂອງພວກເຂົາ ກ່ຽວກັບເວລາທີ່ພວກເຂົາໄດ້ປ່ຽນແປງແນວຄິດຂອງພວກເຂົາກ່ຽວກັບ ບາງສິ່ງ ຫຼື ໄດ້ປ່ຽນແປງພຶດຕິກໍາ (ຕົວຢ່າງເຊັ່ນ: ເວລາພວກເຂົາເຊົາສູບຢາ, ເລີ່ມແຕ່ງຕົວຄືໄວລຸ້ນ, ເລີ່ມຮຽນພາສາອັງກິດ, ຕັດສິນໃຈຮຽນຂັບລົດ, ຕັດສິນໃຈເຮັດວຽກກັບໄວໜຸ່ມທີ່ຢູ່ໃນພາວະສ່ຽງ).

ບອກພວກເຂົາໃຫ້ພິຈາລະນາວ່າ ແມ່ນຫຍັງທີ່ມີອິດທິພົນຕໍ່ການປ່ຽນແປງພຶດຕິກໍາດັ່ງກ່າວ. ຖາມວ່າ 'ມັນແມ່ນຄອບຄົວ, ໝູ່ຄູ່, ຄວາມຮູ້ໃໝ່, ສະພາບເງື່ອນໄຂການດໍາລົງຊີວິດ, ຄວາມຢ້ານ, ຄວາມປາດຖະໜາທີ່ແຮງກ້າ, ຄວາມຫວັງ ຫຼື ສິ່ງອື່ນໆທັງໝົດບໍ່?' ພວກເຂົາຈະມີເວລາປະມານ 10 ນາທີເພື່ອຂຽນ.

ຕໍ່ໄປ, ບອກພວກເຂົາ ແບ່ງເປັນກຸ່ມ ຫົກ ຫາ ແປດຄົນ. ບອກແຕ່ລະກຸ່ມໃຫ້ເຮັດ ບັນຊີລາຍຊື່ ສອງລາຍການຄື:

- ບັນດາປັດໃຈພາຍໃນ ທີ່ ເຮັດໃຫ້ຜູ້ຄົນປ່ຽນແປງພຶດຕິກໍາ
- ບັນດາປັດໃຈພາຍນອກ ທີ່ ເຮັດໃຫ້ຜູ້ຄົນປ່ຽນແປງພຶດຕິກໍາ.

ຫຼັງຈາກນັ້ນ ບອກພວກເຂົາໃຫ້ພິຈາລະນາ:

- ການປ່ຽນແປງພຶດຕິກໍາ ໂດຍປົກກະຕິແລ້ວ ແມ່ນສາຍເຫດມາຈາກອິດທິພົນອັນດຽວ ບໍ່ຫຼື ຈາກອິດທິພົນຫຼາຍໆຢ່າງ?
- ທັດສະນະໃດ ຢູ່ໃນບັນຊີລາຍການ ທີ່ຜູ້ອໍານວຍຄວາມສະດວກຂອງ SNYC ສາມາດໃຊ້ໄດ້?

ບອກບັນດາກຸ່ມ ໃຫ້ສະເໜີຄໍາຕອບຂອງພວກເຂົາ. ເຕືອນບັນດາຜູ້ເຂົ້າຮ່ວມວ່າ ຖ້າຫາກພວກເຂົາຄິດວ່າສາຍເຫດໃດໜຶ່ງຈາກບັນຊີລາຍການດັ່ງກ່າວນີ້ ສາມາດມີປະໂຫຍດໃຫ້ແກ່ວຽກຂອງພວກເຂົາ, ພວກເຂົາຄວນເຮັດ ບັນທຶກໃສ່ພາກດັ່ງກ່າວໃນທ້າຍຂອງເຄື່ອງມືຂອງພວກເຂົາສໍາລັບສິ່ງດັ່ງກ່າວນີ້.

## ສະຫຼຸບສັງລວມກ່ຽວກັບບົດ

- ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກ ຂອງ SNYC ຄວນຕື່ມແບບຟອມ ການຕິດຕາມຕົນເອງ ໃຫ້ສຳເລັດຫຼັງຈາກແຕ່ລະບົດຮຽນ ແລະ ຮັກສາມັນໄວ້ ຢູ່ໃນກັບທີ່ໃສ່ລັອກໄວ້ ຮວມກັບປຶ້ມບັນທຶກປະຈຳວັນ ແລະ ໃບເຊັນເຂົ້າ
- ພະນັກງານອົງການສຸພະນິມິດ ຈະສະໜອງການຄຸ້ມຄອງຊີ້ນຳ ໃຫ້ແກ່ຜູ້ອຳນວຍຄວາມສະດວກSNYC, ຊຸກຍູ້ໃຫ້ພວກເຂົາໂທຫາ ຖ້າຫາກພວກເຂົາພົບກັບບັນຫາ ແລະ ປະຊຸມ ກັບຜູ້ອຳນວຍຄວາມສະດວກ SNYC ທຸກໆ ສອງເດືອນ
- ພະນັກງານອົງການສຸພະນິມິດ ຈະນຳພາຈັດກອງປະຊຸມການປະເມີນ ໜຶ່ງມື້ ໃນຕອນທ້າຍຂອງເຄື່ອງມື ສຳລັບ ຜູ້ອຳນວຍຄວາມສະດວກ SNYC ແລະ ໄວໜຸ່ມ
- ໜ່ວຍງານ ຕິດຕາມ ແລະ ປະເມີນ ຂອງອົງການສຸພະນິມິດ ຈະສະໜອງ ເຄື່ອງມືທີ່ໄດ້ອອກແບບສຳລັບ ນຳໃຊ້ໃນກອງປະຊຸມເພື່ອປະເມີນ:
    - » ຄວາມຮູ້
    - » ການປ່ຽນແປງພຶດຕິກຳ
    - » ການດຳເນີນງານຂອງ SNYC
- ເຄື່ອງມືການປະເມີນ ຕ້ອງເປັນແບບມີສ່ວນຮ່ວມ ແລະ ເປັນມິດກັບເດັກ